# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ

**ສາລະບານ**

*ໜ້າ*


| | |
|---|---|
| ຂໍ້ມູນທົ່ວໄປ | 1 - 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 |
| ໃບລາຍງານຜົນການດຳເນີນງານນອກການທຸລະກິດ | 7 |
| ໃບລາຍງານຖານະການເງິນ | 8 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 9 |
| ໃບລາຍງານກະແສເງິນສົດ | 10 - 11 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 12 - 81 |

# ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ, ສາຂານະຄອນຫຼວງວຽງຈັນ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ, ເຊິ່ງເປັນທະນາຄານທີ່ໄດ້ຈົດທະບຽນໃນ ສາທາລະນະລັດ ປະຊາຊົນຈີນ.

ສາຂາໄດ້ເລີ່ມດໍາເນີນກິດຈະການ ວັນທີ 28 ພະຈິກ 2011 ພາຍໃຕ້ໃບອະນຸຍາດລົງທຶນເລກທີ 180-11/MPI3 ລົງວັນທີ 02 ສິງຫາ 2011. ສາຂາໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ (ທຫລ) ເພື່ອດໍາເນີນການເປັນທະນາຄານພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານເລກທີ 16/ທຫລ ລົງວັນທີ 18 ພະຈິກ 2011.

ສາຂາໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ (ທຫລ) ເພື່ອດໍາເນີນການເປັນທະນາຄານພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານເລກທີ 18/ທຫລ ລົງວັນທີ 08 ພຶດສະພາ 2015 ແລະ ໄດ້ປັບປຸງໃບອະນຸຍາດດໍາເນີນການຂອງທະນາຄານທຸລະກິດໃນເດືອນ ມີນາ 2019.

ກະຊວງອຸດສາຫະກໍາ ແລະ ການຄ້າໄດ້ອອກໃບອະນຸຍາດເລກທີ 3301/ຈທວ ລົງວັນທີ 30 ສິງຫາ 2024, ເນື່ອງຈາກສາຂາໄດ້ປ່ຽນຜູ້ຈັດການສາຂາຄົນໃໝ່.

ວັນທີ 30 ສິງຫາ 2024, ສາຂາໄດ້ຮັບໃບອະນຸຍາດສ້າງຕັ້ງທະນາຄານສະບັບໃໝ່ລ່າສຸດເລກທີ 30/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ (ທຫລ).

ທຶນຈົດທະບຽນເບື້ອງຕົ້ນຂອງສາຂາແມ່ນ 300,000,000,000 ກີບ. ທຶນຈົດທະບຽນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2025 ແມ່ນ 300,000,000,000 ກີບ (31 ທັນວາ 2024: 300,000,000,000 ກີບ).

ກິດຈະກໍາຫຼັກຂອງສາຂາແມ່ນການໃຫ້ບໍລິການດ້ານການເງິນ, ການຄ້າ ແລະ ບໍລິການທີ່ອໍານວຍຄວາມສະດວກດ້ານທຸລະກໍາທະນາຄານທີ່ກ່ຽວຂ້ອງໃຫ້ແກ່ນັກລົງທຶນສັນຊາດລາວ, ຈີນ ແລະ ໄທ. ນອກນັ້ນ ຍັງໃຫ້ການບໍລິການທີ່ອໍານວຍຄວາມສະດວກດ້ານທຸລະກໍາທະນາຄານໃຫ້ແກ່ບຸກຄົນທົ່ວໄປອີກດ້ວຍ.

ສາຂາຕັ້ງຢູ່ບ້ານ ສີບຸນເຮືອງ, ໜ່ວຍ 12, ຖະໜົນອາຊຽນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຄະນະບໍລິຫານ**

ສະມາຊິກຄະນະບໍລິຫານພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕໍາແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Shen Xueqin | ຜູ້ຈັດການສາຂາ | ແຕ່ງຕັ້ງວັນທີ 05 ມິຖຸນາ 2024 |
| ທ່ານ Joxiong Bouasinengma | ຮອງຜູ້ຈັດການສາຂາ | ແຕ່ງຕັ້ງວັນທີ 24 ເມສາ 2015 |
| ທ່ານ Ruan Jing | ຮອງຜູ້ຈັດການສາຂາ | ແຕ່ງຕັ້ງວັນທີ 20 ກຸມພາ 2018 |
| ທ່ານນາງ Zhao Qiuran | ຮອງຜູ້ຈັດການສາຂາ | ແຕ່ງຕັ້ງວັນທີ 01 ເມສາ 2022 |

**ຕາງໜ້າທາງກົດໝາຍ**

ຕາງໜ້າທາງດ້ານກົດໝາຍຂອງສາຂາ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແລະ ນະວັນທີຂອງເອກະສານລາຍງານສະບັບນີ້ ແມ່ນ ທ່ານ Shen Xueqin – ຜູ້ຈັດການສາຂາ.

**ນັກກວດສອບ**

ນັກກວດສອບບັນຊີຂອງສາຂາ ແມ່ນບໍລິສັດ ເອີນ ແອນ ຢັງ ລາວ ຈໍາກັດ.

EY
Building a better
working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 12919459/69445200-IFRS

## ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຄະນະບໍລິຫານຂອງ ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ, ສາຂານະຄອນຫຼວງວຽງຈັນ ທີ່ນັບຖື**

### *ຄໍາເຫັນ*

ພວກຂ້າພະເຈົ້າ ໄດ້ດໍາເນີນການກວດສອບເອກະສານລາຍງານທາງການເງິນຂອງ ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2025, ໃບລາຍງານຜົນການດໍາເນີນງານ, ໃບລາຍງານຜົນການດໍາເນີນງານນອກການທຸລະກິດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ແລະ ໃບລາຍງານກະແສເງິນສົດ ສໍາລັບປີທີ່ສິ້ນສຸດວັນທີ່ດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ປະກອບດ້ວຍບົດສະຫຼູບນະໂຍບາຍການບັນຊີທີ່ສໍາຄັນ.

ໃນຄໍາເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານທາງການເງິນໄດ້ຖືກນໍາສະເໜີຢ່າງຍຸຕິທໍາ, ຖືກຕ້ອງຕາມຄວາມເປັນຈິງ, ສະແດງຖານະການເງິນຂອງສາຂານະວັນທີ 31 ທັນວາ 2025, ແລະ ຜົນການດໍາເນີນງານ ແລະ ກະແສເງິນສົດສໍາລັບປີທີ່ສິ້ນສຸດວັນທີດັ່ງກ່າວໂດຍສອດຄ່ອງກັບມາດຕະຖານການບັນຊີ IFRS ທີ່ອອກໂດຍຄະນະມາດຕະຖານການບັນຊີສາກົນ (IASB).

### *ພື້ນຖານໃນການອອກຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບສາກົນ (IAS). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກໍານົດໄວ້ພາຍໃຕ້ບັນດາມາດຕະຖານດັ່ງກ່າວ ແມ່ນໄດ້ຖືກອະທິບາຍເພີ່ມເຕີມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສໍາລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນສາກົນ (ລວມທັງມາດຕະຖານຄວາມເປັນເອກະລາດສາກົນ) (IESBA) ທີ່ນໍາໃຊ້ຕໍ່ກັບການກວດສອບເອກະສານລາຍງານການເງິນຂອງວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ, ພ້ອມກັບບັນດາຂໍ້ກໍານົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະໃນ ສປປ ລາວ. ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບຂໍ້ກໍານົດ ແລະ ກົດຈັນຍາບັນທາງບັນຊີສໍາລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນສາກົນ IESBA. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາ ແລະ ຜູ້ທີ່ມີອໍານາດໃນການຄວບຄຸມຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນໍາສະເໜີຢ່າງຍຸຕິທໍາຂອງເອກະສານລາຍງານການເງິນໂດຍສອດຄ່ອງກັບມາດຕະຖານບັນຊີ IFRS ທີ່ອອກໂດຍຄະນະມາດຕະຖານການບັນຊີສາກົນ (IASB) ແລະ ສາລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ມີຄວາມຈໍາເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ, ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດໍາເນີນທຸລະກິດ, ລວມທັງເປີດເຜີຍບັນຫາຕ່າງໆທີ່ກ່ຽວຂ້ອງກັບແນວສືບເນື່ອງໃນການດໍາເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີແນວອາດສາມາດໃນການດໍາເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຍຸດຕິກິດຈະການ.



A member firm of Ernst & Young Global Limited

EY

Building a better working world

ຜູ້ມີອຳນາດໃນການຄວບຄຸມ ແມ່ນມີຄວາມຮັບຜິດຊອບໃນການກຳກັບດູແລຂະບວນການລາຍງານການເງິນຂອງສາຂາ.

*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບນັ້ນຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ.

ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແລະ ສາມາດພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິດໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.



A member firm of Ernst & Young Global Limited

Building a better working world

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.
- ປະເມີນຜົນການນຳສະເໜີ, ການຈັດການໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນ, ລວມທັງການເປີດເຜີຍຂໍ້ມູນ ແລະ ບັນດາເອກະສານລາຍງານການເງິນແມ່ນການລາຍງານຄືນ ແລະ ກິດຈະກຳທີ່ກ່ຽວຂ້ອງທີ່ສາມາດສະເໜີອອກໄດ້ຢ່າງຖືກຕ້ອງ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກພ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ນະຄອນຫຼວງວຽງຈັນ, ສປປ ລາວ

27 ເມສາ 2026



A member firm of Ernst & Young Global Limited

## ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| | *ບົດອະທິບາຍ ເລກທີ* | *2025 ກີບ* | *2024 ກີບ* |
|---|---|---|---|
| ລາຍຮັບດອກເບ້ຍທີ່ໄດ້ຄິດໄລ່ໂດຍການນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ | 7 | 3,494,305,816,449 | 4,158,461,451,491 |
| ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍການນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ | 8 | (1,668,383,236,823) | (1,964,373,851,878) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | | **1,825,922,579,626** | **2,194,087,599,613** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 9 | 407,317,811,766 | 519,560,390,614 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 9 | (10,180,147,929) | (13,534,724,839) |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | | **397,137,663,837** | **506,025,665,775** |
| ກຳໄລ/(ຂາດທຶນ) ສຸດທິຈາກການຊື້ - ຂາຍເງິນຕາຕ່າງປະເທດ | 10 | (114,018,135,887) | 180,644,725,893 |
| ລາຍຮັບອື່ນໆຈາກການດຳເນີນງານ | | 90,763,737 | 89,503,586 |
| **ລວມຍອດລາຍຮັບ/(ລາຍຈ່າຍ)ຈາກການດຳເນີນງານ** | | **(113,927,372,150)** | **180,734,229,479** |
| ເກັບຄືນ/(ລາຍຈ່າຍ)ຈາກໜີ້ເສຍສິນເຊື່ອ | 11 | 641,161,856,049 | (244,759,746,573) |
| **ລາຍຮັບສຸດທິຈາກການດຳເນີນງານ** | | **2,750,294,727,362** | **2,636,087,748,294** |
| ລາຍຈ່າຍພະນັກງານ | 12 | (152,428,277,266) | (161,564,411,736) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 17,18 | (22,501,988,675) | (22,172,042,882) |
| ລາຍຈ່າຍອື່ນໆໃນການດຳເນີນງານ | 13 | (71,039,906,074) | (66,954,581,007) |
| **ລວມຍອດລາຍຈ່າຍຈາກການດຳເນີນງານ** | | **(245,970,172,015)** | **(250,691,035,625)** |
| ຂາດທຶນສຸດທິຈາກຖານະເງິນຕາທາງການເງິນ | | - | (726,375,874,687) |
| **ກຳໄລກ່ອນເສຍອາກອນ** | | **2,504,324,555,347** | **1,659,020,837,982** |
| ລາຍຈ່າຍອາກອນກຳໄລ | 23.2 | (429,070,335,943) | (555,033,542,240) |
| (ລາຍຈ່າຍ)/ລາຍໄດ້ອາກອນລໍຖ້າຊຳລະສະສາງ | 23.3 | (30,780,851,765) | 123,324,522,072 |
| **ກຳໄລພາຍໃນປີ** | | **2,044,473,367,639** | **1,227,311,817,814** |

ກະກຽມໂດຍ:

ທ່ານ Xie Junjun
ຫົວໜ້າພະແນກການເງິນ ແລະ ບັນຊີ

ກວດຄືນໂດຍ:

ທ່ານ Shen Xueqin
ຜູ້ຈັດການສາຂາ

SHEN XUE QIN
沈学勤

ນະຄອນຫຼວງວຽງຈັນ, ສປປ ລາວ

27 ເມສາ 2026

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| | *ບົດອະທິບາຍ ເລກທີ* | 2025 *ກີບ* | 2024 *ກີບ* |
|---|---|---|---|
| **ກຳໄລພາຍໃນປີ** | | **2,044,473,367,639** | **1,227,311,817,814** |
| **ລາຍຮັບອື່ນໆນອກການທຸລະກິດ, ຫຼັງຫັກອາກອນ** | | **-** | **-** |
| **ລວມຍອດຜົນໄດ້ຮັບນອກການທຸລະກິດພາຍໃນປີ, ຫຼັງຫັກອາກອນ** | | **2,044,473,367,639** | **1,227,311,817,814** |

ກະກຽມໂດຍ:

ທ່ານ Xie Junjun
ຫົວໜ້າພະແນກການເງິນ ແລະ ບັນຊີ

ກວດກືນໂດຍ:

ທ່ານ Shen Xueqin
ຜູ້ຈັດການສາຂາ

SHEN XUE QIN
沈学勤

ນະຄອນຫຼວງວຽງຈັນ, ສປປ ລາວ

27 ເມສາ 2026

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2025

| | ບົດອະທິບາຍ ເລກທີ | 31/12/2025 ກີບ | 31/12/2024 ກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ | 14 | 5,697,079,652,450 | 3,186,047,795,917 |
| ເງິນຝາກຢູ່ທະນາຄານອື່ນ | 15 | 58,719,701,078,199 | 59,069,335,398,566 |
| ເງິນກູ້ໃຫ້ແກ່ລູກຄ້າ | 16 | 6,818,608,433,828 | 5,394,195,821,472 |
| ຊັບສິນບັດຄົງທີ່, ອຸປະກອນ ແລະ ສິດນຳໃຊ້ຊັບສິນ | 17 | 248,208,506,701 | 262,706,497,543 |
| ຊັບສິນບໍ່ມີຕົວຕົນ | 18 | 1,574,928,625 | 2,602,191,873 |
| ການລົງທຶນທາງການເງິນ - ຖືຄອງຈົນຄົບກຳນົດ | 19 | 6,026,712,069,747 | 6,767,154,072,294 |
| ຊັບສິນອາກອນລໍຖ້າຊຳລະສະສາງ | 23.3 | 530,917,663,797 | 609,605,481,403 |
| ຊັບສິນອື່ນໆ | 20 | 201,953,791,217 | 195,972,821,311 |
| **ລວມຊັບສິນ** | | **78,244,756,124,564** | **75,487,620,080,379** |
| **ໜີ້ສິນ** | | | |
| ເງິນຝາກຈາກທະນາຄານອື່ນ | 21 | 44,644,467,520,627 | 48,171,976,005,263 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 22 | 26,746,753,126,746 | 21,537,649,148,606 |
| ໜີ້ຕ້ອງສົ່ງທາງອາກອນ | 23.1 | 216,254,812,039 | 386,762,686,167 |
| ໜີ້ສິນອາກອນລໍຖ້າຊຳລະສະສາງ | 23.3 | 2,067,114,370 | 49,974,080,210 |
| ໜີ້ສິນອື່ນໆ | 24 | 488,571,449,211 | 384,007,458,987 |
| **ລວມໜີ້ສິນ** | | **72,098,114,022,993** | **70,530,369,379,233** |
| **ທຶນ** | | | |
| ທຶນຈົດທະບຽນທີ່ໄດ້ຖອກແລ້ວ | 25 | 300,000,000,000 | 300,000,000,000 |
| ດັດແກ້ທຶນຈົດທະບຽນທີ່ໄດ້ຖອກແລ້ວທີ່ຕິດພັນກັບ IAS 29 | 25 | 379,022,213,960 | 379,022,213,960 |
| ຄັງສະສົມຕາມລະບຽບການ | | 340,700,637,411 | 340,700,637,411 |
| ກຳໄລສະສົມ | | 5,126,919,250,201 | 3,937,527,849,775 |
| **ລວມທຶນ** | | **6,146,642,101,572** | **4,957,250,701,146** |
| **ລວມໜີ້ສິນ ແລະ ທຶນ** | | **78,244,756,124,565** | **75,487,620,080,379** |

ກະກຽມໂດຍ:

ທ່ານ Xie Junjun
ຫົວໜ້າພະແນກການເງິນ ແລະ ບັນຊີ

ກວດກາໂດຍ:

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ໄອຊີບີຊີ) Industrial and Commercial Bank of China Limited Vientiane Branch (ICBC)

ທ່ານ Shen Xueqin
ຜູ້ຈັດການສາຂາ

SHEN XUE QIN
沈学勤

ນະຄອນຫຼວງວຽງຈັນ, ສປປ ລາວ

27 ເມສາ 2026

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| | ທຶນຈົດທະບຽນຖອກແລ້ວ<br>ກີບ | ດັດແກ້ທຶນຈົດທະບຽນທີ່ໄດ້ຖອກແລ້ວທີ່ຕິດພັນກັບ IAS 29<br>ກີບ | ຄັງສະສົມຕາມລະບຽບການ<br>ກີບ | ກຳໄລສະສົມ<br>ກີບ | ລວມ<br>ກີບ |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2024** | **300,000,000,000** | **379,022,213,960** | **340,700,637,411** | **3,357,166,124,384** | **4,376,888,975,755** |
| ກຳໄລສຸດທິພາຍໃນປີ | - | - | - | 1,227,311,817,814 | 1,227,311,817,814 |
| ໂອນກຳໄລໃຫ້ສຳນັກງານໃຫຍ່ | - | - | - | (646,950,092,423) | (646,950,092,423) |
| **ຍອດເຫຼືອນະວັນທີ 31 ທັນວາ 2024** | **300,000,000,000** | **379,022,213,960** | **340,700,637,411** | **3,937,527,849,775** | **4,957,250,701,146** |
| **ຍອດເຫຼືອນະວັນທີ 1 ມັງກອນ 2025** | **300,000,000,000** | **379,022,213,960** | **340,700,637,411** | **3,937,527,849,775** | **4,957,250,701,146** |
| ກຳໄລສຸດທິພາຍໃນປີ | - | - | - | 2,044,473,367,639 | 2,044,473,367,639 |
| ໂອນກຳໄລໃຫ້ສຳນັກງານໃຫຍ່ | - | - | - | (855,081,967,213) | (855,081,967,213) |
| **ຍອດເຫຼືອນະວັນທີ 31 ທັນວາ 2025** | **300,000,000,000** | **379,022,213,960** | **340,700,637,411** | **5,126,919,250,201** | **6,146,642,101,572** |

ກະກຽມໂດຍ:

ທ່ານ Xie Junjun
ຫົວໜ້າພະແນກການເງິນ ແລະ ບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

27 ເມສາ 2026

ກວດກາໂດຍ:

ທ່ານ Shen Xueqin
ຜູ້ຈັດການສາຂາ

SHEN XUE QIN
沈学勤

## ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| | *ບົດອະທິບາຍເລກທີ* | 2025 *ກີບ* | 2024 *ກີບ* |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລສຸດທິກ່ອນອາກອນ** | | **2,504,324,555,347** | **1,659,020,837,982** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 17,18 | 22,501,988,675 | 22,172,042,882 |
| (ເກັບຄືນ)/ລາຍຈ່າຍໜີ້ເສຍ | 11 | (641,161,856,049) | 244,759,746,573 |
| ລາຍຮັບດອກເບ້ຍ | | (3,017,067,509,362) | (3,429,587,634,260) |
| ລາຍຈ່າຍດອກເບ້ຍ | | 578,276,868,194 | 1,880,969,219,802 |
| ຜົນກະທົບທີ່ຕິດພັນກັບ IAS 29 | | - | 726,375,874,687 |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນໃນການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | 3,571,627,570,394 | (8,158,887,871,877) |
| ເງິນກູ້ໃຫ້ແກ່ລູກຄ້າ | | (1,437,422,557,079) | 5,402,618,803,865 |
| ຊັບສິນອື່ນໆ | | 182,561,907,375 | 559,940,006,239 |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດຳເນີນງານ | | | |
| ເງິນຝາກຈາກທະນາຄານອື່ນ | | (10,527,646,817,747) | 10,032,191,043,029 |
| ໜີ້ຕ້ອງສົ່ງລູກຄ້າ | | 5,207,724,289,256 | 1,388,434,769,409 |
| ໜີ້ສິນອື່ນໆ | | 69,334,688,214 | 126,208,396,064 |
| ອາກອນກຳໄລ ທີ່ໄດ້ຈ່າຍພາຍໃນປີ | 23.2 | (601,515,225,179) | (172,702,378,900) |
| ດອກເບ້ຍທີ່ໄດ້ຮັບ | | 3,340,755,191,333 | 3,595,486,242,435 |
| ດອກເບ້ຍທີ່ຈ່າຍແລ້ວ | | (671,300,001,148) | (925,651,262,383) |
| **ກະແສເງິນສົດສຸດທິ(ນຳໃຊ້)/ຈາກກິດຈະກຳການດຳເນີນງາ** | | **(1,419,006,907,776)** | **12,951,347,835,547** |
| **ກິດຈະກຳຈາກການລົງທຶນ** | | | |
| ຊື້ຊັບສິນບັດ ແລະ ອຸປະກອນ ແລະ ຊັບສິນບັດມີຕົວຕົນ | | (6,976,734,585) | (3,650,105,335) |
| ຊື້ຊັບສິນທີ່ບໍ່ມີຕົວຕົນ | | - | (1,522,655,616) |
| ການລົງທຶນໃນພັນທະບັດ | | (9,474,923,000,000) | (7,725,527,296,246) |
| ຮັບຈາກພັນທະບັດທີ່ຄົບກຳນົດ | | 10,056,026,000,000 | 6,440,180,842,749 |
| ລາຍຮັບດອກເບ້ຍຈາກການລົງທຶນໃນພັນທະບັດ | | (477,238,307,087) | (577,797,209,413) |
| ດອກເບ້ຍທີ່ໄດ້ຮັບຈາກການລົງທຶນໃນພັນທະບັດ | | 602,228,124,497 | 419,628,740,932 |
| **ກະແສເງິນສົດສຸດທິຈາກ/(ນຳໃຊ້)ກິດຈະກຳການລົງທຶນ** | | **699,116,082,825** | **(1,448,687,682,929)** |

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

| | ບົດອະທິບາຍ ເລກທີ | 2025 ກີບ | 2024 ກີບ |
|---|---|---|---|
| **ກິດຈະກຳການເງິນ** | | | |
| ການຖອນເງິນກູ້ຢືມ | | 41,751,739,783,156 | 34,590,849,709,983 |
| ການຊຳລະເງິນກູ້ຢືມ | | (34,590,849,709,983) | (41,620,258,956,823) |
| ລາຍຈ່າຍດອກເບ້ຍ | | 1,090,106,368,629 | 933,725,055,356 |
| ດອກເບ້ຍທີ່ຈ່າຍ | | (1,155,045,952,681) | (997,357,326,878) |
| ໂອນກຳໄລໃຫ້ສຳນັກງານໃຫຍ່ | | (855,081,967,213) | (646,950,092,423) |
| **ກະແສເງິນສົດສຸດທິຈາກ/(ໃຊ້ໃນ)ກິດຈະກຳການເງິນ** | | **6,240,868,521,908** | **(7,739,991,610,785)** |
| **ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **5,520,977,696,957** | **3,762,668,541,833** |
| **ເງິນສົດ ແລະ ທຽບເທົ່າເງິນສົດນະຕົ້ນປີ** | | **32,848,786,456,558** | **33,992,664,177,156** |
| **ຜົນກະທົບຂອງເງິນເຟີ້ຕໍ່ເງິນສົດ ແລະ ທຽບເທົ່າເງິນສົດ** | | **-** | **(4,906,546,262,431)** |
| **ເງິນສົດ ແລະ ທຽບເທົ່າເງິນສົດນະທ້າຍປີ** | **26** | **38,369,764,153,515** | **32,848,786,456,558** |

ກະກຽມໂດຍ:

ທ່ານ Xie Junjun
ຫົວໜ້າພະແນກການເງິນ ແລະ ບັນຊີ

ກວດກາໂດຍ:

ທ່ານ Shen Xueqin
ຜູ້ຈັດການສາຂາ

SHEN XUE QIN
沈学勤

ນະຄອນຫຼວງວຽງຈັນ, ສປປ ລາວ

27 ເມສາ 2026

## 1. ຂໍ້ມູນກ່ຽວກັບທະນາຄານ

*ການສ້າງຕັ້ງ ແລະ ການດຳເນີນງານ*

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ເຊິ່ງເປັນທະນາຄານທີ່ໄດ້ຈົດທະບຽນໃນ ສາທາລະນະລັດ ປະຊາຊົນຈີນ.

ສາຂາໄດ້ເລີ່ມດຳເນີນກິດຈະການ ວັນທີ 28 ພະຈິກ 2011 ພາຍໃຕ້ໃບອະນຸຍາດລົງທຶນເລກທີ 180-11/MPI3 ລົງວັນທີ 02 ສິງຫາ 2011. ສາຂາໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ (ທຫລ) ເພື່ອດຳເນີນການເປັນທະນາຄານພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານເລກທີ 16/ທຫລ ລົງວັນທີ 18 ພະຈິກ 2011.

ສາຂາໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ (ທຫລ) ເພື່ອດຳເນີນການເປັນທະນາຄານພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານເລກທີ 18/ທຫລ ລົງວັນທີ 08 ພຶດສະພາ 2015 ແລະ ໄດ້ປັບປຸງໃບອະນຸຍາດດຳເນີນການຂອງທະນາຄານທຸລະກິດໃນເດືອນ ມິຖຸນາ 2019.

ກະຊວງອຸດສາຫະກຳ ແລະ ການຄ້າໄດ້ອອກໃບອະນຸຍາດເລກທີ 3301/ERO ລົງວັນທີ 30 ສິງຫາ 2024, ເນື່ອງຈາກສາຂາໄດ້ປ່ຽນຜູ້ຈັດການສາຂາຄົນໃໝ່.

ວັນທີ 30 ສິງຫາ 2024, ສາຂາໄດ້ຮັບໃບອະນຸຍາດສ້າງຕັ້ງທະນາຄານສະບັບໃໝ່ລ່າສຸດເລກທີ 30/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ (ທຫລ)

ກິດຈະກຳຫຼັກຂອງສາຂາແມ່ນການໃຫ້ບໍລິການດ້ານການເງິນ, ການຄ້າ ແລະ ບໍລິການທີ່ອຳນວຍຄວາມສະດວກດ້ານທຸລະກຳທະນາຄານທີ່ກ່ຽວຂ້ອງໃຫ້ແກ່ນັກລົງທຶນສັນຊາດລາວ, ຈີນ ແລະ ໄທ. ນອກນັ້ນ ຍັງໃຫ້ການບໍລິການທີ່ອຳນວຍຄວາມສະດວກດ້ານທຸລະກຳທະນາຄານໃຫ້ແກ່ບຸກຄົນທົ່ວໄປອີກດ້ວຍ.

*ທຶນຈົດທະບຽນທີ່ຖອກແລ້ວ*

ທຶນຈົດທະບຽນເບື້ອງຕົ້ນຂອງສາຂາແມ່ນ 300,000,000,000 ກີບ. ທຶນຈົດທະບຽນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2025 ແມ່ນ 300,000,000,000 ກີບ (31 ທັນວາ 2024: 300,000,000,000 ກີບ).

*ທີ່ຕັ້ງ*

ສາຂາຕັ້ງຢູ່ບ້ານ ສີບຸນເຮືອງ, ໜ່ວຍ 12, ຖະໜົນອາຊຽນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂາໃນວັນທີ 31 ທັນວາ 2025 ມີ 93 ຄົນ (31 ທັນວາ 2024: 97 ຄົນ).

## 2. ພື້ນຖານການກະກຽມ

ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມ ບົນພື້ນຖານມູນຄ່າຕົ້ນທຶນເດີມ, ຍົກເວັ້ນທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍອື່ນໆ.

ສາຂາດຳເນີນການບັນທຶກບັນຊີ ເປັນສະກຸນເງິນກີບ (“ກີບ”) ເຊິ່ງເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງສາຂາ ແລະ ນຳສະເໜີໃນເອກະສານລາຍງານການເງິນເປັນຫົວໜ່ວຍພັນກີບ (“ກີບ”) ເວັ້ນເສຍແຕ່ໄດ້ລະບຸເພີ່ມເຕີມເຊິ່ງຂໍ້ມູນທາງການເງິນທີ່ໄດ້ສະແດງເປັນເງິນກີບ.

ປີການບັນຊີຂອງສາຂາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດ 31 ທັນວາ.

ອີງຕາມແຈ້ງການຂອງ ທຫລ ສະບັບເລກທີ 736/ກຄທສ ລົງວັນທີ 10 ຕຸລາ 2022, ສາຂາໄດ້ຮັບອະນຸຍາດໂດຍທະນາຄານແຫ່ງ ສປປ ລາວ ໃຫ້ນຳສົ່ງສະເພາະເອກະສານລາຍງານການເງິນທີ່ກະກຽມພາຍໃຕ້ມາດຕະຖານບົດລາຍງານການເງິນສາກົນ (“IFRS”)

*ການແກ້ໄຂຂອງເອກະສານລາຍງານການເງິນໃນໄລຍະເວລາທີ່ມີພາວະເງິນເຟີ້ລະດັບສູງສຸດ*

ໃນປີ 2024, ເສດຖະກິດຂອງລາວຖືກຮັບຮູ້ວ່າເປັນເສດຖະກິດທີ່ມີອັດຕາເງິນເຟີ້ສູງ ເນື່ອງຈາກໄດ້ບັນລຸມາດຕະຖານທີ່ກຳນົດໄວ້ໃນ IAS 29 'ການລາຍງານການເງິນໃນເສດຖະກິດທີ່ມີອັດຕາການເງິນເຟີ້ສູງ'. ມາດຕະຖານນີ້ກຳນົດໃຫ້ລາຍງານການເງິນຂອງທະນາຄານທີ່ມີເງິນຕາໃຊ້ການເປັນເງິນຕາຂອງເສດຖະກິດທີ່ມີອັດຕາການເງິນເຟີ້ສູງຕ້ອງລະບຸໃນລາຄາທີ່ສະທ້ອນເຖິງກຳລັງຊື້ໃນຕອນທ້າຍຂອງໄລຍະການລາຍງານ. ນັບແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ, ເສດຖະກິດຂອງປະເທດລາວບໍ່ຖືວ່າເປັນເສດຖະກິດທີ່ມີອັດຕາເງິນເຟີ້ສູງອີກຕໍ່ໄປ. ນອກຈາກນັ້ນ, ດຸນດ່ຽງເປີດຂອງຊັບສິນທີ່ບໍ່ແມ່ນເງິນ, ໜີ້ສິນ ແລະ ຊັບສິນຂອງທະນາຄານ ນະວັນທີ 1 ມັງກອນ 2025 ຖືກນຳສະເໜີໃນລາຄາທີ່ສະທ້ອນເຖິງກຳລັງຊື້ໃນວັນທີ 31 ທັນວາ 2024.

## 3. ຄຳຖະແຫຼງການປະຕິບັດຕາມ

ເອກະສານລາຍງານການເງິນຂອງສາຂາຖືກກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ (“IFRS”) ທີ່ອອກໂດຍ IASB.

## 4. ການນຳສະເໜີເອກະສານລາຍງານການເງິນ

ສາຂາໄດ້ນຳສະເໜີໃບລາຍງານຖານະການເງິນ ໂດຍລຽງລຳດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຖືກລາຍງານເປັນມູນຄ່າລວມ ແລະ ແຍກບັນຊີສະເພາະ ໃນໃບລາຍງານຖານະການເງິນ. ຊັບສິນ ແລະ ໜີ້ສິນທາງການເງິນຈະຖືກນຳມາຫັກລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິໃນເວລາທີ່ບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາກມີຄວາມຕ້ອງການຢາກຫັກລ້າງ ໃນທຸກໆກໍລະນີຂ້າງລຸ່ມນີ້:

- ໃນກໍລະນີຕາມເງື່ອນໄຂປົກກະຕິຂອງທຸລະກິດ
- ໃນກໍລະນີທີ່ທຸລະກິດມີການລະເມີດສັນຍາ
- ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງສາຂາ ແລະ/ຫຼື ຄູ່ຄ້າຂອງຕົນ

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### 5.1 *ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນໄດ້ບັນທຶກເບື້ອງຕົ້ນໂດຍນຳໃຊ້ອັດຕາແລກປ່ຽນທັນທີນະມື້ທີ່ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ເປັນເງິນຕາຕ່າງປະເທດແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຄືນໃນທ້າຍປີ ຕາມອັດຕາແລກປ່ຽນໃນມື້ຂອງບົດລາຍງານ (ລາຍລະອຽດອັດຕາແລກປ່ຽນຂອງເງິນຕາຕ່າງປະເທດທຽບໃສ່ເງິນກີບນະວັນທີ 31 ທັນວາ 2025 ແລະ 31 ທັນວາ 2024 ໄດ້ສະແດງໃນບົດອະທິບາຍເລກທີ 36). ສ່ວນຜິດດ່ຽງທັງໝົດຈາກອັດຕາແລກປ່ຽນເງິນຕາຕ່າງປະເທດຖືກລວມຢູ່ "ກຳໄລ/(ຂາດທຶນ) ສຸດທິຈາກການດຳເນີນທຸລະກຳໃນສະກຸນເງິນຕາຕ່າງປະເທດ" ໃນໃບລາຍງານຜົນການດຳເນີນງານ.

### 5.2 *ການຮັບຮູ້ລາຍຮັບດອກເບ້ຍ*

#### 5.2.1 *ວິທີອັດຕາດອກເບ້ຍທີ່ແທ້ຈິງ*

ພາຍໃຕ້ IFRS 9, ລາຍຮັບດອກເບ້ຍແມ່ນຖືກບັນທຶກໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບການຕີມູນຄ່າຊັບສິນທາງການເງິນຕາມຕົ້ນທຶນຄ່າເສື່ອມ. ເຊັ່ນດຽວກັນກັບລາຍຈ່າຍດອກເບ້ຍກໍຖືກຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບບັນດາທຸກໆໜີ້ສິນທາງການເງິນທີ່ຖືຄອງຕາມຕົ້ນທຶນຄ່າເສື່ອມ. ອັດຕາດອກເບ້ຍທີ່ແທ້ຈິງແມ່ນອັດຕາສ່ວນຫຼຸດມູນຄ່າການຮັບເງິນສົດໃນອະນາຄົດທີ່ຖືກຄາດຄະເນຜ່ານອາຍຸທີ່ຄາດການໄວ້ຂອງຊັບສິນ ຫຼື ໜີ້ສິນທາງການເງິນ ຫຼື ເປັນເວລາທີ່ເໝາະສົມ ເຊິ່ງທີ່ເປັນຊ່ວງໄລຍະເວລາທີ່ສັ້ນກວ່າ ໂດຍຄິດໄລ່ກັບມູນຄ່າທີ່ມີຢູ່ຂອງຊັບສິນທາງການເງິນນັ້ນ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

5.2 *ການຮັບຮູ້ລາຍຮັບດອກເບ້ຍ* (ຕໍ່)

5.2.1 *ວິທີອັດຕາດອກເບ້ຍທີ່ແທ້ຈິງ* (ຕໍ່)

ອັດຕາດອກເບ້ຍທີ່ແທ້ຈິງ (ແລະ ຕົ້ນທຶນຄ່າເສື່ອມຂອງຊັບສິນທາງການເງິນ) ແມ່ນຖືກຄິດໄລ່ໂດຍການພິຈາລະນາເອົາຕົ້ນທຶນໃນການເຮັດທຸລະກຳ ແລະ ທຸກໆສ່ວນຫຼຸດ ຫຼື ສ່ວນເພີ່ມ ໃນການໄດ້ມາເຊິ່ງຊັບສິນທາງການເງິນ ພ້ອມກັນກັບ ຄ່າທຳນຽມ ແລະ ຕົ້ນທຶນຕ່າງໆ ທີ່ເປັນສ່ວນປະກອບລວມເຂົ້າໃນ ອັດຕາດອກເບ້ຍທີ່ແທ້ຈິງ. ສາຂາຮັບຮູ້ລາຍຮັບດອກເບ້ຍທີ່ໄດ້ນຳໃຊ້ອັດຕາຜົນຕອບແທນທີ່ສະແດງໃຫ້ເຫັນເຖິງການຄາດຄະເນທີ່ດີທີ່ສຸດຂອງ ອັດຕາຜົນຕອບແທນຄົງທີ່ຕະຫຼອດອາຍຸ ທີ່ຄາດໄວ້ຂອງເງິນກູ້. ສະນັ້ນ, ການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງຍັງໄດ້ພິຈາລະນາເຖິງຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໄດ້ເຊິ່ງອາດຈະຖືເປັນຄ່າໃຊ້ຈ່າຍໃນຫຼາຍຂັ້ນຂອງອາຍຸທີ່ຄາດການໄວ້ຂອງຊັບສິນທາງການເງິນ ແລະ ລັກສະນະພິເສດອື່ນໆຂອງວົງຈອນຊີວິດຂອງຜະລິດຕະພັນ (ເຊິ່ງລວມທັງ ການຈ່າຍລ່ວງໜ້າ, ດອກເບ້ຍ ແລະ ຄ່າທຳນຽມປັບໃໝ).

ຖ້າຫາກວ່າການຄາດການກະແສເງິນສົດຂອງ ຊັບສິນ ຫຼື ໜີ້ສິນທາງການເງິນທີ່ມີອັດຕາດອກເບ້ຍຄົງທີ່ຖືກປັບປຸງໃໝ່ໂດຍເຫດຜົນທີ່ບໍ່ແມ່ນຍ້ອນຄວາມສ່ຽງທາງດ້ານສິນເຊື່ອ ສະນັ້ນ ສ່ວນປ່ຽນແປງໃນກະແສເງິນສົດຕາມສັນຍາໃນອະນາຄົດແມ່ນຖືກຫຼຸດຄ່າທີ່ອັດຕາດອກເບ້ຍທີ່ແທ້ຈິງເດີມກັບ ການດັດແກ້ທີ່ນຳມາພາຍຫຼັງຂອງມູນຄ່າທີ່ຖືຢູ່. ສ່ວນແຕກຕ່າງຈາກມູນຄ່າທີ່ຖືຢູ່ກ່ອນໜ້າແມ່ນຖືກບັນທຶກເປັນການດັດແກ້ທີ່ເປັນຄ່າ ບວກ ຫຼື ລົບໃຫ້ແກ່ມູນຄ່າທີ່ຖືຢູ່ຂອງ ຊັບສິນ ຫຼື ໜີ້ສິນທາງການເງິນໃນໃບລາຍງານຖານະການເງິນພ້ອມກັບ ການເພີ່ມຂຶ້ນ ຫຼື ຫຼຸດລົງໃນ *ລາຍຮັບ/ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.*

ສຳລັບເຄື່ອງມືທາງດ້ານການເງິນທີ່ມີອັດຕາດອກເບ້ຍລອຍຕົວ, ການປະເມີນຄືນກະແສເງິນສົດເປັນໄລຍະເພື່ອທີ່ຈະສະທ້ອນໃຫ້ເຫັນເຖິງການເຄື່ອນໄຫວໃນອັດຕາດອກເບ້ຍໃນຕະຫຼາດຍັງໄດ້ປ່ຽນແປງອັດຕາດອກເບ້ຍທີ່ແທ້ຈິງ ແຕ່ວ່າເມື່ອເຄື່ອງມືຖືກຮັບຮູ້ໂດຍທຳອິດໃນມູນຄ່າທີ່ເທົ່າກັບເງິນຕົ້ນ, ການປະເມີນຄືນການຈ່າຍດອກເບ້ຍໃນອະນາຄົດແມ່ນບໍ່ກະທົບຢ່າງມີຄວາມສຳຄັນຕໍ່ມູນຄ່າຕາມບັນຊີຂອງຊັບສິນ ຫຼື ໜີ້ສິນ.

5.2.2. *ລາຍຮັບ ແລະ ລາຍຈ່າຍສຸດທິຈາກດອກເບ້ຍ ແລະ ລາຍການທີ່ຄ້າຍຄືກັນ*

ລາຍຮັບສຸດທິຈາກດອກເບ້ຍປະກອບດ້ວຍລາຍຮັບດອກເບ້ຍ ແລະ ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ທັງ ວິທີອັດຕາດອກເບ້ຍທີ່ແທ້ຈິງ ແລະ ວິທີອື່ນໆ. ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນຖືກສະແດງແຍກກັນຢູ່ໜ້າໃບລາຍງານຜົນການດຳເນີນງານ ເພື່ອສະໜອງຂໍ້ມູນທີ່ເປັນສັດສ່ວນ ແລະ ສາມາດປຽບທຽບກັນໄດ້.

ໃນ *ລາຍຮັບ/ລາຍຈ່າຍດອກເບ້ຍຄິດໄລ່ໂດຍໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ*, ສາຂາພຽງແຕ່ລະບຸດອກເບ້ຍຂອງບັນດາເຄື່ອງມືທາງດ້ານການເງິນເຊິ່ງຖືກອະທິບາຍໃນບົດອະທິບາຍເລກທີ 5.2.1 ດ້ານເທິງ.

ສາຂາຄິດໄລ່ລາຍຮັບດອກເບ້ຍຂອງຊັບສິນທາງການເງິນຍົກເວັ້ນບັນດາຊັບສິນທີ່ເສື່ອມມູນຄ່າດ້ານສິນເຊື່ອທີ່ໄດ້ພິຈາລະນາໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງກັບມູນຄ່າຕາມບັນຊີຂອງຊັບສິນທາງການເງິນ.

ເມື່ອຊັບສິນທາງການເງິນເສື່ອມມູນຄ່າທາງດ້ານສິນເຊື່ອ (ດັ່ງທີ່ໄດ້ອະທິບາຍເພີ່ມເຕີມໃນ ບົດອະທິບາຍເລກທີ 5.10.1 ແລະ ເຊິ່ງກ່ຽວພັນກັບ 'ຂັ້ນທີ 3', ສາຂາຄິດໄລ່ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງກັບຕົ້ນທຶນຄ່າເສື່ອມມູນຄ່າສຸດທິຂອງຊັບສິນທາງການເງິນ. ຖ້າຫາກວ່າຊັບສິນທາງການເງິນ ກັບມາເປັນຊັບສິນທີ່ດີ (ດັ່ງທີ່ໄດ້ລະບຸໃນ ບົດອະທິບາຍເລກທີ 5.10.1) ແລະ ບໍ່ມີການເສື່ອມມູນຄ່າທາງດ້ານສິນເຊື່ອອີກຕໍ່ໄປ, ສາຂາສາມາດກັບຄືນໄປຄິດໄລ່ລາຍຮັບດອກເບ້ຍຕາມພື້ນຖານຈຳນວນເຕັມໄດ້.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.3. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ*

ສາຂາມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການທາງການເງິນຫຼາຍຮູບແບບແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນມູນຄ່າທີ່ສະທ້ອນໃຫ້ເຫັນເຖິງຄ່າຕອບແທນທີ່ສາຂາຄາດວ່າມີສິດທີ່ຈະໄດ້ຮັບໃນການແລກປ່ຽນກັບການບໍລິການທີ່ສາຂາສະໜອງໃຫ້.

ພັນທະຜູກພັນໃນການດຳເນີນງານ ພ້ອມກັນກັບໄລຍະເວລາຂອງຄວາມເພິ່ງພໍໃຈ ແມ່ນຖືກລະບຸ ແລະ ກຳນົດໃນເວລາເລີ່ມສັນຍາ. ລາຍຮັບຂອງສາຂາຕາມສັນຍາບໍ່ໄດ້ລວມເອົາ ພັນທະຜູກພັນໃນການດຳເນີນງານຫຼາຍອັນພ້ອມກັນ ດັ່ງທີ່ໄດ້ອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 5.3.1 ແລະ 5.3.2 ດ້ານລຸ່ມ.

ເມື່ອສາຂາສະໜອງການບໍລິການໃຫ້ແກ່ລູກຄ້າ, ຄ່າຕອບແທນແມ່ນຖືກເກັບ ແລະ ໂດຍທົ່ວໄປແມ່ນຊຳລະທັນທີພາຍຫຼັງຄວາມພຶງພໍໃຈໃນການບໍລິການທີ່ໄດ້ຮັບການສະໜອງໃນຕອນນັ້ນ ຫຼື ສິ້ນສຸດຂອງໄລຍະສັນຍາສຳລັບການບໍລິການທີ່ໄດ້ຮັບການສະໜອງເປັນໄລຍະເວລາດົນ (ຍົກເວັ້ນສິ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 5.3.1 ແລະ 5.3.2 ດ້ານລຸ່ມ).

ໂດຍທົ່ວໄປສາຂາຈະສະຫຼຸບຄົ້ນຫືນໃນສັນຍາລາຍຮັບເພາະມັນເປັນການຄວບຄຸມການບໍລິການຢ່າງເປັນຮູບແບບກ່ອນການສົ່ງມອບການບໍລິການດັ່ງກ່າວໃຫ້ກັບລູກຄ້າ.

ການເປີດເຜີຍດຸນພິນິດການບັນຊີທີ່ສຳຄັນ, ການຄາດຄະເນ ແລະ ສົມມຸດຖານທີ່ກ່ຽວກັບລາຍຮັບຈາກສັນຍາກັບລູກຄ້າໄດ້ລະບຸໄວ້ໃນບົດອະທິບາຍເລກທີ 5.3.3

*5.3.1 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການທີ່ພັນທະຜູກພັນຂອງການດຳເນີນງານແມ່ນຖືກສະໜອງເປັນໄລຍະເວລາ*

ການດຳເນີນດ້ານຂໍ້ຜູກພັນທີ່ໄດ້ສຳເລັດໃນຊ່ວງຂອງເວລາ ລວມມີການບໍລິການທີ່ລູກຄ້າໄດ້ຮັບ ແລະ ນຳໃຊ້ຜົນປະໂຫຍດທີ່ໄດ້ຮັບການສະໜອງຈາກການດຳເນີນງານຂອງສາຂາໄປພ້ອມໆກັນ.

ຄ່າທຳນຽມຂອງສາຂາ ແລະ ລາຍໄດ້ທີ່ໄດ້ຈາກການບໍລິການ ອີງຕາມຕາມຄວາມເພິ່ງພໍໃຈທັງສອງຝ່າຍຂອງໃນການລ່ວງເວລາປະກອບມີ ຄ່າທຳນຽມສັນຍາເງິນກູ້: ຄ່າທຳນຽມປະຈຳປີ ທີ່ຖືກຈ່າຍໂດຍລູກຄ້າສຳລັບການກູ້ເງິນ ແລະ ສິນເຊື່ອອື່ນໆພາຍໃນສາຂານັ້ນ, ການຈັດການປ່ອຍເງິນກູ້ໃຫ້ກັບລູກຄ້າ ແລະ ສັນຍາເງິນກູ້ບໍ່ສາມາດວັດໄດ້ໃນມູນຄ່າທີ່ເໝາະສົມ. ສາຂາໄດ້ໃຫ້ສັນຍາກ່ຽວກັບການໃຫ້ເງິນກູ້ສຳລັບຊ່ວງເວລາສະເພາະໃດໜຶ່ງ, ອີງຕາມຜົນປະໂຫຍດຂອງການບໍລິການທີ່ມອບໃຫ້ກັບລູກຄ້າ ເຖິງແມ່ນວ່າ, ຈະມີການລ່ວງເວລາຂອງສິດທິນັ້ນ, ຄ່າທຳນຽມແມ່ນຈະຖືກຈົດຈຳຕາມລາຍຮັບນັ້ນ. ຄ່າໃຊ້ຈ່າຍຂອງຄ່າທຳນຽມທີ່ຍັງຄ້າງ ແລະ ໄດ້ຮັບໃນແຕ່ລະເດືອນໃນຮູບແບບຄ້າງຮັບ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.3. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ* (ຕໍ່)

*5.3.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການທີ່ພັນທະຜູກພັນຂອງການດຳເນີນງານແມ່ນຖືກສະໜອງເປັນໃນຈຸດເວລາໜຶ່ງ*

ການດຳເນີນດ້ານຂໍ້ຜູກພັນທີ່ໄດ້ສຳເລັດນະເວລາໃດໜຶ່ງແມ່ນຖືກຮັບຮູ້ເມື່ອການຄວບຄຸມຂອງການບໍລິການຖືກສົ່ງມອບແກ່ລູກຄ້າ. ເຊິ່ງໂດຍທົ່ວໄປແມ່ນຢູ່ໃນການສິ້ນສຸດຂອງ ທຸລະກຳ ຫຼື ການບໍລິການ ຫຼື, ຄ່າທຳນຽມ ຫຼື ສ່ວນປະກອບຂອງຄ່າທຳນຽມທີ່ໄດ້ເຊື່ອມຕໍ່ເຖິງ ການດຳເນີນງານອັນແນ່ນອນ ຫຼັງຈາກການສະໜອງຕາມເງື່ອນໄຂການປະຕິງານທີ່ກ່ຽວຂ້ອງ. ສິ່ງເຫຼົ່ານີ້ໄດ້ລວມເອົາ ຄ່າທຳນຽມ ແລະ ຄ່າບໍລິການທີ່ມາຈາກ ການເຈລະຈາ ຫຼື ການເຂົ້າຮ່ວມການເຈລະຈາຂອງທຸລະກຳສຳລັບບຸກຄົນທີສາມ ເຊັ່ນ ການຈັດການ/ການເຂົ້າຮ່ວມ ຫຼື ການເຈລະຈາຂອງການຊື້ຂາຍຮຸ້ນ ຫຼື ຫຼັກຊັບອື່ນໆ ຫຼື ການຊື້ຂາຍທຸລະກິດ, ຄ່ານາຍໜ້າ, ແລະ ຄ່າທຳນຽມໃນການຄໍ້າປະກັນ.

ໂດຍທົ່ວໄປສາຂາມີຂໍ້ຜູກພັນດຽວໃນການດຳເນີນງານເຊິ່ງກ່ຽວຂ້ອງກັບການບໍລິການເຫຼົ່ານີ້ເຊິ່ງແມ່ນການເຮັດໃຫ້ສຳເລັດຂອງທຸລະກຳດັ່ງທີ່ຖືກລະບຸໃນສັນຍາ.

*5.3.3 ຍອດເຫຼືອຕາມສັນຍາ*

ຂໍ້ມູນດັ່ງລຸ່ມນີ້ແມ່ນຖືກຮັບຮູ້ໃນໃບລາຍງານຖານະທາງການເງິນທີ່ມາຈາກລາຍຮັບຈາກສັນຍາກັບລູກຄ້າ:

- 'ໜີ້ຕ້ອງຮັບຄ່າທຳນຽມ ແລະ ຄ່າບໍລິການ' ທີ່ລວມເຂົ້າເປັນ 'ຊັບສິນອື່ນໆ' ເຊິ່ງສະແດງໃຫ້ເຫັນເຖິງສິດຂອງສາຂາໃນມູນຄ່າຂອງຄ່າຕອບແທນເຊິ່ງບໍ່ມີເງື່ອນໄຂ (ຕົວຢ່າງ ການຮຽກຮ້ອງໄລຍະເວລາຈຳນວນໜຶ່ງກ່ອນການຊຳລະທີ່ຄົບກຳນົດ). ໜີ້ຕ້ອງຮັບຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວຖືກຕີມູນຄ່າໄດ້ໃນຕົ້ນທຶນຄ່າເສື່ອມມູນຄ່າ ແລະ ຂຶ້ນຢູ່ກັບລາຍຈ່າຍເງິນແຮຄ່າເສື່ອມມູນຄ່າຂອງ IFRS 9.
- 'ຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຮັບລ່ວງໜ້າ' ທີ່ລວມເຂົ້າເປັນ 'ໜີ້ສິນອື່ນໆ' ເຊິ່ງສະແດງໃຫ້ເຫັນພັນທະຜູກພັນຂອງສາຂາທີ່ຈະຕ້ອງສົ່ງມອບການບໍລິການໃຫ້ແກ່ລູກຄ້າ ເຊິ່ງສາຂາໄດ້ຮັບຄ່າຕອບແທນ (ຫຼື ຄ່າຕອບແທນຄົບກຳນົດຊຳລະ) ຈາກລູກຄ້າແລ້ວ. ໜີ້ສິນສຳລັບຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຮັບລ່ວງໜ້າແມ່ນຖືກຮັບຮູ້ເມື່ອມີການປະຕິບັດການຊຳລະ ຫຼື ການຊຳລະຄົບກຳນົດ (ໄວກວ່າກຳນົດ). ຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຮັບລ່ວງໜ້າແມ່ນຖືກຮັບຮູ້ເປັນລາຍຮັບເມື່ອສາຂາດຳເນີນການ.

*5.4 ລາຍຮັບການຄ້າສຸດທິ*

ລາຍຮັບການຄ້າສຸດທິລວມເອົາທັງກຳໄລ ແລະ ຂາດທຶນຈາກສ່ວນປ່ຽນແປງໃນມູນຄ່າຍຸຕິທຳ ແລະ ລາຍຮັບ ຫຼື ລາຍຈ່າຍດອກເບ້ຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນ ທີ່ມີຈາກຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນທີ່ຖືຄອງເພື່ອຊື້ - ຂາຍ. (ຖ້າມີ).

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

5.5 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ*

5.5.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນກູ້ໃຫ້ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້-ຂາຍ ເຊັ່ນ ມື້ທີ່ສາຂາກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ກຳນົດໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ເງິນກູ້ໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີຂອງລູກຄ້າຮຽບຮ້ອຍແລ້ວ. ສາຂາຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອສາຂາໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

5.5.2 *ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບເງື່ອນໄຂສັນຍາ ແລະ ຮູບແບບທຸລະກິດສຳລັບການບໍລິຫານເຄື່ອງມື ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 5.7.1.1 ແລະ 5.7.1.2 ເຄື່ອງມືທາງດ້ານການເງິນແມ່ນຖືກຕີມູນຄ່າເບື້ອງຕົ້ນໃນມູນຄ່າຍຸຕິທຳ (ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 5.6) ບວກກັບ ຫຼື ລົບອອກຕົ້ນທຶນທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນຖືກບັນທຶກໃນມູນຄ່າຍຸຕິທຳຜ່ານກຳໄລຂາດທຶນ. ໜີ້ຕ້ອງຮັບທາງການເງິນແມ່ນຖືກຕີມູນຄ່າໃນລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ. ເມື່ອມູນຄ່າຍຸຕິທຳຂອງເຄື່ອງມືທາງການເງິນໃນການຮັບຮູ້ເບື້ອງຕົ້ນແຕກຕ່າງຈາກລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ, ສາຂາຮັບຜິດຊອບສຳລັບກຳໄລ ຫຼື ຂາດທຶນມື້ທີ 1 ດັ່ງທີ່ໄດ້ສະແດງຢູ່ດ້ານລຸ່ມ.

5.5.3 *ກຳໄລ ຫຼື ຂາດທຶນ ມື້ທີ 1*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສຳຫຼວດໃນຕະຫຼາດ, ສາຂາຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸຕິທຳໃນລາຍຮັບສຸດທິຈາກການຄ້າ. ໃນກໍລະນີທີ່ມູນຄ່າຍຸຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸຕິທຳແມ່ນຖືກເລື່ອນໄປ ແລະ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

5.5.4 *ປະເພດການຕີມູນຄ່າຂອງຊັບສິນ ແລະ ໜີ້ສິນທາງການເງິນ*

ສາຂາຈັດປະເພດຊັບສິນທາງການເງິນທັງໝົດອີງຕາມແບບຈຳລອງທຸລະກິດສຳລັບການບໍລິຫານຊັບສິນ ແລະ ເງື່ອນໄຂສັນຍາຂອງຊັບສິນ ເຊັ່ນຕີມູນຄ່າ ຕົ້ນທຶນຄ່າເສື່ອມ, ດັ່ງທີ່ອະທິບາຍໃນບົດອະທິບາຍເລກທີ 5.7.1

ໜີ້ສິນທາງການເງິນ ຍົກເວັ້ນ ພັນທະຜູກພັນທາງດ້ານເງິນກູ້ ແລະ ການຄ້ຳປະກັນທາງການເງິນແມ່ນຖືກຕີມູນຄ່າໃນຕົ້ນທຶນຄ່າເສື່ອມມູນຄ່າ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 5.6 *ການກຳນົດມູນຄ່າຍຸຕິທຳ*

ເພື່ອສະແດງໃຫ້ເຫັນວ່າມູນຄ່າຍຸຕິທຳນັ້ນມີທີ່ມາແນວໃດ, ເຄື່ອງມືທາງດ້ານການເງິນແມ່ນຖືກຈັດປະເພດໂດຍອີງໃສ່ເຕັກນິກການຈັດລຳດັບຂັ້ນຂອງການປະເມີນມູນຄ່າ, ດັ່ງສະຫຼຸບລຸ່ມນີ້:

- ເຄື່ອງມືທາງການເງິນໃນ ລະດັບທີ 1 - ບັນດາເຄື່ອງມືທາງການເງິນເຫຼົ່ານີ້ແມ່ນ ຂໍ້ມູນທີ່ຖືກໃຊ້ໃນການຕີມູນຄ່າແມ່ນລາຄາສະເໜີ ຊື້-ຂາຍທີ່ບໍ່ໄດ້ດັດແກ້ຈາກຕະຫຼາດຊື້ຂາຍຄ່ອງສຳລັບຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງທີ່ສາຂາມີ ນະວັນທີການຕີມູນຄ່າ. ສາຂາຈະພິຈາລະນາວ່າຕະຫຼາດນັ້ນເປັນຕະຫຼາດທີ່ມີການເຄື່ອນໄຫວ ຖ້າຫາກວ່າມີກິດຈະກຳການຄ້າທີ່ພຽງພໍເຊິ່ງກ່ຽວພັນກັບບໍລິມາດ ແລະ ສະພາບຄ່ອງຂອງຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ແລະ ເມື່ອມີການຜູກມັດ ແລະ ມີລາຄາທີ່ສາມາດໃຊ້ສິດ ແຈ້ງວ່າ ສາມາດທີ່ຈະນຳໃຊ້ໄດ້ ນະວັນທີທີ່ລາຍງານ.
- ເຄື່ອງມືທາງການເງິນໃນ ລະດັບທີ 2 - ບັນດາເຄື່ອງມືທາງການເງິນເຫຼົ່ານີ້ແມ່ນ ຂໍ້ມູນທີ່ຖືກໃຊ້ສຳລັບການຕີມູນຄ່າ ແລະມີຄວາມສຳຄັນ ເຊິ່ງມາຈາກຂໍ້ມູນຕະຫຼາດທີ່ໄດ້ສັງເກດ ໂດຍກົງ ຫຼື ທາງອ້ອມ ຕະຫຼອດໄລຍະຂອງອາຍຸຂອງເຄື່ອງມື. ຂໍ້ມູນດັ່ງກ່າວນັ້ນແມ່ນປະກອບດ້ວຍ ລາຄາສະເໜີຊື້-ຂາຍສຳລັບຊັບສິນ ຫຼື ໜີ້ສິນທີ່ຄ້າຍຄືກັນໃນຕະຫຼາດຊື້ຂາຍຄ່ອງ, ລາຄາສະເໜີຊື້-ຂາຍສຳລັບ ຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ໃນຕະຫຼາດທີ່ບໍ່ແມ່ນຕະຫຼາດຊື້ຂາຍຄ່ອງ, ແລະ ຂໍ້ມູນທີ່ສາມາດສັງເກດໄດ້ນອກຈາກ ລາຄາສະເໜີຊື້-ຂາຍ ເຊັ່ນວ່າ ອັດຕາດອກເບ້ຍ ແລະ ເສັ້ນອັດຕາຜົນຕອບແທນ, ຄວາມເໜັງຕີງ, ແລະ ການແຜ່ຂະຫຍາຍຂອງສິນເຊື່ອ. ນອກຈາກນີ້, ການດັດແກ້ແມ່ນອາດຈະຕ້ອງການ ສຳລັບເງື່ອນໄຂ ຫຼື ຖານະຂອງຊັບສິນ ຫຼື ສ່ວນຂະຫຍາຍທີ່ກ່ຽວຂ້ອງກັບລາຍການທີ່ສາມາດປຽບທຽບໄດ້ໃນເຄື່ອງມືທີ່ມີລາຄາ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າການດັດແກ້ນັ້ນແມ່ນຖືກອີງໃສ່ຂໍ້ມູນທີ່ບໍ່ສາມາດສັງເກດໄດ້ຢ່າງມີໃນສຳຄັນຕໍ່ການຕີມູນຄ່າທັງໝົດ, ສາຂາຈະຈັດປະເພດເຄື່ອງມືນັ້ນເປັນ ລະດັບທີ 3.
- ເຄື່ອງມືທາງການເງິນໃນ ລະດັບທີ 3 - ບັນດາເຄື່ອງມືທາງການເງິນເຫຼົ່ານີ້ແມ່ນລວມຢູ່ໃນ ໜຶ່ງ ຫຼື ຫຼາຍຂໍ້ມູນ ທີ່ບໍ່ສາມາດສັງເກດໄດ້ຢ່າງມີໄນສຳຄັນຕໍ່ການຕີມູນຄ່າໂດຍທັງໝົດ.

ສາຂາປະເມີນການຈັດລະດັບໃນແຕ່ລະໄລຍະການລາຍງານເທື່ອລະເຄື່ອງມື ແລະ ຈັດປະເພດເຄື່ອງມືຄືນເມື່ອຈຳເປັນໂດຍອີງຕາມຂໍ້ເປັນຈິງໃນທ້າຍໄລຍະການລາຍງານ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.7 ຊັບສິນ ແລະ ໜີ້ສິນທາງການເງິນ*

*5.7.1 ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ໃຫ້ແກ່ລູກຄ້າ ແລະ ການລົງທຶນທາງການເງິນໃນຕົ້ນທຶນຄ່າເສື່ອມມູນຄ່າ*

ສາຂາໄດ້ວັດແທກ *ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ໃຫ້ແກ່ລູກຄ້າ* ແລະ ການລົງທຶນທາງການເງິນອື່ນທີ່ມີຄ່າເສື່ອມຖ້າຫາກວ່າສອດຄ່ອງກັບເງື່ອນໄຂລຸ່ມນີ້:

- ຊັບສິນການເງິນແມ່ນຖືເອົາເປັນຮູບແບບທຸລະກິດໂດຍມີຈຸດປະສົງເພື່ອຖືຊັບສິນທາງການເງິນ ເພື່ອເກັບກຳກະແສເງິນສົດຕາມສັນຍາ;
- ເງື່ອນໄຂຕາມສັນຍາຂອງຊັບສິນທາງການເງິນເຮັດໃຫ້ວັນທີກຳນົດຂອງກະແສເງິນສົດທີ່ເປັນການຈ່າຍຕົ້ນຕໍ ແລະ ດອກເບ້ຍ (SPPI) ເທົ່າກັບຈຳນວນເງິນຕົ້ນ.

ລາຍລະອຽດຂອງເງື່ອນໄຂເຫຼົ່ານີ້ແມ່ນໄດ້ລະບຸໄວ້ຂ້າງລຸ່ມນີ້.

*5.7.1.1 ການປະເມີນຕົວແບບທຸລະກິດ*

ສາຂາພິຈາລະນາຕົວແບບທຸລະກິດໃນລະດັບທີ່ສະທ້ອນໄດ້ດີທີ່ສຸດເຖິງວິທີບໍລິຫານກຸ່ມຂອງຊັບສິນທາງການເງິນເພື່ອບັນລຸວັດຖຸປະສົງຂອງທຸລະກິດ.

- ຄວາມສ່ຽງທີ່ມີຜົນຕໍ່ກັບການດຳເນີນງານຂອງຮູບແບບທາງທຸລະກິດ (ແລະ ຊັບສິນທາງການເງິນທີ່ຖືໃນຮູບແບບທຸລະກິດ) ແລະ ໂດຍສະເພາະແມ່ນວິທີການຈັດການຄວາມສ່ຽງເຫຼົ່ານັ້ນ:
- ວິທີທີ່ຜູ້ບໍລິຫານຂອງທຸລະກິດນັ້ນຖືກຕອບແທນແນວໃດ (ຕົວຢ່າງ ຄ່າຕອບແທນແມ່ນຖືກອີງໃສ່ມູນຄ່າຍຸຕິທຳຂອງຊັບສິນທີ່ໄດ້ບໍລິຫານ ຫຼືວ່າ ຕາມກະແສເງິນສົດຕາມສັນຍາທີ່ເກັບໄດ້).

ຄວາມຖີ່, ມູນຄ່າ ແລະ ເວລາໃນການຂາຍທີ່ຄາດຫວັງ ກໍເປັນສິ່ງສຳຄັນໃນການປະເມີນສາຂາເຊັ່ນກັນ.

ການປະເມີນຮູບແບບທຸລະກິດແມ່ນຖືກອີງໃສ່ສະຖານະການທີ່ຄາດການໄວ້ຢ່າງສົມເຫດສົມຜົນໂດຍທີ່ບໍ່ໄດ້ຄຳນຶງເຖິງສະຖານະການໃນ 'ກໍລະນີທີ່ຮ້າຍແຮງທີ່ສຸດ' ຫຼື 'ກໍລະນີທີ່ກົດດັນ'. ຖ້າຫາກວ່າກະແສເງິນສົດຫຼັງຈາກການຮັບຮູ້ໃນເບື້ອງຕົ້ນແມ່ນຖືກຮັບຮູ້ໃນທາງທີ່ແຕກຕ່າງຈາກສິ່ງທີ່ຄາດຫວັງໄວ້ດັ່ງເດີມຂອງສາຂາ, ສາຂາຈະບໍ່ປ່ຽນແປງການຈັດປະເພດຂອງຊັບສິນທາງການເງິນທີ່ເຫຼືອຢູ່ທີ່ຖືຄອງໃນຮູບແບບທຸລະກິດ ແຕ່ວ່າ ລວມຂໍ້ມູນດັ່ງກ່າວເຂົ້າກັນເມື່ອປະເມີນຊັບສິນທາງການເງິນທີ່ເກີດໃໝ່ ຫຼື ຊື້ເຂົ້າໃໝ່ໃນອະນາຄົດ.

*5.7.1.2 ການທົດສອບ SPPI*

ດັ່ງຂັ້ນຕອນທີສອງຂອງຂັ້ນຕອນການຈັດປະເພດ ສາຂາປະເມີນເງື່ອນໄຂຕາມສັນຍາຂອງຊັບສິນທາງການເງິນເພື່ອລະບຸວ່າກົງກັບເງື່ອນໄຂຂອງການທົດສອບ SPPI ຫຼື ບໍ່.

'ເງິນຕົ້ນ' ສຳລັບຈຸດປະສົງຂອງການທົດສອບນີ້ແມ່ນຖືກລະບຸໃນມູນຄ່າຍຸຕິທຳຂອງຊັບສິນທາງການເງິນໃນການຮັບຮູ້ເບື້ອງຕົ້ນ ແລະ ອາດຈະປ່ຽນແປງຕະຫຼອດອາຍຸຂອງຊັບສິນທາງການເງິນ (ຕົວຢ່າງ ຖ້າຫາກວ່າມີການຊຳລະເງິນຕົ້ນ ຫຼື ຄ່າເສື່ອມມູນຄ່າຂອງ ສ່ວນເພີ່ມ/ສ່ວນຫຼຸດ).

**5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

5.7 *ຊັບສິນ ແລະ ໜີ້ສິນທາງການເງິນ* (ຕໍ່)

5.7.1 *ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ໃຫ້ແກ່ລູກຄ້າ ແລະ ການລົງທຶນທາງການເງິນໃນຕົ້ນທຶນຄ່າເສື່ອມມູນຄ່າ* (ຕໍ່)

5.7.1.2 *ການທົດສອບ SPPI* (ຕໍ່)

ອົງປະກອບທີ່ສໍາຄັນທີ່ສຸດຂອງດອກເບ້ຍພາຍໃຕ້ສັນຍາການປ່ອຍກູ້ໂດຍທົ່ວໄປແລ້ວແມ່ນໄດ້ຮັບການພິຈາລະນາມູນຄ່າເງິນຕາມເວລາ ແລະ ຄວາມສ່ຽງດ້ານສິນເຊື່ອ. ເພື່ອທີ່ຈະສ້າງການປະເມີນ SPPI, ສາຂາໄດ້ນໍາໃຊ້ການປະເມີນ ແລະ ພິຈາລະນາປັດໄຈທີ່ກ່ຽວຂ້ອງເຊັ່ນວ່າ ສະກຸນເງິນທີ່ຊັບສິນທາງການເງິນນັ້ນຖືກກໍານົດ ແລະ ໄລຍະເວລາທີ່ກໍານົດອັດຕາດອກເບ້ຍ.

ໃນທາງກົງກັນຂ້າມ, ເງື່ອນໄຂຕາມສັນຍາທີ່ສະເໜີຫຼາຍກວ່າຍອດທຸລະກໍາທີ່ຕໍ່າສຸດຕໍ່ຄວາມສ່ຽງ ແລະ ຄວາມບໍ່ແນ່ນອນໃນກະແສເງິນສົດຕາມສັນຍາທີ່ບໍ່ກ່ຽວຂ້ອງກັບການຈັດການສິນເຊື່ອພື້ນຖານ ບໍ່ກໍ່ໃຫ້ເກີດກະແສເງິນສົດຕາມສັນຍາທີ່ໄດ້ມາຈາກເງິນຕົ້ນ ແລະ ດອກເບ້ຍເທົ່ານັ້ນໃນມູນຄ່າທີ່ຄົງຄ້າງຢູ່. ໃນກໍລະນີດັ່ງກ່າວນັ້ນ, ຊັບສິນທາງການເງິນແມ່ນຖືກຮຽກຮ້ອງໃຫ້ຕີມູນຄ່າໃນມູນຄ່າຍຸຕິທໍາຜ່ານກໍາໄລ ຫຼື ຂາດທຶນ (FVTPL).

5.7.2 *ກາສານໜີ້ທີ່ອອກຈໍາໜ່າຍ ແລະ ກອງທຶນກູ້ຢືມອື່ນໆ*

ຫຼັງຈາກການຕີມູນຄ່າຄັ້ງທໍາອິດ, ກາສານໜີ້ທີ່ອອກຈໍາໜ່າຍ ແລະ ກອງທຶນກູ້ຢືມອື່ນໆແມ່ນຖືກຕີມູນຄ່າພາຍຫຼັງໃນຕົ້ນທຶນຄ່າເສື່ອມມູນຄ່າ. ຕົ້ນທຶນຄ່າເສື່ອມມູນຄ່າແມ່ນຖືກຄິດໄລ່ໂດຍການພິຈາລະນາສ່ວນຫຼຸດ ຫຼື ສ່ວນເພີ່ມໃດໆ ໃນກອງທຶນທີ່ອອກຈໍາໜ່າຍ ແລະ ລາຄາທຶນທີ່ລວມເອົາອັດຕາດອກເບ້ຍທີ່ແທ້ຈິງ.

5.7.3 *ການຄໍ້າປະກັນທາງດ້ານການເງິນ, ໜັງສືສິນເຊື່ອ ແລະ ພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້*

ສາຂາອອກໜັງສືຄໍ້າປະກັນທາງການເງິນ, ໜັງສືສິນເຊື່ອ ແລະ ພັນທະຜູກພັນເງິນກູ້. ໜັງສືຄໍ້າປະກັນທາງດ້ານການເງິນແມ່ນຖືກຮັບຮູ້ເບື້ອງຕົ້ນໃນເອກະສານລາຍງານທາງການເງິນ (ພ້ອມດ້ວຍເງິນແຮ) ໃນມູນຄ່າຍຸຕິທໍາ, ເຊິ່ງເປັນສ່ວນເພີ່ມທີ່ໄດ້ຮັບ. ສ່ວນເພີ່ມທີ່ໄດ້ຮັບແມ່ນຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານໃນ *"ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການສຸດທິ"* ໃນພື້ນຖານແບບເສັ້ນຊື່ຕະຫຼອດອາຍຸຂອງການຄໍ້າປະກັນນັ້ນ.

ພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້ ແລະ ໜັງສືສິນເຊື່ອ ແມ່ນພັນທະຜູກພັນພາຍໃຕ້ໄລຍະຕະຫຼອດອາຍຸຂອງພັນທະຜູກພັນ, ສາຂາຖືກກໍານົດໃຫ້ສະໜອງເງິນກູ້ພ້ອມກັບເງື່ອນໄຂທີ່ກໍານົດໄວ້ກ່ອນໜ້າໃຫ້ແກ່ລູກຄ້າ. ເຊິ່ງຄ້າຍຄືກັນກັບສັນຍາຄໍ້າປະກັນທາງດ້ານການເງິນຕ່າງໆ, ສັນຍາເຫຼົ່ານີ້ແມ່ນຢູ່ໃນຂອບເຂດເງື່ອນໄຂຂອງໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ.

ມູນຄ່າໃນນາມຕາມສັນຍາຂອງການຄໍ້າປະກັນທາງດ້ານການເງິນ, ໜັງສືສິນເຊື່ອ ແລະ ພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້, ເຊິ່ງເງິນກູ້ທີ່ໄດ້ຕົກລົງກັນນັ້ນແມ່ນຢູ່ໃນເງື່ອນໄຂຕະຫຼາດ, ເຊິ່ງບໍ່ຖືກບັນທຶກໃນໃບລາຍງານຖານະການເງິນ. ມູນຄ່າໃນນາມຂອງກາສານເຫຼົ່ານີ້ພ້ອມກັບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນທີ່ກ່ຽວຂ້ອງນັ້ນແມ່ນຖືກສະແດງໃນ ບົດອະທິບາຍເລກທີ 31.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*5.8 ການຈັດປະເພດຄືນຂອງຊັບສິນ ແລະ ໜີ້ສິນທາງການເງິນ*

ສາຂາບໍ່ໄດ້ຈັດປະເພດຊັບສິນທາງການເງິນຕາມພາຍຫຼັງເປັນການຮັບຮູ້ຄັ້ງທຳອິດນອກຈາກກໍລະນີທີ່ຍົກເວັ້ນເຊິ່ງສາຂາໄດ້ມາ, ສະສາງ, ຫຼື ຍຸດຕິທຸລະກິດ. ໜີ້ສິນທາງການເງິນແມ່ນຈະບໍ່ຖືກຈັດປະເພດຄືນ.

*5.9 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ*

*5.9.1 ການຢຸດຮັບຮູ້ຍ້ອນການດັດແກ້ຢ່າງສຳຄັນໃນເງື່ອນໄຂ ແລະ ຂໍ້ກຳນົດ*

ສາຂາຈະຢຸດຮັບຮູ້ຊັບສິນທາງການເງິນເຊັ່ນວ່າ ເງິນກູ້ຢືມໃຫ້ແກ່ລູກຄ້າ, ເມື່ອຂໍ້ກຳນົດ ແລະ ເງື່ອນໄຂໄດ້ຖືກເຈລະຈາຄືນ ເຊິ່ງຈະກາຍເປັນເງິນກູ້ໃໝ່ ພ້ອມກັບ ສ່ວນຕ່າງທີ່ຖືກຮັບຮູ້ເປັນກຳໄລ ຫຼື ຂາດທຶນຈາກການຢຸດຮັບຮູ້, ຖ້າຫາກວ່າລາຍຈ່າຍຄ່າເສື່ອມມູນຄ່າໜີ້ເສຍຍັງບໍ່ທັນໄດ້ຖືກບັນທຶກເທື່ອ. ເງິນກູ້ທີ່ຖືກຮັບຮູ້ໃໝ່ຈະຖືກຈັດປະເພດໃໝ່ ໃນຂັ້ນທີ 1 ເພື່ອຈຸດປະສົງການຕີລາຄາແທກຜົນຂາດທຶນທາງສິນເຊື່ອທີ່ຄາດໄວ້, ຍົກເວັ້ນເສຍວ່າເງິນກູ້ໃໝ່ແມ່ນຖືກລົງຄວາມເຫັນວ່າເປັນຊັບສິນທາງການເງິນທີ່ມີການດ້ອຍຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມທີ່ຊື້ ຫຼື ໄດ້ມາ.

ເມື່ອປະເມີນວ່າຈະຢຸດຮັບຮູ້ເງິນກູ້ແກ່ລູກຄ້າ ຫຼື ບໍ່ ໂດຍພາຍໃຕ້ເງື່ອນໄຂຕ່າງໆ ສາຂາຈະພິຈາລະນາປັດໄຈດັ່ງລຸ່ມນີ້:

- ການປ່ຽນແປງໃນສະກຸນເງິນຂອງເງິນກູ້
- ການນຳສະເໜີຂອງຮູບແບບຂອງທຶນ
- ການປ່ຽນແປງໃນຄູ່ສັນຍາ
- ຖ້າຫາກວ່າການດັດແກ້ແມ່ນເປັນດັ່ງນັ້ນເຄື່ອງມືດັ່ງກ່າວຈະບໍ່ກົງກັບ SPPI ອີກຕໍ່ໄປ

ຖ້າຫາກວ່າການດັດແກ້ບໍ່ມີຜົນໃນກະແສເງິນສົດທີ່ມີສ່ວນຕ່າງຢ່າງໃຫຍ່ຫຼວງ, ການດັດແກ້ນັ້ນຈະບໍ່ມີຜົນໃນການຢຸດຮັບຮູ້. ອີງຕາມສ່ວນປ່ຽນແປງສ່ວນຫຼຸດໃນກະແສເງິນສົດໃນອັດຕາດອກເບ້ຍທີ່ແທ້ຈິງເດີມ, ສາຂາຈະບັນທຶກການດັດແກ້ກຳໄລ ຫຼື ຂາດທຶນເມື່ອຂາດທຶນຈາກຄ່າເສື່ອມມູນຄ່າຍັງບໍ່ໄດ້ຖືກບັນທຶກ.

*5.9.2 ການຢຸດຮັບຮູ້ນອກເໜືອຈາກການດັດແກ້ຢ່າງໃຫຍ່ຫຼວງ*

*5.9.2.1 ຊັບສິນທາງການເງິນ*

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນທາງການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທີທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນໄດ້ໝົດອາຍຸແລ້ວ. ນອກຈາກນີ້, ສາຂາຍັງຢຸດຮັບຮູ້ເປັນຊັບສິນ ຖ້າຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ສາຂາຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ສາຂາໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຊຳລະກະແສເງິນສົດທີ່ຈະໄດ້ຮັບເຕັມຈຳນວນໂດຍປາສະຈາກການລ່າຊ້າທີ່ສຳຄັນຕໍ່ພາກສ່ວນທີສາມພາຍໃຕ້ສັນຍາ "ການສົ່ງຕໍ່".

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*5.9 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)*

*5.9.2 ການຢຸດຮັບຮູ້ນອກເໜືອຈາກການດັດແກ້ຢ່າງໃຫຍ່ຫຼວງ (ຕໍ່)*

*5.9.2.1 ຊັບສິນທາງການເງິນ (ຕໍ່)*

ສັນຍາການສົ່ງຕໍ່ ເປັນການເຮັດທຸລະກຳຜ່ານສາຂາຖືເປັນລາຍການທີ່ເກີດຂຶ້ນ ເມື່ອສາຂາຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພັນທະຜູກພັນຕາມສັນຍາທີ່ຈະຕ້ອງຊຳລະກະແສເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອຖືກຕ້ອງຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້:

- ສາຂາບໍ່ມີພັນທະຜູກພັນທີ່ຈະຈ່າຍໃຫ້ແກ່ຜູ້ໄດ້ຮັບສຸດທ້າຍ ຍົກເວັ້ນວ່າ ມີມູນຄ່າເທົ່າທຽມທີ່ເກັບໄດ້ຈາກຊັບສິນເດີມ ເຊິ່ງບໍ່ລວມລ່ວງໜ້າໄລຍະສັ້ນໂດຍອີງກອນພ້ອມກັບສິດເຕັມໃນການຟື້ນຟູມູນຄ່າທີ່ໃຫ້ກູ້ຢືມບວກກັບດອກເບ້ຍຄ້າງຈ່າຍໃນອັດຕາຕະຫຼາດ;
- ສາຂາບໍ່ສາມາດຂາຍ ຫຼື ຈຳນຳຊັບສິນເດີມນອກຈາກຫຼັກຊັບໃຫ້ແກ່ຜູ້ໄດ້ຮັບສຸດທ້າຍສຳລັບພັນທະຜູກພັນທີ່ຈ່າຍກະແສເງິນສົດ; ແລະ
- ສາຂາຈະຕ້ອງສົ່ງກະແສເງິນສົດໃດໆທີ່ຮວບຮວມໃນນາມຂອງຜູ້ໄດ້ຮັບສຸດທ້າຍໂດຍປາສະຈາກຄວາມລ່າຊ້າທີ່ໃຫຍ່ຫຼວງ. ນອກຈາກນີ້, ສາຂາແມ່ນບໍ່ມີສິດທີ່ຈະລົງທຶນຄືນໃນກະແສເງິນສົດດັ່ງກ່າວ; ຍົກເວັ້ນສຳລັບການລົງທຶນໃນເງິນສົດ ຫຼື ທຽບເທົ່າເງິນສົດໃນລະຫວ່າງໄລຍະເວລາສະສາງອັນສັ້ນຈາກມື້ທີ່ຮວບຮວມເຖິງມື້ທີ່ຮຽກຮ້ອງໃຫ້ມີການມອບແກ່ຜູ້ໄດ້ຮັບສຸດທ້າຍ, ແລະ ດອກເບ້ຍທີ່ໄດ້ຮັບໃນຫຼັກຊັບດັ່ງກ່າວແມ່ນຖືກສົ່ງໃຫ້ຜູ້ໄດ້ຮັບສຸດທ້າຍ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍຕໍ່ເມື່ອ:

- ສາຂາໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ; ຫຼື
- ສາຂາບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ.

ສາຂາຈະພິຈາລະນາວ່າ ການຄວບຄຸມຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອສາຂາໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື ໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ສາຂາຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ສາຂາຍັງຮັບຮູ້ເປັນໜີ້ສິນທີ່ຕິດພັນ. ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ສະທ້ອນເຖິງສິດ ແລະ ພັນທະຂອງສາຂາທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ສາຂາມີຄວາມສາມາດໃນການຊຳລະໜີ້.

ຖ້າຫາກວ່າການສືບຕໍ່ຂອງຮູບແບບຂອງກາສານສິດທີ່ໄດ້ຂຽນ ຫຼື ທາງເລືອກໃນການຊື້ (ຫຼື ທັງສອງ) ຕໍ່ຊັບສິນທີ່ໄດ້ໂອນ, ການສືບຕໍ່ແມ່ນຖືກຕີມູນຄ່າໃນມູນຄ່າທີ່ສາຂາຈະຕ້ອງຈ່າຍເພື່ອຊື້ຄືນ. ໃນກໍລະນີທີ່ກາສານສິດໃນການຊື້ໃນຊັບສິນທີ່ຖືກຕີມູນຄ່າເປັນມູນຄ່າຍຸຕິທຳ, ຂອບເຂດຂອງການສືບຕໍ່ຂອງອີງກອນແມ່ນຖືກຈຳກັດໃນລະດັບຕ່ຳກວ່າມູນຄ່າຍຸຕິທຳຂອງຊັບສິນທີ່ໄດ້ໂອນ ແລະ ຕາສານສິດລາຄາທີ່ໄດ້ໃຊ້.

## 5. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 5.9 *ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ* (ຕໍ່)

### 5.9.2 *ການຢຸດຮັບຮູ້ນອກເໜືອຈາກການດັດແກ້ຢ່າງໃຫຍ່ຫຼວງ* (ຕໍ່)

#### 5.9.2.2 *ໜີ້ສິນທາງການເງິນ*

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕໍ່ກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່, ແລະ ສ່ວນຜິດດ່ຽງຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນການດຳເນີນງານ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

### 5.10 *ການເສື່ອມມູນຄ່າຂອງຊັບສິນ*

### 5.10.1. *ພາບລວມຂອງຫຼັກການຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດໄວ້*

ສາຂາໄດ້ບັນທຶກຂາດທຶນສິນເຊື່ອທີ່ຄາດວ່າຈະເກີດຂຶ້ນສຳລັບທຸກເງິນກູ້ ແລະ ຊັບສິນທີ່ເປັນໜີ້ສິນທາງການເງິນອື່ນໆທີ່ບໍ່ໄດ້ຖືຄອງໃນມູນຄ່າຍຸຕິທຳຜ່ານກຳໄລຂາດທຶນ (FVTPL), ພ້ອມກັບພັນທະຜູກພັນເງິນກູ້ ແລະ ສັນຍາຄ້ຳປະກັນທາງດ້ານການເງິນ, ໃນພາກສ່ວນນີ້ແມ່ນອ້າງເປັນເຄື່ອງມືທາງດ້ານການເງິນ. ສຳລັບກາສານທຶນແມ່ນບໍ່ໄດ້ມີການຫັກຄ່າເສື່ອມມູນຄ່າພາຍໃຕ້ IFRS 9.

ຂາດທຶນສິນເຊື່ອທີ່ຄາດວ່າຈະເກີດ (ໜີ້ເສຍທີ່ຄາດວ່າຈະເກີດ) ແມ່ນອີງຕາມການຄາດຄະເນໜີ້ເສຍຕະຫຼອດອາຍຸຂອງຊັບສິນ (ອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ), ຍົກເວັ້ນວ່າບໍ່ມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງດ້ານສິນເຊື່ອນັບແຕ່ເລີ່ມຕົ້ນ, ເຊິ່ງໃນກໍລະນີນີ້, ເງິນແຮແມ່ນອີງໃສ່ໜີ້ເສຍທີ່ຄາດວ່າຈະເກີດໃນ 12 ເດືອນ ດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 5.10.2. ນະໂຍບາຍຂອງສາຂາສຳລັບການພິຈາລະນາຖ້າມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອແມ່ນໄດ້ອະທິບາຍໃນ ບົດອະທິບາຍເລກທີ 31.

ໜີ້ເສຍທີ່ຄາດວ່າຈະເກີດ ຂອງ 12 ເດືອນ ແມ່ນສ່ວນໜຶ່ງຂອງອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດທີ່ໄດ້ສະແດງເຖິງໜີ້ເສຍທີ່ຄາດວ່າຈະເກີດ ທີ່ມີຜົນມາຈາກການຜິດນັດຊຳລະໃນເຄື່ອງມືທາງການເງິນທີ່ເປັນໄປໄດ້ພາຍໃນ 12 ເດືອນຫຼັງຈາກວັນທີລາຍງານ.

ທັງໜີ້ເສຍທີ່ຄາດວ່າຈະເກີດ ຕະຫຼອດອາຍຸ ແລະ ໜີ້ເສຍທີ່ຄາດວ່າຈະເກີດ ຂອງ 12 ເດືອນ ແມ່ນຖືກຄິດໄລ່ບໍ່ວ່າຈະເປັນພື້ນຖານແບບດ່ຽວ ຫຼື ແບບຮ່ວມໝູ່, ຂຶ້ນກັບລັກສະນະຂອງກຸ່ມຫຼັກຊັບຂອງເຄື່ອງມືທາງດ້ານການເງິນທີ່ນຳມາຄິດໄລ່.

ສາຂາໄດ້ສ້າງນະໂຍບາຍເພື່ອທີ່ຈະປະຕິບັດການປະເມີນ ໃນແຕ່ລະທ້າຍຂອງໄລຍະການລາຍງານ ວ່າຄວາມສ່ຽງສິນເຊື່ອຂອງເຄື່ອງມືທາງດ້ານການເງິນມີການເພີ່ມຂຶ້ນຢ່າງສຳຄັນ ຫຼື ບໍ່ ນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ, ໂດຍການພິຈາລະນາສ່ວນປ່ຽນແປງໃນຄວາມສ່ຽງຂອງການຜິດນັດຊຳລະທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມືທາງດ້ານການເງິນທີ່ເຫຼືອຢູ່. ເຊິ່ງໄດ້ອະທິບາຍລະອຽດເພີ່ມເຕີມໃນບົດອະທິບາຍເລກທີ 28.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.10 ການເສື່ອມມູນຄ່າຂອງຊັບສິນ* (ຕໍ່)

*5.10.1. ພາບລວມຂອງຫຼັກການຜິນຂາດທຶນທາງດ້ານສິນເຊື່ອທີ່ຄາດໄວ້* (ຕໍ່)

ໂດຍອີງຕາມຂັ້ນຕອນທາງເທິງ, ສາຂາໄດ້ຈັດກຸ່ມເງິນກູ້ເປັນ ຂັ້ນທີ 1, ຂັ້ນທີ 2, ຂັ້ນທີ 3 ແລະ ຊັບສິນທາງການເງິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ (POCI), ເຊິ່ງໄດ້ອະທິບາຍດັ່ງລຸ່ມນີ້:

- ຂັ້ນທີ 1 — ເມື່ອເງິນກູ້ຖືກຮັບຮູ້ຄັ້ງທຳອິດ, ສາຂາຮັບຮູ້ເງິນແຮອີງໃສ່ໜີ້ເສຍທີ່ຄາດວ່າຈະເກີດ ຂອງ 12 ເດືອນ. ເງິນກູ້ຂັ້ນທີ 1 ຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ເງິນກູ້ໄດ້ຖືກຈັດປະເພດຄືນໃໝ່ຈາກ ຂັ້ນທີ 2.
- ຂັ້ນທີ 2 — ເມື່ອເງິນກູ້ໄດ້ສະແດງການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອນັບຕັ້ງແຕ່ເລີ່ມປ່ອຍສິນເຊື່ອ, ສາຂາບັນທຶກເງິນແຮສຳລັບ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ຕະຫຼອດອາຍຸ. ເງິນກູ້ ຂັ້ນທີ 2 ແມ່ນຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ເງິນກູ້ໄດ້ຖືກຈັດປະເພດຄືນໃໝ່ຈາກ ຂັ້ນທີ 3.
- ຂັ້ນທີ 3 — ເງິນກູ້ທີ່ຖືກພິຈາລະນາຄ່າເສື່ອມສິນເຊື່ອ (ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 31). ສາຂາບັນທຶກຄ່າໃຊ້ຈ່າຍສຳລັບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນທີ່ຄາດການໄວ້ຕະຫຼອດອາຍຸ.
- POCI — ຊັບສິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ ("POCI") ແມ່ນຊັບສິນທາງການເງິນທີ່ມີຄ່າເສື່ອມສິນເຊື່ອໃນການຮັບຮູ້ຄັ້ງທຳອິດ. ຊັບສິນ POCI ແມ່ນຖືກບັນທຶກໃນມູນຄ່າຍຸຕິທຳໃນການຮັບຮູ້ເດີມ ແລະ ລາຍຮັບດອກເບ້ຍແມ່ນຖືກຮັບຮູ້ພາຍຫຼັງອີງຕາມອັດຕາດອກເບ້ຍທີ່ແທ້ຈິງທີ່ໄດ້ປັບສິນເຊື່ອ. ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ແມ່ນພຽງແຕ່ຖືກຮັບຮູ້ ຫຼື ຊຳລະອອກເມື່ອມີສ່ວນປ່ຽນແປງພາຍຫຼັງຂອງໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ.

ສຳລັບຊັບສິນທາງການເງິນທີ່ສາຂາບໍ່ມີການຄາດການທີ່ສົມເຫດສົມຜົນ ໃນການກູ້ຄືນບໍ່ວ່າຈະປັນມູນຄ່າຄົງຄ້າງທັງໝົດ ຫຼື ຕາມສັດສ່ວນ ສະນັ້ນ, ມູນຄ່າຕາມບັນຊີຂັ້ນຕົ້ນຂອງຊັບສິນທາງການເງິນຈະຖືກຫຼຸດລົງ. ເຊິ່ງເປັນການຢຸດຮັບຮູ້ຊັບສິນທາງການເງິນ (ບາງສ່ວນ).

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*5.10. ການເສື່ອມມູນຄ່າຂອງຊັບສິນ (ຕໍ່)*

*5.10.2 ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ*

ສາຂາຄຳນວນ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ໂດຍອີງໃສ່ສະຖານະການຄວາມອາດຈະເປັນໄປໄດ້ແບບຖ່ວງນ້ຳໜັກ 3 ກໍລະນີ ເພື່ອຕີມູນຄ່າການຂາດແຄນເງິນສົດທີ່ຄາດການໄວ້, ອັດຕາສ່ວນຫຼຸດໂດຍປະມານຕໍ່ອັດຕາດອກເບ້ຍທີ່ແທ້ຈິງ. ການຂາດແຄນເງິນສົດແມ່ນສ່ວນຕ່າງລະຫວ່າງກະແສເງິນສົດທີ່ຄົບກຳນົດຕາມສັນຍາ ແລະ ກະແສເງິນສົດທີ່ສາຂາຄາດວ່າຈະໄດ້ຮັບ. ກົນໄກຂອງການຄຳນວນ ໜີ້ເສຍທີ່ຄາດວ່າຈະເກີດ ແມ່ນຖືກສະແດງຢູ່ດ້ານລຸ່ມ ແລະ ມີອົງປະກອບທີ່ສຳຄັນດັ່ງລຸ່ມນີ້:

- ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ ("PD") — ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນການຄາດຄະເນຄວາມອາດຈະເປັນໄປໄດ້ຂອງການຜິດນັດຊຳລະໃນຕະຫຼອດຊ່ວງເວລາທີ່ກຳນົດ. ການຜິດນັດຊຳລະອາດຈະເກີດຂຶ້ນໃນຊ່ວງເວລາທີ່ແນ່ນອນໃດໜຶ່ງຕະຫຼອດໄລຍະການປະເມີນ, ຖ້າຫາກວ່າຄວາມສິ່ງທີ່ເອື້ອອຳນວຍບໍ່ໄດ້ຖືກຢຸດຮັບຮູ້ໃນກ່ອນໜ້າ ແລະ ຍັງມີຢູ່ໃນກຸ່ມຫຼັກຊັບ. ແນວຄວາມຄິດຂອງຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 31.
- ຍອດໜີ້ເມື່ອຜິດນັດຊຳລະ ("EAD") — ຍອດໜີ້ເມື່ອຜິດນັດຊຳລະ ແມ່ນການປະມານການຍອດໜີ້ໃນວັນທີຜິດນັດຊຳລະໃນອະນາຄົດ, ໂດຍພິຈາລະນາສ່ວນປ່ຽນແປງທີ່ຄາດການໄວ້ໃນຍອດໜີ້ຫຼັງຈາກມື້ລາຍງານ ເຊິ່ງລວມເອົາການຊຳລະຄືນທັງເງິນຕົ້ນ ແລະ ດອກເບ້ຍ, ບໍ່ວ່າຈະຕາມກຳນົດໃນສັນຍາ ຫຼື ບໍ່ກໍຕາມ, ການເບີກຖອນທີ່ຄາດການໄວ້, ແລະ ດອກເບ້ຍຄ້າງຈ່າຍຈາກການຜິດນັດຊຳລະ EAD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 31.
- ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ ("LGD") — ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະແມ່ນການປະມານການຄວາມເສຍຫາຍທີ່ມາຈາກກໍລະນີທີ່ການຜິດນັດຊຳລະເກີດຂຶ້ນໃນເວລາທີ່ກຳນົດ ເຊິ່ງຂຶ້ນກັບສ່ວນຕ່າງລະຫວ່າງກະແສເງິນສົດຕາມສັນຍາທີ່ຄົບກຳນົດ ແລະ ບັນດາມູນຄ່າຕ່າງໆ ທີ່ຜູ້ໃຫ້ກູ້ຢືມຄາດວ່າຈະໄດ້ຮັບ, ເຊິ່ງລວມຈາກການຮັບຮູ້ບັນດາຫຼັກຊັບຄ້ຳປະກັນຕ່າງໆ. ໂດຍປົກກະຕິ LGD ແມ່ນຖືກສະແດງເປັນອັດຕາສ່ວນຮ້ອຍຂອງ EAD. LGD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 28.

ເມື່ອມີການຄາດຄະເນ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ, ສາຂາພິຈາລະນາ 3 ກໍລະນີ (ກໍລະນີຖານ, ເທິງ ແລະ ລຸ່ມ). ແຕ່ລະກໍລະນີເຫຼົ່ານີ້ແມ່ນກ່ຽວຂ້ອງກັບ PDs, EADs ແລະ LGDs ທີ່ແຕກຕ່າງກັນ. ເມື່ອມີການກ່ຽວຂ້ອງກັນ, ການປະເມີນຫຼາຍໆກໍລະນີແມ່ນຖືກລວມເຂົ້າກັນກັບວິທີທີ່ແຕ່ລະເງິນກູ້ທີ່ມີຄວາມສຳຄັນທີ່ຖືກຄາດວ່າຈະຖືກຟື້ນຟູ ເຊິ່ງລວມເອົາຄວາມອາດຈະເປັນໄປໄດ້ທີ່ເງິນກູ້ຈະຖືກຊຳລະຄືນຢ່າງກົງເວລາ ແລະ ມູນຄ່າຂອງຫຼັກຊັບຄ້ຳປະກັນ ຫຼື ມູນຄ່າທີ່ອາດຈະໄດ້ຮັບສຳລັບການຂາຍຊັບສິນ.

ລາຍຈ່າຍຄ່າເສື່ອມມູນຄ່າ ແລະ ການສູນເສຍຈະຖືກບັນທຶກ ແລະ ສະເໜີແຍກຕ່າງຫາກຈາກການດັດແກ້ກຳໄລ ຫຼື ຂາດທຶນທີ່ເກີດຈາກການດັດແກ້ມູນຄ່າຕາມບັນຊີລວມຂອງຊັບສິນທາງການເງິນ.

ເງິນແຮສຳລັບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ສຳລັບພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້ແມ່ນຖືກປະເມີນ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 5.10. *ການເສື່ອມມູນຄ່າຂອງຊັບສິນ* (ຕໍ່)

### 5.10.2 *ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ* (ຕໍ່)

ກົນໄກຂອງວິທີຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດການໄວ້ແມ່ນຖືກສະຫຼຸບດັ່ງລຸ່ມນີ້:

- ຂັ້ນທີ 1 ໜີ້ເສຍທີ່ຄາດວ່າຈະເກີດ 12 ເດືອນແມ່ນຖືກຄິດໄລ່ເປັນສ່ວນໜຶ່ງຂອງ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ຕະຫຼອດອາຍຸຂອງຊັບສິນທີ່ສະແດງເຖິງ ໜີ້ເສຍທີ່ຄາດວ່າຈະເກີດ ທີ່ມີຜົນມາຈາກເຫດການການຜິດນັດຊຳລະໃນເຄື່ອງມືທາງດ້ານການເງິນທີ່ເປັນໄປໄດ້ໃນ 12 ເດືອນຫຼັງຈາກມື້ລາຍງານ. ສາຂາຄຳນວນເງິນແຮ ໜີ້ເສຍທີ່ຄາດວ່າຈະເກີດ 12 ເດືອນໂດຍອີງໃສ່ການຄາດການການຜິດນັດຊຳລະທີ່ເກີດຂຶ້ນໃນ 12 ເດືອນຫຼັງຈາກມື້ລາຍງານ. ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ 12 ເດືອນທີ່ຄາດການໄວ້ນີ້ແມ່ນຖືກນຳໃຊ້ເພື່ອຄາດຄະເນ EAD ແລະ ຄູນກັບ LGD ທີ່ຄາດການໄວ້ ແລະ ຫຼຸດໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ. ການຄຳນວນນີ້ແມ່ນຖືກສ້າງຂຶ້ນສຳລັບແຕ່ລະກໍລະນີ ທັງ 3 ກໍລະນີດັ່ງທີ່ໄດ້ອະທິບາຍຂ້າງເທິງ.
- ຂັ້ນທີ 2 ເມື່ອເງິນກູ້ໄດ້ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມສ່ຽງສິນເຊື່ອຢ່າງມີຄວາມສຳຄັນຕັ້ງແຕ່ເລີ່ມຕົ້ນ, ສາຂາບັນທຶກເງິນແຮ ໜີ້ເສຍທີ່ຄາດວ່າຈະເກີດ ຕະຫຼອດອາຍຸຂອງຊັບສິນ. ກົນໄກນີ້ແມ່ນຄ້າຍຄືກັບທີ່ໄດ້ອະທິບາຍຂ້າງເທິງທີ່ລວມເຖິງການນຳໃຊ້ຫຼາຍກໍລະນີ ແຕ່ວ່າ PDs ແລະ LGDs ແມ່ນຖືກຄາດຄະເນຕະຫຼອດອາຍຸຂອງເຄື່ອງມື. ການຂາດແຄນເງິນສົດທີ່ຄາດການໄວ້ແມ່ນຖືກຫຼຸດຄ່າໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ.
- ຂັ້ນທີ 3 ສຳລັບເງິນກູ້ທີ່ພິຈາລະນາວ່າມີການເສື່ອມມູນຄ່າສິນເຊື່ອ, ສາຂາຮັບຮູ້ລາຍຈ່າຍຂາດທຶນສິນເຊື່ອທີ່ຄາດການໄວ້ຕະຫຼອດອາຍຸສຳລັບເງິນກູ້ເຫຼົ່ານັ້ນ. ວິທີນີ້ແມ່ນຄ້າຍຄືກັບ ຂັ້ນທີ 2 ພ້ອມກັບ PD ທີ່ຕັ້ງໄວ້ທີ່ 100%.
- POCI ຊັບສິນ POCI ແມ່ນຊັບສິນທາງການເງິນທີ່ການຮັບຮູ້ເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ທຳອິດ. ສາຂາພຽງແຕ່ຮັບຮູ້ສ່ວນປ່ຽນແປງສະສົມໃນ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ຕະຫຼອດອາຍຸຂອງຊັບສິນຕັ້ງແຕ່ການຮັບຮູ້ຄັ້ງທຳອິດ ໂດຍອີງໃສ່ຄວາມອາດຈະເປັນໄປໄດ້ແບບຖ່ວງໜັກຂອງ 3 ກໍລະນີ, ທີ່ໄດ້ຫຼຸດຄ່າໂດຍອັດຕາດອກເບ້ຍທີ່ແທ້ຈິງຂອງສິນເຊື່ອທີ່ຖືກດັດແກ້.
- ພັນທະຜູກພັນເງິນກູ້ ແລະ ໜັງສືສິນເຊື່ອ ເມື່ອການຄາດຄະເນ ໜີ້ເສຍທີ່ຄາດວ່າຈະເກີດ ຕະຫຼອດອາຍຸຂອງຊັບສິນສຳລັບພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກຈ່າຍ, ສາຂາຈະຄາດຄະເນສັດສ່ວນຂອງພັນທະຜູກພັນເງິນກູ້ທີ່ຈະຖືກເບີກຈ່າຍໃນໄລຍະອາຍຸທີ່ຄາດການໄວ້. ຫຼັງຈາກນັ້ນ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ຈະອີງໃສ່ມູນຄ່າປັດຈຸບັນຂອງການຂາດແຄນກະແສເງິນສົດທີ່ຄາດການໄວ້ຖ້າຫາກວ່າເງິນກູ້ຖືກເບີກຈ່າຍ, ໂດຍອີງໃສ່ຄວາມອາດຈະເປັນໄປໄດ້ແບບຖ່ວງໜັກໃນ 3 ກໍລະນີ. ການຂາດແຄນເງິນສົດທີ່ຄາດການໄວ້ແມ່ນຖືກຫຼຸດຄ່າທີ່ອັດຕາດອກດອກເບ້ຍທີ່ແທ້ຈິງທີ່ຄາດການໄວ້ຂອງເງິນກູ້ໂດຍປະມານການ.
  ສຳລັບພັນທະຜູກພັນເງິນກູ້ ແລະ ໜັງສືສິນເຊື່ອ, ໜີ້ເສຍທີ່ຄາດວ່າຈະເກີດ ຖືກຮັບຮູ້ພາຍໃນ *ເງິນແຮຄ່າເສື່ອມມູນຄ່າສຳລັບພັນທະຜູກພັນນອກໃບລາຍງານຖານະການເງິນພາຍໃຕ້ "ໜີ້ສິນອື່ນໆ"*.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

5.10 *ການເສື່ອມມູນຄ່າຂອງຊັບສິນ* (ຕໍ່)

5.10.2 *ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ* (ຕໍ່)

- ສັນຍາຄ້ຳປະກັນທາງດ້ານການເງິນ: ໜີ້ສິນຂອງສາຂາພາຍໃຕ້ແຕ່ລະການຄ້ຳປະກັນແມ່ນຖືກຕີມູນຄ່າໃນມູນຄ່າທີ່ສູງກວ່າໃນການຮັບຮູ້ຄັ້ງທຳອິດ ລົບກັບຄ່າເສື່ອມມູນຄ່າສະສົມທີ່ຮັບຮູ້ໃນໃບລາຍງານຜົນການດຳເນີນງານ, ແລະ ຄ່າໃຊ້ຈ່າຍ ໜີ້ເສຍທີ່ຄາດວ່າຈະເກີດ. ສຳລັບຈຸດປະສົງນີ້, ສາຂາປະເມີນ ໜີ້ເສຍທີ່ຄາດວ່າຈະເກີດ ໂດຍອີງໃສ່ມູນຄ່າປັດຈຸບັນຂອງການຊຳລະທີ່ຄາດການໄວ້ໃນການຊຳລະຄືນໃຫ້ແກ່ຜູ້ຖືສຳລັບລາຍຈ່າຍຂາດທຶນສິນເຊື່ອທີ່ເກີດຂຶ້ນ. ສ່ວນທີ່ເຫຼືອຈະຖືກຫຼຸດມູນຄ່າໂດຍດອກເບ້ຍທີ່ດັດປັບຄວາມສ່ຽງທີ່ກ່ຽວກັບຍອດເງິນກູ້ທີ່ເຫຼືອ. ການຄຳນວນແມ່ນນຳໃຊ້ຄວາມອາດຈະເປັນແບບຖ່ວງນ້ຳໜັກໃນ 3 ກໍລະນີ. ໜີ້ເສຍທີ່ຄາດວ່າຈະເກີດກ່ຽວຂ້ອງກັບສັນຍາຄ້ຳປະກັນທາງດ້ານການເງິນພ້ອມກັບ *ເງິນແຮສຳລັບພັນທະຜູກພັນນອກໃບລາຍງານຖານະການເງິນພາຍໃຕ້ "ໜີ້ສິນອື່ນໆ".*

5.10.3 *ຊັບສິນທາງການເງິນທີ່ມີການດ້ອຍຄ່າ ທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ (POCI)*

ສຳລັບຊັບສິນທາງການເງິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ (POCI), ສາຂາພຽງແຕ່ຮັບຮູ້ສ່ວນປ່ຽນແປງສະສົມໃນຜົນກຳໄລຂາດທຶນທີ່ຄາດການໄວ້ຕະຫຼອດອາຍຸຊັບສິນນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດໃນຄ່າໃຊ້ຈ່າຍເງິນແຮ.

5.10.4 *ຂໍ້ມູນທີ່ເປັນການຄາດການລ່ວງໜ້າ*

ໃນແບບຈຳລອງຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດການໄວ້, ສາຂາໄດ້ນຳໃຊ້ຂໍ້ມູນທີ່ເປັນການຄາດການລ່ວງໜ້າເປັນຂໍ້ມູນທາງເສດຖະກິດເຊັ່ນ:

- ອັດຕາການເຕີບໂຕຂອງ GDP
- ອັດຕາການວ່າງງານ
- ເງິນເຟີ້
- ດັດສະນີລາຄາທີ່ຢູ່ອາໃສ

ຂໍ້ມູນ ແລະ ແບບຈຳລອງທີ່ໄດ້ນຳໃຊ້ໃນການຄຳນວນໜີ້ເສຍທີ່ຄາດວ່າຈະເກີດຂຶ້ນທີ່ຄາດການໄວ້ອາດຈະບໍ່ກຳໄດ້ລັກສະນະພິເສດທັງໝົດຂອງຕະຫຼາດໃນວັນທີຂອງເອກະສານລາຍງານທາງດ້ານການເງິນໄດ້ຕະຫຼອດ. ເພື່ອທີ່ຈະສະທ້ອນໃຫ້ເຫັນສິ່ງເຫຼົ່ານີ້, ຈຶ່ງມີການດັດແກ້ແບບຄຸນນະພາບ ຫຼື ການທັບຊ້ອນ ເຊິ່ງເປັນການດັດແກ້ຊົ່ວຄາວເມື່ອສ່ວນຕ່າງເຫຼົ່ານັ້ນຖືວ່າມີຜົນຢ່າງສຳຄັນ.

5.11. *ການປັບປຸງສິນເຊື່ອ: ການຕີມູນຄ່າຫຼັກຊັບຄ້ຳປະກັນ ແລະ ການຄ້ຳປະກັນທາງດ້ານການເງິນ*

ເພື່ອທີ່ຈະຫຼຸດຜ່ອນຄວາມສ່ຽງທາງດ້ານສິນເຊື່ອໃນຊັບສິນທາງການເງິນ, ສາຂາຊອກຫາວິທີທີ່ຈະນຳໃຊ້ຫຼັກຊັບຄ້ຳປະກັນ, ຖ້າເປັນໄປໄດ້, ເພື່ອຫຼຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫຼັກຊັບຄ້ຳປະກັນອາດເປັນໄດ້ຫຼາຍຮູບແບບ ເຊັ່ນ ເງິນສົດ, ຫຼັກຊັບ, ໜັງສືສິນເຊື່ອ/ໜັງສືຄ້ຳປະກັນ, ອະສັງຫາລິມະຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ຫຼັກຊັບຄ້ຳປະກັນ, ຍົກເວັ້ນຖືກຍຶດຄືນ, ຈະບໍ່ຖືກບັນທຶກໃນໃບສະແດງຖານະທາງການເງິນຂອງສາຂາ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 5.11. *ການປັບປຸງສິນເຊື່ອ: ການຕີມູນຄ່າຫຼັກຊັບຄ້ຳປະກັນ ແລະ ການຄ້ຳປະກັນທາງດ້ານການເງິນ* (ຕໍ່)

ກະແສເງິນສົດທີ່ຄາດວ່າຈະມາຈາກການຍົກລະດັບສິນເຊື່ອ ເຊິ່ງບໍ່ຈຳເປັນຕ້ອງໄດ້ຮັບການຍອມຮັບແຍກຕ່າງຫາກຕາມມາດຕະຖານ IFRS ແລະ ເຊິ່ງຖືວ່າເປັນສ່ວນໜຶ່ງຂອງເງື່ອນໄຂສັນຍາຂອງເຄື່ອງມືໜີ້ທີ່ຂຶ້ນກັບ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ, ລວມຢູ່ໃນການວັດແທກຂອງ ໜີ້ເສຍທີ່ຄາດວ່າຈະເກີດ. ບົນພື້ນຖານນີ້, ມູນຄ່າຍຸຕິທຳຂອງຊັບສິນຄ້ຳປະກັນມີຜົນກະທົບຕໍ່ການຄິດໄລ່ຂອງ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ. ໂດຍທົ່ວໄປ, ຊັບສິນຄ້ຳປະກັນຖືກປະເມີນເປັນໄລຍະເວລາຕ່ຳສຸດ, ໃນການເລີ່ມຕົ້ນ ແລະ ປະເມີນຄືນໃໝ່ໃນແຕ່ລະໄຕມາດ. ເຖິງຢ່າງໃດກໍ່ຕາມ, ຫຼັກຊັບຄ້ຳປະກັນ ຈຳນວນໜຶ່ງ, ຄືຢ່າງ, ເງິນສົດ ຫຼື ຫຼັກຊັບທີ່ກ່ຽວຂ້ອງກັບຄວາມຕ້ອງການໃນຂອບທີ່ກຳນົດໄວ້ແມ່ນຖືກວັດແທກມູນຄ່າໃນແຕ່ລະວັນ.

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ສາຂາໄດ້ນຳໃຊ້ຂໍ້ມູນໃນຕະຫຼາດຊື້ຂາຍຄ່ອງສຳລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫຼັກຊັບຄ້ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ້ຳປະກັນທີ່ບໍ່ແມ່ນທາງການເງິນ, ເຊັ່ນ ອະສັງຫາລິມະຊັບຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ ເຊັ່ນ ນາຍໜ້າ, ຫຼື ດັດສະນີ ລາຄາທີ່ພັກອາໄສ.

### 5.12 *ຫຼັກຊັບຄ້ຳປະກັນທີ່ຖືກຍຶດ*

ນະໂຍບາຍຂອງສາຂາກຳນົດວ່າ ຊັບສິນທີ່ຍຶດມາສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງສາຂາ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດຍົກມາຂອງຊັບສິນທີ່ຖືກຄ້ຳປະກັນ. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍໃນມູນຄ່າຍຸຕິທຳ (ຖ້າຫາກວ່າເປັນຊັບສິນທາງການເງິນ) ແລະ ມູນຄ່າຍຸຕິທຳຫັກຕົ້ນທຶນໃນການຂາຍສຳລັບຊັບສິນທີ່ບໍ່ແມ່ນທາງດ້ານການເງິນໃນມື້ທີ່ຍຶດມາໂດຍສອດຄ່ອງກັບນະໂຍບາຍຂອງສາຂາ.

### 5.13 *ການຊຳລະສະສາງ*

ຊັບສິນທາງການເງິນຖືກຊຳລະສະສາງອອກວ່າຈະເປັນແບບພາກສ່ວນ ຫຼື ທັງໝົດ ເມື່ອສາຂາບໍ່ມີການຄາດການການຟື້ນຟູຊັບສິນທາງການເງິນທີ່ສົມເຫດສົມຜົນທັງແບບພາກສ່ວນ ແລະ ທັງໝົດ. ຖ້າຫາກວ່າມູນຄ່າທີ່ຈະຖືກຊຳລະສະສາງອອກນັ້ນຫຼາຍກວ່າລາຍຈ່າຍຂາດທຶນສິນເຊື່ອສະສົມ, ສ່ວນຕ່າງແມ່ນຖືກຈັດສັນເປັນສ່ວນເພີ່ມເຕີມໃນລາຍຈ່າຍຂາດທຶນສິນເຊື່ອ ທີ່ນຳໃຊ້ຕໍ່ມູນຄ່າຕາມບັນຊີ. ການຟື້ນຟູໃດໆໃນຕໍ່ມາແມ່ນຖືກບັນທຶກໃນລາຍຈ່າຍຂາດທຶນສິນເຊື່ອ.

### 5.14 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດທີ່ກ່າວເຖິງໃນໃບລາຍງານກະແສເງິນສົດປະກອບມີ ເງິນສົດໃນມື, ບັນຊີເງິນຝາກແບບບໍ່ບັງຄັບກັບ ທຫລ ແລະ ໜີ້ຕ້ອງຮັບຈາກທະນາຄານ ທີ່ເປັນເງິນຝາກປະເພດກະແສລາຍວັນ, ກຳນົດ 3 ເດືອນ ຫຼື ຕ່ຳກວ່ານັ້ນ.

### 5.15 *ການເຊົ່າ*

ສາຂາປະເມີນໃນສັນຍາເບື້ອງຕົ້ນວ່າ ສັນຍາເປັນສັນຍາເຊົ່າ ຫຼື ປະກອບດ້ວຍການເຊົ່າ ຫຼື ບໍ່ ໂດຍທີ່, ຖ້າສັນຍາສະແດງສິດໃນການຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ໃນໄລຍະເວລາໃດໜຶ່ງໂດຍການແລກປ່ຽນເພື່ອພິຈາລະນາ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 5.15.1 *ສາຂາໃນຖານະເປັນຜູ້ເຊົ່າ*

ສາຂານຳໃຊ້ວິທີການຮັບຮູ້ ແລະ ວັດແທກແບບດຽວ ສຳລັບສັນຍາເຊົ່າທັງໝົດ ຍົກເວັ້ນການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ. ສາຂາຮັບຮູ້ໜີ້ສິນການເຊົ່າເພື່ອດຳເນີນການຊຳລະຄ່າເຊົ່າ ແລະ ສິດນຳໃຊ້ຊັບສິນທີ່ກຳນົດການນຳໃຊ້ຊັບສິນທີ່ກ່ຽວຂ້ອງ.

*ສິດນຳໃຊ້ຊັບສິນ*

ສາຂາຮັບຮູ້ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ກ່ຽວຂ້ອງສາມາດນຳໃຊ້ໄດ້). ສິດນຳຊັບສິນແມ່ນຖືກວັດແທກເປັນຕົ້ນທຶນ, ເຊິ່ງຈະມີການຫຼຸດລົງດ້ວຍ ການສູນເສຍຈາກຄ່າເສື່ອມຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມສະສົມ ແລະ ດັດແກ້ເພື່ອປະເມີນຄືນໜີ້ສິນການເຊົ່າ. ຕົ້ນທຶນສິດນຳໃຊ້ຊັບສິນລວມມີ ມູນຄ່າໜີ້ສິນທີ່ຖືກຮັບຮູ້, ຄ່າໃຊ້ຈ່າຍໂດຍກົງໃນເບື້ອງຕົ້ນທີ່ເກີດຂຶ້ນ, ແລະ ການຊຳລະຄ່າເຊົ່າ ນະ ຫຼື ກ່ອນວັນທີເລີ່ມຕົ້ນສັນຍາໂດຍໄດ້ຮັບເງື່ອນໄຂກະຕຸ້ນຈາກການເຊົ່າທີ່ໜ້ອຍກວ່າ. ສິດການນຳໃຊ້ຊັບສິນແມ່ນມີການຫຼູ້ຍຫ້ຽນໂດຍພື້ນຖານການຄິດໄລ່ແບບສະເໝີຕົວໃນໄລຍະສັນຍາເຊົ່າ.

ສິດນຳໃຊ້ຊັບສິນແມ່ນຖືກນຳສະເໜີ ໃນບົດອະທິບາຍເລກທີ 17 ຊັບສິນ, ອຸປະກອນ ແລະ ສິດນຳໃຊ້ຊັບສິນ ແລະ ມີການເສື່ອມມູນຄ່າແບບສະເໝີຕົວຕາມນະໂຍບາຍຂອງສາຂາດັ່ງທີ່ໄດ້ອະທິບາຍໄວ້ ໃນບົດອະທິບາຍເລກທີ 5.17 *ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງການເງິນ.*

*ໜີ້ສິນຕາມສັນຍາເຊົ່າ*

ນະວັນທີເລີ່ມຕົ້ນຂອງການເຊົ່າ, ສາຂາໄດ້ຮັບຮູ້ໜີ້ສິນການເຊົ່າທີ່ໄດ້ວັດແທກເປັນໃນມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າ ທີ່ຈະເກີດຂຶ້ນໃນໄລຍະສັນຍາເຊົ່າ. ການຊຳລະຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ບໍ່ມີເງື່ອນໄຂກະຕຸ້ນຈາກການເຊົ່າທີ່ຈະໄດ້ຮັບ). ການຊຳລະຄ່າເຊົ່າແບບບໍ່ຄົງທີ່ ທີ່ຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຊຳລະຄ່າເຊົ່າຍັງລວມມີ ລາຄາທີ່ນຳໃຊ້ຂອງທາງເລືອກການຊື້ປ່າງສົມເຫດສົມຜົນທີ່ແນ່ນອນ ທີ່ຈະປະຕິບັດໂດຍສາຂາ ແລະ ການຊຳລະຄ່າປັບໃໝສຳລັບການຍຸດຕິການເຊົ່າ, ຖ້າວ່າສັນຍາເຊົ່າສະທ້ອນໃຫ້ເຫັນການໃຊ້ສິດໃນການຍຸດຕິ. ການຊຳລະຄ່າເຊົ່າທີ່ບໍ່ຄົງທີ່ໂດຍບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ແມ່ນຖືກຮັບຮູ້ເປັນລາຍຈ່າຍໃນໄລຍະເວລາທີ່ມີເຫດການ ຫຼື ເງື່ອນໄຂທີ່ກໍ່ໃຫ້ເກີດການຊຳລະເກີດຂຶ້ນ.

*ສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີມູນຄ່າຕໍ່າ*

ສາຂານຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນທີ່ມີສັນຍາເຊົ່າ 12 ເດືອນ ຫຼື ໜ້ອຍກວ່ານັບແຕ່ມື້ເລີ່ມຕົ້ນແລະບໍ່ມີຕົວເລືອກໃນການຊື້ ເຊິ່ງຍັງໃຊ້ການໃຫ້ເຊົ່າການຍົກເວັ້ນການຮັບຮູ້ຊັບສິນທີ່ມີມູນຄ່າຕໍ່າ ຕໍ່ການເຊົ່າຊັບສິນທີ່ຖືວ່າມີມູນຄ່າຕໍ່າ. ການຈ່າຍຄ່າເຊົ່າໃນການເຊົ່າໄລຍະສັ້ນ ແລະ ຄ່າເຊົ່າຊັບສິນທີ່ມີມູນຄ່າຕໍ່າ ຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍບົນພື້ນຖານຊື່ກົງກັບໄລຍະການເຊົ່າ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.16 ຊັບສິນບັດ, ອຸປະກອນ ແລະ ສິດນຳໃຊ້ຊັບສິນ*

ຊັບສິນບັດ ແລະ ອຸປະກອນ ແມ່ນລະບຸເປັນຕົ້ນທຶນ ລວມມີ ຕົ້ນທຶນການບໍລິການມື້ຕໍ່ມື້, ການຫຼຸດລົງຂອງມູນຄ່າຈາກຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງຂອງອາຍຸການນຳໃຊ້ທີ່ຄາດຄະເນ ແມ່ນໄດ້ບັນທຶກຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມ ຄວາມເໝາະສົມ ແລະ ເຮັດໃຫ້ມີ ການປ່ຽນແປງຕາມການຄາດຄະເນທາງການບັນຊີ. ສິດນຳໃຊ້ຊັບສິນຖືກນຳສະເໜີນຳກັນກັບຊັບສິນ ແລະ ອຸປະກອນຕ່າງໆໃນໃບລາຍງານຖານະທາງການເງິນ - ອ້າງອີງເຖິງນະໂຍບາຍການບັນຊີ ໃນບົດອະທິບາຍເລກທີ 6.15. ສິດນຳໃຊ້ຊັບສິນແມ່ນຖືກຄິດໄລ່ຄ່າຫຼຸ້ຍຫ້ຽນແບບວິທີສະເໝີຕົວໃນໄລຍະສັນຍາເຊົ່າ.

ຄ່າຫຼຸ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼຸ້ຍຫ້ຽນແບບສະເໝີຕົວ ເພື່ອຫຼຸດຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

| | |
|---|---|
| ການປັບປຸງຕຶກອາຄານ | 5% |
| ເຟີນິເຈີ ແລະ ເຄື່ອງຕິດຕັ້ງ | 20% |
| ຄອມພິວເຕີ | 20% |
| ພາຫະນະ | 20% |

ຊັບສິນບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສິນບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບອື່ນໆຈາກການດຳເນີນງານອື່ນໆ" ໃນໃບລາຍງານຜົນການດຳເນີນງານ ຂອງປີທີ່ຊັບສິນບັດໄດ້ຖືກສະສາງອອກ.

*5.17 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ*

ສາຂາປະເມີນນະມື້ເຮັດເອກະສານລາຍງານວ່າ ມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດສາຂາປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກມູນຄ່າທີ່ສູງກວ່າລະຫວ່າງມູນຄ່າຍຸຕິທຳຂອງຊັບສິນ ຫຼື ມູນຄ່າຍຸຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປັດຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປັດຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸຕິທຳອື່ນໆ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*5.17 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ (ຕໍ່)*

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຕົວຊີ້ບອກ, ສາຂາຈະຄາດຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນມີການປ່ຽນແປງໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປົ້ນຄືນແມ່ນຖືກກຳນົດຂຶ້ນ. ສະນັ້ນ, ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປົ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

*5.18 ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຂອງພະນັກງານຫລັງອອກການ*

ຜົນປະໂຫຍດຫຼັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບໍານານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫຼັງອອກການ.

*ຜົນປະໂຫຍດຈາກການຢຸດຈ້າງງານ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ. ສຳລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກສອງກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາ ຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກເລີກຈ້າງໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2025 ບໍ່ມີພະນັກງານສາຂາຖືກເລີກຈ້າງຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງສາຂາ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*5.19 ເງິນແຮ* (ຕໍ່)

ເງິນແຮຈະຖືກຮັບຮູ້ກໍ່ຕໍ່ເມື່ອສາຂາມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕົກລົງ) ເນື່ອງມາຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ສາຂາກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດຳເນີນງານ ພາຍຫຼັງໄດ້ຮັບເງິນຄືນ.

*5.20 ອາກອນກຳໄລ*

*ອາກອນໃນປີ*

ຊັບສິນ ແລະ ໜີ້ສິນອາກອນພາຍໃນປີສຳລັບປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນຳໃຊ້ໃນມື້ເຮັດບົດລາຍງານ ພາຍໃນປະເທດທີ່ສາຂາດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນປີທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີຂອງຜູ້ຖືຮຸ້ນ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

*ອາກອນລໍຖ້າສະສາງ*

ອາກອນລໍຖ້າສະສາງ ແມ່ນຖືກຄິດໄລ່ຈາກສ່ວນຜິດດ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ສິນອາກອນລໍຖ້າສະສາງແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນລໍຖ້າສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການ ສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຕ້ອງເສຍອາກອນ.

ຍອດຍົກມາຂອງຊັບສິນອາກອນລໍຖ້າສະສາງແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງຊັບສິນອາກອນລໍຖ້າສະສາງຈະຖືກອະນຸຍາດໃຫ້ຫັກ. ຊັບສິນອາກອນລໍຖ້າສະສາງທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດຈະອະນຸຍາດໃຫ້ຊັບສິນອາກອນລໍຖ້າສະສາງສາມາດຫັກອອກໄດ້.

ຊັບສິນອາກອນລໍຖ້າສະສາງ ແລະ ໜີ້ສິນອາກອນລໍຖ້າສະສາງແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ກະກຽມເອກະສານລາຍງານການເງິນ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 5.20 *ອາກອນກຳໄລ* (ຕໍ່)

*ອາກອນລໍຖ້າສະສາງ* (ຕໍ່)

ອາກອນພາຍໃນປີ ແລະ ອາກອນເຍື້ອນຊຳລະຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນການດຳເນີນງານ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດດ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ຊຶ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນນອກການທຸລະກິດ. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ ນອກການທຸລະກິດ ໄປໃນໃບລາຍງານຜົນການດຳເນີນງານໃນບັນຊີກຳໄລ ຫຼື ຂາດທຶນເຍື້ອນຊຳລະ. ສາຂາຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງການເງິນ ທີ່ຖືກຈັດປະເພດເປັນທຶນຕົນເອງ.

ສາຂາໄດ້ຫັກລ້າງຊັບສິນອາກອນລໍຖ້າສະສາງ ແລະ ໜີ້ສິນອາກອນລໍຖ້າສະສາງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ແລະ ສາຂາມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

### 5.21 *ມາດຕະຖານໃໝ່ ແລະ ແກ້ໄຂເພີ່ມເຕີມ*

ການແກ້ໄຂເພີ່ມເຕີມຕໍ່ກັບມາດຕະຖານການບັນຊີ IFRS ທີ່ມີຢູ່ຕອນນີ້ ມີຜົນບັງຄັບໃຊ້ສຳລັບການລາຍງານປະຈຳປີເລີ່ມວັນທີ 1 ມັງກອນ 2025:

***ການຂາດຄວາມສາມາດໃນການແລກປ່ຽນ - ການດັດແປງ IAS 21***

ສຳລັບໄລຍະເວລາການລາຍງານເລີ່ມ ຫຼື ຫຼັງວັນທີ 1 ມັງກອນ 2025, ການຂາດຄວາມສາມາດໃນການແລກປ່ຽນເງິນຕາ – ການແກ້ໄຂມາດຕະຖານການບັນຊີ IAS 21 ຜົນກະທົບຈາກການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ໄດ້ກຳນົດໃຫ້ນິຕິບຸກຄົນຕ້ອງປະເມີນວ່າເງິນຕາສາມາດແລກປ່ຽນໄດ້ ຫຼື ບໍ່ ແລະ ວິທີກຳນົດອັດຕາແລກປ່ຽນນະມື້ເກີດລາຍການເມື່ອຂາດສະພາບຄ່ອງໃນການແລກປ່ຽນເງິນຕາ.

ການແກ້ໄຂດັ່ງກ່າວຍັງກຳນົດໃຫ້ມີການເປີດເຜີຍຂໍ້ມູນເພື່ອໃຫ້ຜູ້ນຳໃຊ້ເອກະສານລາຍງານການເງິນຂອງບໍລິສັດເຂົ້າໃຈວ່າເງິນຕາບໍ່ສາມາດແລກປ່ຽນເປັນສະກຸນເງິນອື່ນໄດ້ ມີຜົນກະທົບ ຫຼື ຄາດວ່າຈະມີຜົນກະທົບຕໍ່ຜົນການດຳເນີນງານທາງດ້ານການເງິນ, ຖານະການເງິນ ແລະ ກະແສເງິນສົດຂອງສາຂາ.

ການແກ້ໄຂດັ່ງກ່າວບໍ່ໄດ້ມີຜົນກະທົບທີ່ສຳຄັນຕໍ່ເອກະສານລາຍງານການເງິນຂອງສາຂາ.

### 5.22 *ມາດຕະຖານທີ່ອອກແລ້ວແຕ່ຍັງບໍ່ທັນມີຜົນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍໃໝ່ ຫຼື ທີ່ມີການແກ້ໄຂເຊິ່ງໄດ້ປະກາດໃຊ້ແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້ ກຳລັງຢູ່ໃນລະຫວ່າງການປະເມີນໂດຍສາຂາ ເພື່ອກຳນົດຜົນກະທົບຕໍ່ເອກະສານລາຍງານການເງິນຂອງສາຂາ. ດັ່ງທີ່ໄດ້ອະທິບາຍໄວ້ຂ້າງຕົ້ນ ເຊິ່ງລວມທັງມາດຕະຖານ ແລະ ການແກ້ໄຂທີ່ໄດ້ມີຜົນບັງຄັບໃຊ້ມາດຕະຖານ ຫຼື ການແກ້ໄຂໃໝ່ ແຕ່ຍັງຢູ່ໃນຂັ້ນຕອນການຮັບຮອງໃນທ້ອງຖິ່ນ ຫຼື ເຮັດໃຫ້ມີວັນທີ່ມີຜົນບັງຄັບໃຊ້ທີ່ລ່າຊ້າກວ່າເກົ່າ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.22 ມາດຕະຖານທີ່ອອກແລ້ວແຕ່ຍັງບໍ່ທັນມີຜົນບັງຄັບໃຊ້* (ຕໍ່)

***ການແກ້ໄຂເພີ່ມເຕີມກ່ຽວກັບການຈັດປະເພດ ແລະ ການວັດແທກມູນຄ່າຂອງເຄື່ອງມືທາງການເງິນ - ການແກ້ໄຂເພີ່ມເຕີມໃນມາດຕະຖານ IFRS 9 ແລະ IFRS 7***

ວັນທີ 30 ພຶດສະພາ 2024, IASB ໄດ້ອອກແຈ້ງການແກ້ໄຂເພີ່ມເຕີມໃນມາດຕະຖານ IFRS 9 ແລະ IFRS 7 ເຊິ່ງກ່ຽວກັບການຈັດປະເພດ ແລະ ການວັດແທກມູນຄ່າຂອງເຄື່ອງມືທາງການເງິນ (ແກ້ໄຂເພີ່ມເຕີມ). ການແກ້ໄຂນີ້ລວມມີ:

- ການຊີ້ແຈ້ງກ່ຽວກັບເງື່ອນໄຂສຳລັບການຮັບຮູ້ ແລະ ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ.
- ການຊີ້ແຈງວ່າໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ "ໃນວັນທີຊຳລະ" ແລະ ແນະນຳຕົວເລືອກນະໂຍບາຍການບັນຊີ (ຫາກມີເງື່ອນໄຂສະເພາະ) ເພື່ອຢຸດຮັບຮູ້ໜີ້ສິນທາງການເງິນທີ່ຊຳລະຜ່ານລະບົບການຊຳລະເງິນທາງອີເລັກໂຕຼນິກກ່ອນວັນຊຳລະເງິນ.
- ແນວທາງເພີ່ມເຕີມເພື່ອປະເມີນກະແສເງິນສົດຕາມສັນຍາຂອງຊັບສັນການເງິນທີ່ມີອົງປະກອບດ້ານ (ESG) ຫຼື ມີຄຸນລັກສະນະຄ້າຍຄືກັນ.
- ການຊີ້ແຈງວ່າກ່ຽວກັບສິ່ງທີ່ຖືເປັນ "ຄຸນລັກສະນະບໍ່ສາມາດໄລ່ເບ້ຍໄດ້" ແລະ ລັກສະນະຂອງເຄື່ອງມືທີ່ເຊື່ອມໂຍງຕາມສັນຍາ.
- ການນຳໃຊ້ການເຜີຍແຜ່ໃໝ່ສຳລັບເຄື່ອງມືການເງິນທີ່ມີເງື່ອນໄຂຕາມເຫດການ ແລະ ການເພີ່ມຂໍ້ກຳນົດການເຜີຍແຜ່ສຳລັບເຄື່ອງມືທຶນທີ່ຖືກຈັດປະເພດຕາມມູນຄ່າຍຸດຕິທຳຜ່ານລາຍຮັບສັງລວມອື່ນ (OCI)"

ການແກ້ໄຂນີ້ຈະມີຜົນບັງຄັບໃຊ້ສຳລັບໄລຍະເວລາເລີ່ມຕົ້ນ ຫຼື ຫຼັງວັນທີ 1 ມັງກອນ 2026.

ການປັບປຸງກ່ຽວກັບການຢຸດຮັບຮູ້ໜີ້ສິນທາງການເງິນທີ່ຊຳລະຜ່ານທາງເອເລັກໂຕຣນິກ, ສາຂາໄດ້ດຳເນີນການປະເມີນລະບົບການຈ່າຍທາງເອເລັກໂຕຣນິກທີ່ສຳຄັນທັງໝົດທີ່ໃຊ້ໃນຂອບເຂດຕ່າງໆທີ່ດຳເນີນການ.

ລະບົບການຊຳລະທາງເອເລັກໂຕຣນິກສ່ວນຫຼາຍທີ່ສາຂາໃຊ້ແມ່ນການຊຳລະແບບທັນທີ. ມີລະບົບການຊຳລະທາງເອເລັກໂຕຣນິກບາງສ່ວນເທົ່ານັ້ນທີ່ສາຂາໃຊ້ທີ່ບໍ່ແມ່ນແບບທັນທີ. ສຳລັບແບບປະເພດນີ້, ສາຂາໄດ້ຢຸດຮັບຮູ້ໜີ້ສິນທາງການເງິນ ແລະ ເງິນທີ່ກ່ຽວຂ້ອງໃນເວລາທີ່ສົ່ງຄຳແນະນຳເລື່ອງການຈ່າຍເງິນ. ເພື່ອໃຫ້ສອດຄ່ອງກັບການປັບປຸງດັ່ງກ່າວ, ສາຂາຈະປ່ຽນແປງການປະຕິບັດໃນປັດຈຸບັນຕໍ່ກັບການຢຸດຮັບຮູ້ໜີ້ສິນທາງການເງິນ ແລະ ເງິນທີ່ກ່ຽວຂ້ອງເມື່ອການຈ່າຍເງິນໄປເຖິງຜູ້ຮັບຜົນປະໂຫຍດ, ຊຶ່ງແມ່ນເມື່ອພັນທະນັ້ນຖືກໂອນ. ເຖິງຢ່າງໃດກໍຕາມ, ໂດຍທີ່ມີບາງຈຳນວນຈຳກັດຂອງລະບົບການຊຳລະທາງເອເລັກໂຕຣນິກທີ່ສາຂາໃຊ້ ແລະ ມູນຄ່າຂອງການຈ່າຍເງິນຕໍ່າ, ການປັບປຸງນັ້ນຄາດວ່າຈະບໍ່ມີຜົນກະທົບທີ່ເປັນສາລະສຳຄັນ. ສາຂາໄດ້ຕັດສິນໃຈວ່າຈະບໍ່ໃຊ້ທາງເລືອກຂອງນະໂຍບາຍບັນຊີທີ່ຢຸດຮັບຮູ້ໜີ້ສິນທາງການເງິນກ່ອນວັນທີການຊຳລະ. ນອກຈາກນັ້ນ, ສາຂາຍັງໄດ້ທົບທວນລະບົບການຈ່າຍອື່ນໆ (ເຊັ່ນ ແຊັກ, ບັດເຄຼດິດ, ບັດເດບິດ) ແລະ ສະຫຼຸບວ່າ ນະໂຍບາຍການຮັບຮູ້ ແລະ ການຢຸດຮັບຮູ້ແມ່ນສອດຄ່ອງກັບມາດຕະຖານການປັບປຸງແລ້ວ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 5.22 *ມາດຕະຖານທີ່ໄດ້ນຳສະເໜີແຕ່ຍັງບໍ່ທັນມີຜົນບັງຄັບໃຊ້* (ຕໍ່)

***ສັນຍາທີ່ອ້າງອີງໄຟຟ້າຈາກທຳມະຊາດ – ການແກ້ໄຂໃນມາດຕະຖານ IFRS 9 ແລະ IFRS 7***

ໃນເດືອນທັນວາ 2024, IASB ໄດ້ອອກການປັບປຸງ IFRS 9 ແລະ IFRS 7 - ສັນຍາທີ່ອ້າງຈາກໄຟຟ້າທຳມະຊາດ. ການປັບປຸງດັ່ງກ່າວໃຊ້ໄດ້ພຽງແຕ່ກັບສັນຍາທີ່ອ້າງຈາກໄຟຟ້າທຳມະຊາດເທົ່ານັ້ນ. ການດັດແປງມີດັ່ງລຸ່ມນີ້:

- ຊີ້ແຈງການນຳໃຊ້ຂໍ້ກຳນົດ "ເພື່ອນຳໃຊ້ເອງ" ສຳລັບສັນຍາທີ່ຢູ່ໃນຂອບເຂດ
- ແກ້ໄຂຂໍ້ກຳນົດການກຳນົດລາຍການປ້ອງກັນຄວາມສ່ຽງໃນຄວາມສຳພັນທາງການເງິນກະແສເງິນສົດ ສຳລັບສັນຍາທີ່ຢູ່ໃນຂອບເຂດ
- ເພີ່ມຂໍ້ກຳນົດການເຜີຍແຜ່ໃໝ່ ເພື່ອໃຫ້ນັກລົງທຶນເຂົ້າໃຈຜົນກະທົບຂອງສັນຍາດັ່ງກ່າວຕໍ່ການດຳເນີນງານ ແລະ ກະແສເງິນສົດຂອງສາຂາ.

ການດັດແປງຈະມີຜົນກະທົບຕໍ່ໄລຍະການລາຍງານປະຈຳປີເລີ່ມຕົ້ນ ຫຼື ຫຼັງວັນທີ 1 ມັງກອນ 2026. ອະນຸຍາດໃຫ້ນຳໃຊ້ກ່ອນ, ແຕ່ຕ້ອງມີການເປີດເຜີຍ. ການປັບປຸງກ່ຽວກັບການຍົກເວັ້ນຈະຖືກນຳໃຊ້ຄືນຫລັງ, ໃນຂະນະທີ່ການປັບປຸງບັນຊີການປ້ອງກັນຄວນຖືກນຳໃຊ້ໃນອະນາຄົດກັບຄວາມສຳພັນໃໝ່ທີ່ກຳນົດໄວ້ນັບຕັ້ງແຕ່ວັນທີທີ່ໃຫ້ນຳໃຊ້ເປັນເທື່ອທຳອິດ. ນອກຈາກນັ້ນ, ການປັບປຸງການເປີດເຜີຍຂອງ IFRS 7 ຕ້ອງຖືກນຳໃຊ້ພ້ອມກັບການປັບປຸງ IFRS 9. ຖ້າສາຂາບໍ່ກ່າວຂໍ້ມູນປຽບທຽບຄືນອີກ ກໍບໍ່ສາມາດສະເໜີການເປີດເຜີຍປຽບທຽບໄດ້.

ສາຂາຄາດຫວັງວ່າການດັດແປງຈະບໍ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ລາຍງານການເງິນ.

***ມາດຕະຖານ IFRS 18 ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ***

ໃນເດືອນ ເມສາ 2024, IASB ໄດ້ອອກມາດຕະຖານ IFRS 18 ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ ເຊິ່ງມາປ່ຽນແທນ IAS 1 ການນາສະເໜີເອກະສານລາຍງານການເງິນ. IFRS 18 ແນະນຳຂໍ້ກຳນົດໃໝ່ສຳລັບການນຳສະເໜີໃນໃບລາຍງານກຳໄລ ຫຼື ຂາດທຶນ ເຊິ່ງລວມທັງຍອດທັງໝົດ ແລະ ຍອດຍ່ອຍທີ່ກຳນົດໄວ້. ນອກຈາກນີ້ ສາຂາຕ້ອງຈັດປະເພດລາຍຮັບ ແລະ ຄ່າໃຊ້ຈ່າຍທັງໝົດຢູ່ໃນໃບລາຍງານກຳໄລ ຫຼື ຂາດທຶນ ເປັນ 1 ໃນ 5 ປະເພດໄດ້ແກ່: ການດຳເນີນງານ, ການລົງທຶນ, ການເງິນ, ອາກອນລາຍໄດ້ ແລະ ການດຳເນີນງານທີ່ຍົກເລີກໄປແລ້ວ, ເຊິ່ງໃນ 3 ປະເພດທາອິດນັ້ນເປັນປະເພດໃໝ່. ທັ້ງນີ້ ມາດຕະຖານນີ້ຍັງມີຂໍ້ກຳນົດສະເພາະສຳລັບການນຳສະເໜີ ແລະ ຕົວເລືອກສຳລັບສາຂາ ເຊັ່ນວ່າ: Good Bank ທີ່ມີກິດຈະກຳທຸລະກິດຫຼັກທີ່ລະບຸໄວ້ (ບໍ່ວ່າຈະເປັນການໃຫ້ບໍລິການທາງການເງິນແກ່ລູກຄ້າ ຫຼື ການລົງທຶນໃນຊັບສິນປະເພດສະເພາະ ຫຼື ທັງສອງຢ່າງ)

ມາດຕະຖານຍັງມີຂໍ້ກຳນົດໃຫ້ເປີດເຜີຍຂໍ້ມູນກ່ຽວກັບມາດວັດຜົນການດຳເນີນງານທີ່ກຳນົດໂດຍຜູ້ບໍລິຫານ ເຊິ່ງເປັນຍອດຍ່ອຍຂອງລາຍໄດ້ ແລະ ຄ່າໃຊ້ຈ່າຍ ລວມທັງຂໍ້ກຳນົດໃໝ່ສຳລັບການລວມ ແລະ ການແຍກລາຍລະອຽດຂໍ້ມູນທາງການເງິນໂດຍອີງຕາມ "ບົດບາດ" ຂອງເອກະສານລາຍງານການເງິນຫຼັກ ແລະ ບົດອະທິບາຍຊ້ອນທ້າຍ. ນອກຈາກນັ້ນ, ມີການແກ້ໄຂຂອບເຂດສະເພາະສຳລັບ IAS 7 ໃບລາຍງານກະແສເງິນສົດ ເຊິ່ງລວມທັງການປ່ຽນຈຸດເລີ່ມຕົ້ນສຳລັບການພິຈາລະນາກະແສເງິນສົດຈາກການດຳເນີນງານພາຍໃຕ້ວິທີທາງອ້ອມ "ກຳໄລ ຫຼື ຂາດທຶນ" ເປັນ "ກຳໄລ ຫຼື ຂາດທຶນຈາກການດຳເນີນງານ" ແລະ ຍົກເລີກຕົວເລືອກກ່ຽວກັບການຈັດປະເພດກະແສເງິນສົດຈາກເງິນປັນຜົນ ແລະ ດອກເບ້ຍ, ນອກຈາກນີ້ ຍັງມີການແກ້ໄຂມາດຕະຖານອື່ນໆ ທີ່ກ່ຽວຂ້ອງອີກຫຼາຍຂໍ້.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.22 ມາດຕະຖານທີ່ໄດ້ນຳສະເໜີແຕ່ຍັງບໍ່ທັນມີຜົນບັງຄັບໃຊ້* (ຕໍ່)

***ມາດຕະຖານ IFRS 18 ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ*** (ຕໍ່)

ສາຂາກຳລັງປະເມີນເພື່ອຊອກຫາຜົນກະທົບຂອງມາດຕະຖານທີ່ຈະມີຜົນເບື້ອງຕົ້ນຕໍ່ເອກະສານລາຍງານການເງິນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ. ສາຂາພິຈາລະນາວ່າກິດຈະກຳທາງທຸລະກິດຫຼັກລວມເຖິງການໃຫ້ເງິນແກ່ລູກຄ້າ ແລະ ການລົງທຶນໃນຊັບສິນທາງດ້ານການເງິນ. ອີງຕາມ IFRS 18, ລາຍຮັບ ແລະ ລາຍຈ່າຍບາງຢ່າງທີ່ກ່ຽວພັນກັບກິດຈະກຳດັ່ງກ່າວຈະຖືກຈັດປະເພດພາຍໃຕ້ກິດຈະກຳການດຳເນີນງານ, ຊຶ່ງເປັນການຍົກເວັ້ນຈາກຂໍ້ຮຽກຮ້ອງທົ່ວໄປ ທີ່ຈະນຳໄປສູ່ການຈັດປະເພດພາຍໃຕ້ ກິດຈະກຳການລົງທຶນ ຫຼື ການເງິນ.

ຜົນກະທົບທີ່ສຳຄັນເບື້ອງຕົ້ນຂອງ IFRS 18 ຕໍ່ເອກະສານລາຍງານການເງິນຂອງສາຂາມີດັ່ງຕໍ່ໄປນີ້:

- ລາຍຮັບ ແລະ ລາຍຈ່າຍ ດັ່ງຕໍ່ໄປນີ້ຈະຖືກຈັດປະເພດເປັນກິດຈະກຳການດຳເນີນງານໃນບົດລາຍງານກຳໄລ ຫຼື ຂາດທຶນ: (ກ) ເງິນສົດ ແລະ ທຽບເທົ່າເງິນສົດ; (ຂ) ໜີ້ສິນຈາກການດຳເນີນທຸລະກິດທີ່ກ່ຽວຂ້ອງກັບການຈັດຫາເງິນເທົ່ານັ້ນ; (ຄ) ໂດຍທົ່ວໄປ, ຊັບສິນທີ່ລົງທຶນເປັນສ່ວນໜຶ່ງຂອງກິດຈະກຳທາງທຸລະກິດຫຼັກຂອງສາຂາໃນການລົງທຶນໃນຊັບສິນທາງການເງິນທີ່ສ້າງຜົນປະໂຫຍດເປັນແຕ່ລະລາຍການ ແລະ ສ່ວນໃຫຍ່ບໍ່ຂຶ້ນກັບຊັບພະຍາກອນອື່ນໆຂອງສາຂາ.
- ສ່ວນຕ່າງຈາກການແລກປ່ຽນເງິນຕາຕ່າງປະເທດຈະຖືກຈັດປະເພດເປັນປະເພດດຽວກັນກັບລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງເຊິ່ງເຮັດໃຫ້ເກີດສ່ວນຕ່າງຈາກການແລກປ່ຽນ, ຍົກເວັ້ນບາງຢ່າງທີ່ລະບຸໄວ້.
- ກຳໄລ ແລະ ຂາດທຶນຂອງເຄື່ອງມືປ້ອງກັນຄວາມສ່ຽງ, ລວມທັງເຄື່ອງມືທີ່ບໍ່ໄດ້ຖືກກຳນົດໄວ້, ແຕ່ຖືກໃຊ້ເພື່ອຈັດການກັບຄວາມສ່ຽງທີ່ລະບຸໄວ້, ຈະຖືກຈັດປະເພດໃນປະເພດດຽວກັນກັບລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງກັບຄວາມສ່ຽງທີ່ໄດ້ຮັບການປົກປ້ອງ, ຍົກເວັ້ນບາງຢ່າງ.
- ສຳລັບໃບລາຍງານກະແສເງິນສົດ, 'ກຳໄລຈາກການດຳເນີນງານ' ລວມຍອດຍ່ອຍຈະຖືກນຳໃຊ້ເປັນຈຸດເລີ່ມຕົ້ນໃນການກຳນົດກະແສເງິນສົດຈາກກິດຈະກຳການດຳເນີນງານ. ນອກຈາກນັ້ນ, ການຈັດປະເພດຈາກເງິນສົດທີ່ໄດ້ຮັບທັງໝົດຈາກເງິນປັນຜົນ, ດອກເບ້ຍທັງໝົດທີ່ຈ່າຍ ແລະ ດອກເບ້ຍທັງໝົດທີ່ໄດ້ຮັບ ຈະຖືກຈັດປະເພດເປັນປະເພດດຽວໃນໃບລາຍງານລາຍກະແສເງິນສົດຕາມການຈຳແນກລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງໃນໃບລາຍງານກຳໄລ ຫຼື ຂາດທຶນ.
- ການເປີດເຜີຍໃໝ່ຈະຖືກເພີ່ມເຕີມສຳລັບ: (ກ) ວັດແທກການດຳເນີນງານທີ່ຝ່າຍບໍລິຫານກຳນົດໄວ້; (ຂ) ລາຍຈ່າຍທີ່ກຳນົດໄວ້ຕາມເນື້ອໃນ ຖ້າລາຍຈ່າຍຖືກສະເໜີຕາມໜ້າທີ່ໃນປະເພດການດຳເນີນງານຂອງໃບລາຍງານກຳໄລ ຫຼື ຂາດທຶນ;
- ການກະທົບຍອດສຳລັບແຕ່ລະລາຍການໃນໃບລາຍງານຜົນກຳໄລ ຫຼື ຂາດທຶນ ລະຫວ່າງຈຳນວນທີ່ສະເໜີຄືນໃໝ່ພາຍໃຕ້ IFRS 18 ແລະ ຈຳນວນທີ່ສະເໜີກ່ອນໜ້ານີ້ພາຍໃຕ້ IAS 1.

## 6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນຂອງສາຂາ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດຈະເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງສາຂາ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫຼາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນປີການບັນຊີໃນຕໍ່ໜ້າ. ສາຂາໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກຳນົດເວລາທີ່ມີການລາຍງານທາງດ້ານການເງິນທີ່ຖືກສ້າງຂຶ້ນ. ສະພາບການ ແລະ ສົມມຸດຖານ ກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫຼາດ ຫຼື ສະພາບການທີ່ຄວບຄຸມສາຂາ ແລະ ຖືກສະທ້ອນໃນສົມມຸດຖານ ຖ້າຫາກເມື່ອເກີດຂຶ້ນ. ລາຍການທີ່ມີຜົນກະທົບຢ່າງມີສາລະສຳຄັນຕໍ່ຈຳນວນເງິນທີ່ຮັບຮູ້ໃນລາຍງານການເງິນ ພ້ອມດ້ວຍການຕັດສິນ/ຫຼື ການຄາດຄະເນຂອງຜູ້ຈັດການຢ່າງມີສາລະສຳຄັນໄດ້ສະທ້ອນໃຫ້ເຫັນໃນສ່ວນທີ່ກ່ຽວກັບຄຳຕັດສິນ /ຫຼື ການຄາດຄະເນ ທີ່ກ່ຽວຂ້ອງ.

### *6.1 ການຂາດທຶນຈາກຄ່າເສື່ອມມູນຄ່າຂອງຊັບສິນທາງການເງິນ*

ການຕີມູນຄ່າ ຄ່າເສື່ອມມູນຄ່າໜີ້ເສຍທັງພາຍໃຕ້ IFRS 9 ໃນທຸກໆປະເພດຂອງຊັບສິນທາງການເງິນໃນຂອບເຂດທີ່ຕ້ອງໃຊ້ການພິຈາລະນາ ໂດຍສະເພາະການຄາດຄະເນມູນຄ່າ ແລະ ເວລາຂອງກະແສເງິນສົດໃນອະນາຄົດໄດ້ ແລະ ມູນຄ່າຫຼັກຊັບຄ້ຳປະກັນເມື່ອພິຈາລະນາຄ່າເສື່ອມມູນຄ່າໜີ້ເສຍ ແລະ ປະເມີນການທີ່ເພີ່ມຢ່າງມີຄວາມສຳຄັນໃນຄວາມສ່ຽງດ້ານສິນເຊື່ອ. ການຄາດຄະເນເຫຼົ່ານີ້ແມ່ນຂັບເຄື່ອນມາຈາກບັນດາປັດໄຈ, ສ່ວນປ່ຽນແປງທີ່ສາມາດມີຜົນເຮັດໃຫ້ມີຄວາມແຕກຕ່າງໃນແຕ່ລະລະດັບຂອງຄ່າໃຊ້ຈ່າຍ. ການຄຳນວນໜີ້ເສຍທີ່ຄາດວ່າຈະເກີດຂຶ້ນຂອງສາຂາແມ່ນຜົນມາຈາກຮູບແບບທີ່ຊັບຊ້ອນກັບບັນດາຂໍ້ສົມມຸດຖານທີ່ກ່ຽວຂ້ອງກັບທາງເລືອກຂອງຕົວປ່ຽນຂໍ້ມູນທີ່ປ້ອນເຂົ້າ ແລະ ທັງສອງລວມກັນ. ອົງປະກອບຂອງຮູບແບບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນທີ່ພິຈາລະນາບັນດາຂໍ້ພິຈາລະນາ ແລະ ການຄາດຄະເນທາງບັນຊີດັ່ງນີ້:

- ຮູບແບບການໃຫ້ຄະແນນສິນເຊື່ອພາຍໃນຂອງສາຂາ, ເຊິ່ງລະບຸຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະໃນແຕ່ລະຄະແນນ
- ເງື່ອນໄຂສຳລັບການປະເມີນຂອງສາຂາວ່າມີການເພີ່ມຂຶ້ນທີ່ສຳຄັນໃນຄວາມສ່ຽງສິນເຊື່ອ ຫຼື ບໍ່ ແລະ ດັ່ງນັ້ນຄ່າໃຊ້ຈ່າຍສຳລັບຊັບສິນທາງການເງິນຄວນຈະຖືກຕີມູນຄ່າບົນພື້ນຖານ LT ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ແລະ ການປະເມີນທາງດ້ານຄຸນນະພາບ
- ການແບ່ງສ່ວນຊັບສິນທາງການເງິນເມື່ອໜີ້ເສຍທີ່ຄາດວ່າຈະເກີດຂຶ້ນຖືກປະເມີນແບບເປັນກຸ່ມ
- ການພັດທະນາຮູບແບບ ໜີ້ເສຍທີ່ຄາດວ່າຈະເກີດ, ເຊິ່ງລວມເອົາບັນດາສູດຄິດໄລ່ ແລະ ຕົວເລືອກຂອງຂໍ້ມູນທີ່ປ້ອນເຂົ້າ
- ການກຳນົດຄວາມສຳພັນລະຫວ່າງສະຖານະການເສດຖະສາດມະຫາພາກ ແລະ, ຂໍ້ມູນທາງເສດຖະສາດທີ່ປ້ອນເຂົ້າ, ເຊັ່ນວ່າລະດັບການຫວ່າງງານ ແລະ ມູນຄ່າຫຼັກຊັບຄ້ຳປະກັນ, ແລະ ຜົນກະທົບໃນ PDs, EADs ແລະ LGDs
- ການເລືອກສະຖານະການເສດຖະສາດມະຫາພາກທີ່ຄາດການລ່ວງໜ້າ ແລະ ຄວາມອາດຈະເປັນໄປໄດ້ແບບຖ່ວງນ້ຳໜັກ ເພື່ອເປັນຂໍ້ມູນທາງເສດຖະສາດທີ່ປ້ອນເຂົ້າໃນຮູບແບບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ

ສາຂາມີນະໂຍບາຍທີ່ຈະຕ້ອງກວດສອບຄືນບັນດາຮູບແບບໃນແຕ່ລະບໍລິບົດຂອງປະສົບການຂາດທຶນທີ່ເກີດຂຶ້ນຈິງ ແລະ ດັດແກ້ຮູບແບບເມື່ອຈຳເປັນ.

**6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)**

*6.2 ຄວາມສືບເນື່ອງໃນການດຳເນີນທຸລະກິດ*

ຄະນະບໍລິຫານຂອງສາຂາໄດ້ປະເມີນຄວາມອາດສາມາດຂອງສາຂາ ກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າສາຂາມີແຫລ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິຫານບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງສາຂາ ເພື່ອສືບຕໍ່ດຳເນີນງານກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນຍັງສືບຕໍ່ສ້າງຂຶ້ນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

*6.3 ມູນຄ່າຍຸຕິທຳຂອງເຄື່ອງມືທາງການເງິນ*

ມູນຄ່າຍຸຕິທຳຂອງບັນດາເຄື່ອງມືການເງິນແມ່ນລາຄາທີ່ຄວນຈະໄດ້ຮັບຈາກການຂາຍຊັບສິນ ຫຼື ໄດ້ຈ່າຍສຳລັບການໂອນໜີ້ສິນ ຕາມລາຍການເຄື່ອນໄຫວອຢູ່ປົກກະຕິຢູ່ໃນຕະຫຼາດຫຼັກ (ຫຼື ໃຫ້ຜົນປະໂຫຍດສູງສຸດ) ນະເວລາທີວັດແທກພາຍໃຕ້ເງື່ອນໄຂຕະຫຼາດໃນປະຈຸບັນ (ລາຄາຈິງ) ໂດຍບໍ່ຄຳນຶງເຖິງວ່າເປັນລາຄາຈາກການສັງເກດການຕົວຈິງ ຫຼື ຈາກການຄາດຄະເນຈາກການນຳໃຊ້ເຕັກນິກການຕີມູນຄ່າອື່ນ. ໃນເວລາທີ່ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນຖືກບັນທຶກໃນໃບລາຍງານຖານະການເງິນແລ້ວ ແມ່ນບໍ່ສາມາດປ່ຽນໄປຕາມການເຄື່ອນໄຫວຂອງຕະຫຼາດ, ເຊິ່ງໄດ້ກຳນົດວິທີເຕັກນິກການຕີມູນຄ່າລວມເຖິງຮູບແບບການຕີມູນຄ່າ. ປັດໃຈຂອງຮູບແບບເຫຼົ່ານີ້ໄດ້ມາຈາກການສັງເກດການຄວາມເປັນໄປໄດ້ໃນຕະຫຼາດ, ແຕ່ວ່າຖ້າຫາກບໍ່ມີຄວາມເປັນໄປໄດ້, ການຄາດຄະແນແມ່ນມາຈາກການສ້າງມູນຄ່າຍຸຕິທຳ. ການຕັດສິນໃຈ ແລະ ການຄາດຄະເນ ລວມເຖິງການພິຈາລະນາດ້ານສະພາບຄ່ອງ ແລະ ຮູບແບບຂອງປັດໃຈທີ່ກ່ຽວຂ້ອງກັບລາຍການຄວາມສ່ຽງດ້ານໜີ້ສິນ (ທັງສ່ວນເຈົ້າຂອງ ແລະ ພາກສ່ວນທີ່ກ່ຽວຂ້ອງ), ການດັດແກ້ມູນຄ່າທຶນ, ຄວາມສຳພັນກັນ ແລະ ການເໜັງຕີງ. ສຳລັບລາຍລະອຽດອື່ນໆກ່ຽວກັບການກຳນົດມູນຄ່າຍຸຕິທຳ ກະລຸນາເບິ່ງບົດອະທິບາຍເລກທີ 6.6 ແລະ ບົດອະທິບາຍເລກທີ 33

*6.4 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ (EIR)*

ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງຂອງສາຂາ, ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5.2.1, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຂອງເງິນທີ່ໄດ້ຮັບຄືນຄົງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໃໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອີງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

*6.5 ເງິນແຮ ແລະ ໜີ້ສິນອື່ນໆທີ່ອາດເກີດຂຶ້ນ*

ສາຂາໄດ້ດຳເນີນງານພາຍໃຕ້ສະພາບແວດລ້ອມຂອງລະບຽບການ ແລະ ກົດໝາຍ, ຕາມຄຸນລັກສະນະແລ້ວຈະມີອົງປະກອບຂອງຄວາມສ່ຽງດ້ານການດຳເນີນຄະດີທີ່ເພີ່ມສູງຂຶ້ນ ເຊິ່ງມີຢູ່ໃນການດຳເນີນງານ ດ້ວຍເຫດນີ້ຈຶ່ງມີພາກສ່ວນກ່ຽວຂ້ອງໃນການດຳເນີນຄະດີຕ່າງໆ, ການໄກ່ເກ່ຍ ແລະ ດຳເນີນການກວດກາ ແລະ ດຳເນີນຄະດີຕ່າງໆໃນ ສປປ ລາວ ເຊິ່ງຈະເກີດຂຶ້ນສະເພາະດ້ານຂອງທຸລະກິດສາຂາ.

**6. ການຄາດຄະເນທີ່ສໍາຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)**

*6.5 ເງິນແຮ ແລະ ໜີ້ສິນອື່ນໆທີ່ອາດເກີດຂຶ້ນ (ຕໍ່)*

ເມື່ອສາຂາສາມາດວັດຜົນກະທົບທາງດ້ານເສດຖະກິດທີ່ກ່ຽວຂ້ອງກັບກໍລະນີສະເພາະ ແລະ ພິຈາລະນາລາຍຈ່າຍດັ່ງກ່າວອາດຈະເປັນລາຍຈ່າຍໄດ້, ສາຂາຈະບັນທຶກເງິນແຮຕໍ່ກັບກໍລະນີດັ່ງກ່າວ. ໃນກໍລະນີທີ່ຄວາມນ່າຈະເປັນຂອງກະແສອອກ ຍັງຢູ່ໃນໄລຍະດົນນານ ຫຼື ເປັນໄປໄດ້ ແຕ່ບໍ່ສາມາດເຊື່ອຖືການຄາດຄະເນໄດ້, ໜີ້ສິນອື່ນໆທີ່ອາດເກີດຂຶ້ນຈະຖືກເປີດເຜີຍ. ເຖິງຢ່າງໃດກໍ່ຕາມ ເມື່ອສາຂາມີຄວາມເຫັນວ່າການເປີດເຜີຍການຄາດຄະເນເຫຼົ່ານີ້ເປັນແຕ່ກໍລະນີຈະສົ່ງຜົນເສຍຕໍ່ຜົນໄດ້ຮັບຂອງພວກເຂົາ, ດັ່ງນັ້ນ ສາຂາຈະບໍ່ລວມເອົາການເປີດເຜີຍລາຍລະອຽດ ແລະ ສະເພາະເຈາະຈົງໃສ່ໃນເອກະສານລາຍງານການເງິນ. ດ້ວຍຫົວຂໍ້ ແລະ ຄວາມບໍ່ແນ່ນອນໃນການກໍານົດຄວາມເປັນໄປໄດ້ ແລະ ຈໍານວນການສູນເສຍ, ສາຂາຕ້ອງຄໍານຶງເຖິງຫຼາຍປັດໄຈລວມທັງຄໍາແນະນໍາດ້ານກົດໝາຍ, ຂັ້ນຕອນຂອງບັນຫາ ແລະ ຫຼັກຖານປະຫວັດສາດຈາກເຫດການທີ່ຄ້າຍຄືກັນ. ການຕັດສິນໃຈທີ່ສໍາຄັນແມ່ນ ຈໍາເປັນຫຼາຍໃນການໃຊ້ສະຫຼຸບການຄາດຄະເນເຫຼົ່ານີ້.

*6.6 ການກໍານົດເງື່ອນໄຂການເຊົ່າສັນຍາທີ່ກໍານົດທາງເລືອກຕໍ່ສັນຍາ ແລະ ຍົກເລີກສັນຍາເຊົ່າ (ສາຂາໃນຖານະຜູ້ເຊົ່າ)*

ສາຂາໄດ້ກໍານົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ,ຫຼື ໄລຍະເວລາໃດໜຶ່ງທີ່ກວມເອົາທາງເລືອກທີ່ຈະຍົກເລີກສັນຍາເຊົ່າ. ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

ສາຂາມີສັນຍາເຊົ່າຫຼາຍສັນຍາ ທີ່ລະບຸທາງເລືອກໃນການຕໍ່ສັນຍາ ແລະ ການຍົກເລີກສັນຍາເຊົ່າ. ສາຂານໍາໃຊ້ການຕັດສິນໃຈໃນການປະເມີນວ່າ ມີເຫດຜົນທີ່ແນ່ນອນບໍ ທີ່ຈະສືບຕໍ່ໃນການຕໍ່ອາຍຸສັນຍາ ຫຼື ຍົກເລີກສັນຍາເຊົ່າ. ການພິຈາລະນາທຸກໆປັດໄຈທີ່ກ່ຽວຂ້ອງທີ່ຈະສ້າງແຮງຈູງໃຈທາງເສດຖະກິດໃນການຕໍ່ອາຍຸສັນຍາ ຫຼື ຍົກເລີກສັນຍາເຊົ່າ. ຫຼັງຈາກມື້ທີ່ເລີ່ມການເຊົ່າ ,ສາຂາໄດ້ໃຫ້ການປະເມີນຄືນສັນຍາເຊົ່າ ຖ້າຫາກມີເຫດການທີ່ສໍາຄັນ ຫຼື ການປ່ຽນແປງໃນສະພາບການທີ່ຢູ່ໃນການຄວບຄຸມ ທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການດໍາເນີນການ ຫຼື ບໍ່ດໍາເນີນທາງເລືອກໃນການຕໍ່ສັນຍາ ຫຼື ຍົກເລີກສັນຍາ (ຕົວຢ່າງ ການກໍ່ສ້າງຂອງການປັບປຸງຕຶກອາຄານທີ່ສໍາຄັນ ຫຼື ການດັດແກ້ທີ່ສໍາຄັນຂອງຊັບສິນທີ່ເຊົ່າ ).

*6.7 ການຄາດຄະເນອັດຕາການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມ*

ສາຂາບໍ່ສາມາດກໍານົດອັດຕາດອກເບ້ຍສ່ວນຫຼຸດໃນການເຊົ່າ. ດັ່ງນັ້ນ, ຈຶ່ງໄດ້ນໍາໃຊ້ອັດຕາດຽວກັນກັບອັດຕາການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມ (IBR) ຕາມທະນາຄານແມ່ ເພື່ອວັດແທກໜີ້ຕ້ອງສົ່ງສັນຍາເຊົ່າ. IBR ແມ່ນອັດຕາດອກເບ້ຍທີ່ສາຂາຈະຕ້ອງຈ່າຍໃນການກູ້ຢືມຕາມອາຍຸສັນຍາທີ່ຄ້າຍຄືກັນ ແລະ ຕາມຫຼັກຊັບທີ່ຄ້າຍຄືກັນ, ທຶນທີ່ຈໍາເປັນເພື່ອໃຫ້ໄດ້ມາມູນຄ່າທີ່ໃກ້ຄຽງກັບມູນຄ່າຂອງສິດນໍາໃຊ້ຊັບສິນ ໃນສະພາບແວດລ້ອມທາງເສດຖະກິດທີ່ຄ້າຍຄືກັນ. IBR ຈະສະທ້ອນເຖິງສິ່ງທີ່ ສາຂາ 'ຈະຕ້ອງຈ່າຍ', ເຊິ່ງຮຽກຮ້ອງການຄາດຄະເນເມື່ອອັດຕາບໍ່ສາມາດສໍາຫຼວດໄດ້ (ເຊັ່ນ ສໍາລັບບໍລິສັດໃນເຄືອທີ່ບໍ່ມີທຸລະກໍາທາງການເງິນ) ຫຼື ອັດຕາການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມຈໍາຕ້ອງມີການດັດແກ້ເພື່ອສະທ້ອນເຖິງອາຍຸ ແລະ ເງື່ອນໄຂຂອງສັນຍາເຊົ່າ (ຕົວຢ່າງ ເມື່ອສັນຍາເຊົ່າບໍ່ແມ່ນສະກຸນເງິນໃນການດໍາເນີນງານຂອງບໍລິສັດໃນເຄືອ). ສາຂາຄາດຄະເນ IBR ໂດຍນໍາໃຊ້ຂໍ້ມູນທີ່ສາມາດສໍາຫຼວດໄດ້ (ເຊັ່ນ ອັດຕາດອກເບ້ຍໃນຕະຫຼາດ) ແລະ ຮຽກຮ້ອງທີ່ໃຫ້ມີການດັດແກ້ສະເພາະຂອງວິສາຫະກິດ.

## 7. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | 2025<br>*ກີບ* | 2024<br>*ກີບ* |
|---|---|---|
| *ລາຍຮັບດອກເບ້ຍທີ່ໄດ້ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງຈາກ:* | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | 2,691,987,317,927 | 3,076,387,408,028 |
| ເງິນກູ້ໃຫ້ລູກຄ້າ | 325,080,191,435 | 504,276,834,050 |
| ການລົງທຶນທາງການເງິນ - ຖືຄອງຈົນຄົບກຳນົດ | 477,238,307,087 | 577,797,209,413 |
| | **3,494,305,816,449** | **4,158,461,451,491** |

## 8. ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ

| | 2025<br>*ກີບ* | 2024<br>*ກີບ* |
|---|---|---|
| *ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບ:* | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | 220,343,585,070 | 705,909,496,783 |
| ໜີ້ຕ້ອງສົ່ງລູກຄ້າ | 356,523,948,951 | 323,212,101,662 |
| ໜີ້ກູ້ຢືມຈາກກອງທຶນອື່ນໆ | 1,090,106,368,629 | 933,725,055,356 |
| ດອກເບ້ຍຈາກໜີ້ສິນການເຊົ່າ | 1,409,334,173 | 1,527,198,077 |
| | **1,668,383,236,823** | **1,964,373,851,878** |

## 9. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ການບໍລິການ

| | 2025<br>*ກີບ* | 2024<br>*ກີບ* |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ:** | | |
| ລາຍຮັບຄ່າທຳນຽມຈາກການສະໜອງການບໍລິການດ້ານການເງິນນະເວລານັ້ນ: | | |
| ກິດຈະກຳດ້ານການເງິນທີ່ເກີດຈາກການຄ້າ | 407,317,811,766 | 519,560,390,614 |
| | **407,317,811,766** | **519,560,390,614** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:** | | |
| ບໍລິການອື່ນໆ | (10,180,147,929) | (13,534,724,839) |
| | **(10,180,147,929)** | **(13,534,724,839)** |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **397,137,663,837** | **506,025,665,775** |

**10. ກຳໄລ/(ຂາດທຶນ) ສຸດທິຈາກການຊື້ - ຂາຍເງິນຕາຕ່າງປະເທດ**

| | *2025* *ກີບ* | *2024* *ກີບ* |
|---|---|---|
| ກຳໄລຈາກການຊື້ - ຂາຍເງິນຕາຕ່າງປະເທດ | 91,815,104,875 | 309,018,694,794 |
| ຂາດທຶນຈາກການຊື້ - ຂາຍເງິນຕາຕ່າງປະເທດ | (205,833,240,762) | (128,373,968,901) |
| | **(114,018,135,887)** | **180,644,725,893** |

**11. ເກັບຄືນ ແລະ ລາຍຈ່າຍຈາກໜີ້ເສຍສິນເຊື່ອ**

ຕາຕະລາງລຸ່ມນີ້ສະແດງລາຍຈ່າຍໜີ້ທີ່ຄາດວ່າຈະເກີດຂຶ້ນທີ່ຄາດການໄວ້ໃນເຄື່ອງມືທາງດ້ານການເງິນພາຍໃຕ້ IFRS 9 ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025:

| | *ບົດອະທິບາຍເລກທີ* | *ຂັ້ນທີ 1* *ກີບ* | *ຂັ້ນທີ 2* *ກີບ* | *ລວມ* *ກີບ* |
|---|---|---|---|---|
| ໜີ້ຕ້ອງຮັບຈາກທະນາຄານອື່ນ | 15 | (507,014,351,051) | - | (507,014,351,051) |
| ເງິນກູ້ໃຫ້ແກ່ລູກຄ້າ | 16 | (15,710,795,800) | - | (15,710,795,800) |
| ການລົງທຶນທາງການເງິນ - ຖືຄອງຈົນຄົບກຳນົດ | 19 | (75,505,874,539) | - | (75,505,874,539) |
| ຊັບສິນທີ່ຕິດຕາມນອກຜັງບັນຊີ | | (42,930,834,659) | - | (42,930,834,659) |
| | | **(641,161,856,049)** | **-** | **(641,161,856,049)** |

ຕາຕະລາງລຸ່ມນີ້ສະແດງລາຍຈ່າຍໜີ້ທີ່ຄາດວ່າຈະເກີດຂຶ້ນທີ່ຄາດການໄວ້ໃນເຄື່ອງມືທາງດ້ານການເງິນພາຍໃຕ້ IFRS 9 ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024:

| | *ບົດອະທິບາຍເລກທີ* | *ຂັ້ນທີ 1* *ກີບ* | *ຂັ້ນທີ 2* *ກີບ* | *ລວມ* *ກີບ* |
|---|---|---|---|---|
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | 537,978,009,050 | - | 537,978,009,950 |
| ເງິນກູ້ໃຫ້ແກ່ລູກຄ້າ | | (17,461,864,919) | (392,976,793,415) | (410,438,658,334) |
| ການລົງທຶນທາງການເງິນ - ຖືຄອງຈົນຄົບກຳນົດ | | 76,566,819,708 | - | 76,566,819,708 |
| ຊັບສິນທີ່ຕິດຕາມນອກຜັງບັນຊີ | | 40,653,575,249 | - | 40,653,575,249 |
| | | **637,736,539,988** | **(392,976,793,415)** | **244,759,746,573** |

## 12. ລາຍຈ່າຍພະນັກງານ

| | 2025<br>*ກີບ* | 2024<br>*ກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນເດືອນ | 134,208,300,570 | 140,271,568,742 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 18,219,976,696 | 21,292,842,994 |
| | **152,428,277,266** | **161,564,411,736** |

## 13. ລາຍຈ່າຍອື່ນໆໃນການດຳເນີນງານ

| | 2025<br>*ກີບ* | 2024<br>*ກີບ* |
|---|---|---|
| ຄ່າປະກັນໄພ | 23,513,939,030 | 22,098,236,882 |
| ລາຍຈ່າຍການຕະຫຼາດ | 18,336,802,661 | 17,934,077,108 |
| ຄ່າສື່ສານໂທລະຄົມມະນາຄົມ | 7,367,607,757 | 7,760,966,229 |
| ຄ່າອຸປະກອນອື່ນໆ | 5,349,569,323 | 5,000,533,202 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 3,750,239,344 | 3,645,820,176 |
| ຄ່ານ້ຳ ແລະ ຄ່າໄຟຟ້າ | 2,510,969,088 | 2,308,251,654 |
| ຄ່າເດີນທາງ ແລະ ຕ້ອນຮັບແຂກ | 1,922,664,178 | 2,665,529,918 |
| ຄ່າທີ່ປຶກສາ | 1,584,883,800 | 1,979,936,760 |
| ຄ່າເຄື່ອງໃຊ້ຫ້ອງການ | 530,593,529 | 388,442,896 |
| ຄ່າກວດສອບ | 366,762,604 | 289,941,031 |
| ອື່ນໆ | 5,805,874,760 | 2,882,845,150 |
| | **71,039,906,074** | **66,954,581,007** |

## 14. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

| | 31/12/2025<br>*ກີບ* | 31/12/2024<br>*ກີບ* |
|---|---|---|
| ເງິນສົດໃນຄັງ ສະກຸນເງິນກີບ | 26,414,723,500 | 15,760,568,500 |
| ເງິນສົດໃນຄັງ ສະກຸນເງິນຕາຕ່າງປະເທດ | 330,725,317,955 | 264,728,513,603 |
| **ເງິນຝາກກັບ ທຫລ** | **5,339,939,610,995** | **2,905,558,713,814** |
| - *ເງິນຝາກກະແສລາຍວັນ* | *2,467,288,143,526* | *525,527,450,444* |
| - *ເງິນແຮຝາກບັງຄັບ (*)* | *2,872,646,467,469* | *2,380,026,263,370* |
| - *ເງິນຝາກຄ້ຳປະກັນທຶນຈົດທະບຽນ (**)* | *5,000,000* | *5,000,000* |
| | **5,697,079,652,450** | **3,186,047,795,917** |

## 14. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ") (ຕໍ່)

ຍອດຄົງເຫຼືອເງິນຝາກກັບ ທຫລ ລວມມີ ເງິນຝາກກະແສລາຍວັນ, ເງິນແຮຝາກບັງຄັບ, ແລະ ເງິນຝາກຄ້ຳປະກັນທຶນຈົດທະບຽນແມ່ນບໍ່ໄດ້ຮັບອັດຕາດອກເບ້ຍ.

(*) ອີງຕາມຂໍ້ກໍານົດຂອງ ທຫລ, ສາຂາໄດ້ຖືກຮຽກຮ້ອງໃຫ້ຮັກສາເງິນສົດໃນຄັງໄວ້ກັບ ທຫລ ໃນຮູບແບບເງິນແຮຝາກບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 8.00% ສໍາລັບສະກຸນເງິນກີບ ແລະ 11.00% ສໍາລັບສະກຸນເງິນຕາຕ່າງປະເທດ (2024: 8.00% ສໍາລັບສະກຸນເງິນ ແລະ 11.00% ສໍາລັບເງິນຕາຕ່າງປະເທດ) 2 ເດືອນຕໍ່ຄັ້ງ ຂອງຍອດເງິນຝາກລູກຄ້າທີ່ມີກໍານົດຕໍ່າກ່ວາ 12 ເດືອນ. ພາຍໃນປີສາຂາຮັກສາເງິນແຮຝາກບັງຄັບຕາມການກໍານົດຂອງ ທຫລ. ພາຍໃນປີ, ສາຂາໄດ້ຮັກສາເງິນແຮຝາກບັງຄັບ ເພື່ອໃຫ້ສອດຄ່ອງກັບຂໍ້ກໍານົດຂອງ ທຫລ.

(**) ອີງຕາມຂໍ້ຕົກລົງສະບັບເລກທີ 721/ທຫລ ອອກໂດຍ ທຫລ, ລົງວັນທີ 22 ກັນຍາ 2022, ເຊິ່ງມີຜົນສັກສິດນັບແຕ່ວັນທີ 22 ກັນຍາ 2022 ເປັນຕົ້ນໄປ, ທະນາຄານທຸລະກິດຕ້ອງຮັກສາຍອດຄົງເຫຼືອໃຫ້ເປັນຄ່າບວກໄວ້ທະນາຄານແຫ່ງ ສປປ ລາວໃນຮູບແບບທີ່ເປັນເງິນຝາກສະເພາະ.

## 15. ເງິນຝາກຢູ່ທະນາຄານອື່ນ

| | *31/12/2025* *ກີບ* | *31/12/2024* *ກີບ* |
|---|---|---|
| ເງິນຝາກກະແສລາຍວັນຢູ່ທະນາຄານພາຍໃນປະເທດ | 14,838,587,090 | 27,626,260,352 |
| ເງິນຝາກກະແສລາຍວັນຢູ່ທະນາຄານຕ່າງປະເທດ | 3,570,719,466,443 | 2,443,579,663,659 |
| ເງິນຝາກມີກໍານົດຢູ່ທະນາຄານພາຍໃນປະເທດ | 32,083,326,095,238 | 32,862,746,775,707 |
| ເງິນຝາກມີກໍານົດຢູ່ທະນາຄານຕ່າງປະເທດ | 25,073,176,850,636 | 26,278,708,397,656 |
| ເງິນແຮສໍາລັບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ | (2,022,359,921,208) | (2,543,325,698,808) |
| | **58,719,701,078,199** | **59,069,335,398,566** |

ໄລຍະເວລາ ແລະ ອັດຕາດອກເບ້ຍຂອງເງິນຝາກມີກໍານົດດັ່ງກ່າວ ນະວັນທີ 31 ທັນວາ 2025 ແມ່ນມີດັ່ງລຸ່ມນີ້:

| | *ໄລຍະເວລາ* | *ອັດຕາດອກເບ້ຍ (% ຕໍ່ປີ)* |
|---|---|---|
| ເງິນຝາກມີກໍານົດລະຫວ່າງທະນາຄານພາຍໃນປະເທດ | 12 ເດືອນ | 5.40 – 7.72% |
| ເງິນຝາກມີກໍານົດລະຫວ່າງທະນາຄານຕ່າງປະເທດ | 12 ເດືອນ | 2.25 – 6.00% |

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນນະພາບສິນເຊື່ອ ແລະ ຍອດທຸລະກໍາສູງສຸດ ແກ່ຄວາມສ່ຽງຂອງສິນເຊື່ອອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລໍາດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງຄ່າໃຊ້ຈ່າຍຄ່າເສື່ອມມູນຄ່າທັງໝົດ. ສໍາລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍເລກທີ 28.

**15.** **ເງິນຝາກຢູ່ທະນາຄານອື່ນ** (ຕໍ່)

| | *31/12/2025*<br>*ຂັ້ນທີ 1*<br>*ກີບ* | *31/12/2024*<br>*ຂັ້ນທີ 1*<br>*ກີບ* |
|---|---|---|
| ເກີດດອກອອກຜົນ | 60,742,060,999,406 | 61,612,661,097,374 |
| ບໍ່ເກີດດອກອອກຜົນ | - | - |
| | **60,742,060,999,406** | **61,612,661,097,374** |

ການວິເຄາະສ່ວນປ່ຽນແປງໃນມູນຄ່າຕາມບັນຊີແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ກີບ* |
|---|---|
| **ມູນຄ່າຕາມບັນຊີທັງໝົດນະວັນທີ 1 ມັງກອນ 2025** | **61,612,661,097,374** |
| ຊັບສິນທີ່ໄດ້ສ້າງຂຶ້ນ ຫຼື ຊື້ເຂົ້າໃໝ່ | 58,849,698,074,753 |
| ການຈ່າຍຄືນ ແລະ ການຢຸດຮັບຮູ້ຊັບສິນ | (60,226,587,345,331) |
| ການດັດແກ້ອັດຕາແລກປ່ຽນຕ່າງປະເທດ | 506,289,172,610 |
| **ນະວັນທີ 31 ທັນວາ 2025** | **60,742,060,999,406** |

## 15. ເງິນຝາກຢູ່ທະນາຄານອື່ນ (ຕໍ່)

ການວິເຄາະສ່ວນປ່ຽນແປງຂອງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນທັງໝົດແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ກີບ* |
|---|---|
| **ເງິນແຮໜີ້ທີ່ຄາດວ່າຈະເກີດຂຶ້ນນະວັນທີ 1 ມັງກອນ 2025** | **2,543,325,698,808** |
| ເກັບຄືນໜີ້ເສຍທີ່ຄາດວ່າຈະເກີດຂຶ້ນສຸດທິ | (520,965,777,600) |
| *ປະກອບມີ:* | |
| *ຊັບສິນທີ່ໄດ້ສ້າງຂຶ້ນ ຫຼື ຊື້ເຂົ້າໃໝ່* | *2,022,358,893,942* |
| *ຢຸດຮັບຮູ້ໜີ້ ຫຼື ຊຳລະຄືນ (ບໍ່ລວມລ້າງອອກ)* | *(2,529,373,244,993)* |
| *ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ* | *-* |
| *ການດັດແກ້ອັດຕາແລກປ່ຽນຕ່າງປະເທດ* | *(13,951,426,549)* |
| **ນະວັນທີ 31 ທັນວາ 2025** | **2,022,359,921,208** |
| | |
| ການປ່ຽນແປງຂອງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນພາຍໃນປີ | (520,965,777,600) |
| ອັດຕາແລກປ່ຽນເງິນຕາຕ່າງປະເທດ | 13,951,426,549 |
| **ລວມຍອດເກັບຄືນໜີ້ເສຍທີ່ຄາດວ່າຈະເກີດໃນໃບລາຍງານຜົນການດຳເນີນງານພາຍໃນປີ** | **(507,014,351,051)** |

## 16. ເງິນກູ້ໃຫ້ແກ່ລູກຄ້າ

| | *31/12/2025*<br>*ກີບ* | *31/12/2024*<br>*ກີບ* |
|---|---|---|
| ເງິນກູ້ໃຫ້ແກ່ລູກຄ້າ | 6,982,804,536,847 | 5,573,891,739,825 |
| ຫັກ: ເງິນແຮສຳລັບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ | (164,196,103,019) | (179,695,918,353) |
| | **6,818,608,433,828** | **5,394,195,821,472** |

ອັດຕາດອກເບ້ຍສຳລັບເງິນກູ້ໃຫ້ແກ່ລູກຄ້າ ພາຍໃນປີແມ່ນມີດັ່ງລຸ່ມນີ້:

| | *2025*<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* | *2024*<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* |
|---|---|---|
| ເງິນກູ້ທີ່ເປັນເງິນຢວນ | 2.30 – 4.0 | 3.00 – 3.66 |
| ເງິນກູ້ທີ່ເປັນເງິນໂດລາ | 5.7 – 7.73 | 6.60 – 11.55 |
| ເງິນກູ້ທີ່ເປັນເງິນກີບ | 10.50 | - |

## 16. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

*ການວິເຄາະເງິນກູ້ໃຫ້ແກ່ລູກຄ້າ*

*ວິເຄາະໂດຍສະກຸນເງິນ*

| | 31/12/2025<br>*ກີບ* | 31/12/2024<br>*ກີບ* |
|---|---|---|
| ເງິນກູ້ທີ່ເປັນເງິນຢວນ | 4,231,664,417,694 | 1,311,971,127,893 |
| ເງິນກູ້ທີ່ເປັນເງິນໂດລາ | 2,747,263,608,971 | 4,213,025,612,564 |
| ເງິນກູ້ທີ່ເປັນເງິນເອີໂຣ | - | 3,732,641,462 |
| ເງິນກູ້ທີ່ເປັນເງິນບາດ | 275,573,694 | 354,057,214 |
| ເງິນກູ້ທີ່ເປັນເງິນກີບ | 3,600,935,621 | 44,808,299,977 |
| | **6,982,804,535,980** | **5,573,891,739,110** |

*ວິເຄາະຕາມໄລຍະເວລາເຄີ່ມ*

| | 31/12/2025<br>*ກີບ* | 31/12/2024<br>*ກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 4,235,568,737,335 | 223,052,605,785 |
| ເງິນກູ້ໄລຍະກາງ | 153,285,486,023 | 1,861,054,762,528 |
| ເງິນກູ້ໄລຍະຍາວ | 2,593,950,312,622 | 3,489,784,370,797 |
| | **6,982,804,535,980** | **5,573,891,739,110** |

*ວິເຄາະຕາມຂະແໜງເສດຖະກິດ*

| | 31/12/2025<br>*ກີບ* | 31/12/2024<br>*ກີບ* |
|---|---|---|
| ຂະແໜງອຸດສາຫະກຳ | 1,895,997,376,348 | 1,247,861,143,618 |
| ຂະແໜງການກໍ່ສ້າງ | 86,137,452,645 | 182,021,629,968 |
| ຂະແໜງການປະກອບສ່ວນປະກອບ ແລະ ເຕັກນິກທີ່ກ່ຽວຂ້ອງ | 30,563,068,611 | - |
| ຂະແໜງກະສິກຳ ແລະ ປ່າໄມ້ | 760,779,944,275 | - |
| ຂະແໜງການຄ້າ | 430,864,853,133 | 67,810,863,237 |
| ຂະແໜງບໍລິການ | 640,363,918,975 | 424,810,618,046 |
| ສ່ວນບຸກຄົນ | - | 1,697,872,612 |
| ອື່ນໆ | 3,138,097,921,993 | 3,649,689,611,629 |
| | **6,982,804,535,980** | **5,573,891,739,110** |

**16.** ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

*ເງິນແຮຄ່າເສື່ອມມູນຄ່າສຳລັບເງິນກູ້ໃຫ້ແກ່ລູກຄ້າ*

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນນະພາບສິນເຊື່ອ ແລະ ຄວາມສ່ຽງດ້ານສິນເຊື່ອສູງສຸດອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລຳດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນຄ່າທັງໝົດ. ສຳລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍເລກທີ 28.

| | 31/12/2025 | | | |
|---|---|---|---|---|
| | *ຂັ້ນທີ 1* | *ຂັ້ນທີ 2* | *ຂັ້ນທີ 3* | *ລວມ* |
| | *ກີບ* | *ກີບ* | *ກີບ* | *ກີບ* |
| ເກີດດອກອອກຜົນ | 6,982,804,536,847 | - | - | 6,982,804,536,847 |
| ບໍ່ເກີດດອກອອກຜົນ | - | - | - | - |
| | **6,982,804,536,847** | **-** | **-** | **6,982,804,536,847** |

| | 31/12/2024 | | | |
|---|---|---|---|---|
| | *ຂັ້ນທີ 1* | *ຂັ້ນທີ 2* | *ຂັ້ນທີ 3* | *ລວມ* |
| | *ກີບ* | *ກີບ* | *ກີບ* | *ກີບ* |
| ເກີດດອກອອກຜົນ | 5,573,891,739,825 | - | - | 5,573,891,739,825 |
| ບໍ່ເກີດດອກອອກຜົນ | - | - | - | - |
| | **5,573,891,739,825** | **-** | **-** | **5,573,891,739,825** |

**16.** ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

*ເງິນແຮຄ່າເສື່ອມມູນຄ່າສຳລັບເງິນກູ້ໃຫ້ແກ່ລູກຄ້າ* (ຕໍ່)

ການວິເຄາະສ່ວນປ່ຽນແປງໃນມູນຄ່າຕາມບັນຊີທັງໝົດ ແລະ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1* | | *ຂັ້ນທີ 2* | | *ຂັ້ນທີ 3* | | ລວມ | |
|---|---|---|---|---|---|---|---|---|
| | ມູນຄ່າຕາມບັນຊີ | ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ | ມູນຄ່າຕາມບັນຊີ | ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ | ມູນຄ່າຕາມບັນຊີ | ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ | ມູນຄ່າຕາມບັນຊີ | ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ |
| | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ |
| **ນະວັນທີ 1 ມັງກອນ 2025** | **5,573,892** | **179,696** | - | - | - | - | **5,573,892** | **179,696** |
| ສ່ວນປ່ຽນແປງພາຍໃນປີ | 1,408,913 | (15,500) | - | - | - | - | 1,406,913 | (15,500) |
| *ປະກອບມີ:* | | | | | | | | |
| ຊັບສິນທີ່ເກີດຂຶ້ນໃໝ່ ຫຼື ຊື້ເຂົ້າໃໝ່ | 3,232,640 | 19,044 | - | - | - | - | 3,232,640 | 19,044 |
| *ຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມສະສາງອອກ)* | (1,813,759) | (34,755) | - | - | - | - | (1,813,759) | (34,755) |
| *ຍ້າຍໄປຫາຂັ້ນທີ 1* | - | - | - | - | - | - | - | - |
| *ຍ້າຍໄປຫາຂັ້ນທີ 2* | - | - | - | - | - | - | - | - |
| *ຍ້າຍໄປຫາຂັ້ນທີ 3* | - | - | - | - | - | - | - | - |
| *ສະສາງອອກ* | - | - | - | - | - | - | - | - |
| *ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ* | - | - | - | - | - | - | - | - |

**16.** ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

*ເງິນແຮຄ່າເສື່ອມມູນຄ່າສຳລັບເງິນກູ້ໃຫ້ແກ່ລູກຄ້າ* (ຕໍ່)

| | | | | | | | | | |
|---|---|---|---|---|---|---|---|---|---|
| ອັດຕາແລກປ່ຽນເງິນຕາ ຕ່າງປະເທດ | - | - | - | - | - | - | - | - |
| *ກຳໄລ/(ຂາດທຶນ)ທາງການເງິນ* | *(9,968)* | *211* | - | - | - | - | *(9,968)* | *211* |
| **ນະວັນທີ 31 ທັນວາ 2025** | **6,982,805** | **164,196** | **-** | **-** | **-** | **-** | **6,982,805** | **164,196** |

| | |
|---|---|
| ການປ່ຽນແປງຂອງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນພາຍໃນປີ | (15,500) |
| ອັດຕາແລກປ່ຽນເງິນຕາຕ່າງປະເທດ | (211) |
| **ລວມຍອດເກັບຄືນໜີ້ເສຍທີ່ຄາດວ່າຈະເກີດໃນໃບລາຍງານຜົນການດຳເນີນງານພາຍໃນປີ** | **(15,711)** |

## 17. ຊັບສິນບັກຄົງທີ່, ອຸປະກອນ ແລະ ສິດໃນການນຳໃຊ້ຊັບສິນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ ແລະ ອຸປະກອນ ແລະ ສິດນຳໃຊ້ຊັບສິນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ມີດັ່ງນີ້:

| | *ການປັບປຸງອາຄານ* | *ເຟີນີເຈີ ແລະ ເຄື່ອງໃຊ້ຫ້ອງການ* | *ເຄື່ອງໃຊ້ໄຟຟ້າ* | *ພາຫະນະ* | *ສິດນຳໃຊ້ທີ່ດິນ* | *ລວມ* |
|---|---|---|---|---|---|---|
| | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* |
| **ຕົ້ນທຶນ:** | | | | | | |
| ນະວັນທີ 1 ມັງກອນ 2025 | 301,576,172,566 | 27,370,382,578 | 30,774,925,964 | 7,329,574,737 | 115,106,414,450 | 482,157,470,295 |
| ຮັບເຂົ້າໃນປີ | - | 392,617,100 | 6,584,117,485 | - | - | 6,976,734,585 |
| ສະສາງອອກ | - | - | (238,913,375) | - | (1,184,872,627) | (1,423,786,002) |
| ນະວັນທີ 31 ທັນວາ 2025 | 301,576,172,566 | 27,762,999,678 | 37,120,130,074 | 7,329,574,737 | 113,921,541,823 | 487,710,418,878 |
| **ຄ່າຫຼູ້ຍຫ້ຽນສະສົມ:** | | | | | | |
| ນະວັນທີ 1 ມັງກອນ 2025 | (147,093,211,517) | (24,273,354,741) | (24,152,304,495) | (7,329,574,737) | (16,602,527,261) | (219,450,972,752) |
| ຄ່າຫຼູ້ຍຫ້ຽນພາຍໃນປີ | (15,068,487,848) | (1,381,272,344) | (3,150,670,443) | - | (1,874,294,792) | (21,474,725,427) |
| ສະສາງອອກ | - | - | 238,913,375 | - | 1,184,872,627 | 1,423,786,002 |
| ນະວັນທີ 31 ທັນວາ 2025 | (162,161,699,365) | (25,654,627,085) | (27,064,061,564) | (7,329,574,737) | (17,291,949,426) | (239,501,912,177) |
| **ມູນຄ່າສຸດທິ:** | | | | | | |
| ນະວັນທີ 1 ມັງກອນ 2025 | 154,482,961,049 | 3,097,027,837 | 6,622,621,468 | - | 98,503,887,189 | 262,706,497,543 |
| ນະວັນທີ 31 ທັນວາ 2025 | 139,414,473,201 | 2,108,372,593 | 10,056,068,510 | - | 96,629,592,397 | 248,208,506,701 |

## 17. ຊັບສິນບັດຄົງທີ່, ອຸປະກອນ ແລະ ສິດໃນການນຳໃຊ້ຊັບສິນ (ຕໍ່)

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ ແລະ ອຸປະກອນ ແລະ ສິດນຳໃຊ້ຊັບສິນ ສຳລັບປີທີສິ້ນສຸດວັນທີ 31 ທັນວາ 2024 ມີດັ່ງນີ້:

| | *ການປັບປຸງອາຄານ* | *ເຟີນີເຈີ ແລະ ເຄື່ອງໃຊ້ຫ້ອງການ* | *ເຄື່ອງໃຊ້ໄຟຟ້າ* | *ພາຫະນະ* | *ສິດນຳໃຊ້ທີ່ດິນ* | *ລວມ* |
|---|---|---|---|---|---|---|
| | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* |
| **ຕົ້ນທຶນ:** | | | | | | |
| ນະວັນທີ 1 ມັງກອນ 2024 | 301,576,172,566 | 26,831,062,468 | 29,419,759,811 | 7,329,574,737 | 113,161,107,400 | 478,317,676,982 |
| ຮັບເຂົ້າໃນປີ | - | 539,320,110 | 1,355,166,153 | - | 1,945,307,050 | 3,839,793,313 |
| ນະວັນທີ 31 ທັນວາ 2024 | 301,576,172,566 | 27,370,382,578 | 30,774,925,964 | 7,329,574,737 | 115,106,414,450 | 482,157,470,295 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | | |
| ນະວັນທີ 1 ມັງກອນ 2024 | (131,983,440,140) | (22,842,995,313) | (21,119,962,953) | (7,329,574,737) | (14,882,553,236) | (198,158,526,379) |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | (15,109,771,377) | (1,430,359,428) | (3,032,341,543) | - | (1,719,974,025) | (21,292,446,373) |
| ນະວັນທີ 31 ທັນວາ 2024 | (147,093,211,517) | (24,273,354,741) | (24,152,304,496) | (7,329,574,737) | (16,602,527,261) | (219,450,972,752) |
| **ມູນຄ່າສຸດທິ:** | | | | | | |
| ນະວັນທີ 1 ມັງກອນ 2024 | 169,592,732,426 | 3,988,067,155 | 8,299,796,858 | - | 98,278,554,164 | 280,159,150,603 |
| ນະວັນທີ 31 ທັນວາ 2024 | 154,482,961,049 | 3,097,027,837 | 6,622,621,468 | - | 98,503,887,189 | 262,706,497,543 |

**17. ຊັບສິນບັດຄົງທີ່, ອຸປະກອນ ແລະ ສິດໃນການນໍາໃຊ້ຊັບສິນ** (ຕໍ່)

ລາຍການຂ້າງລຸ່ມນີ້ແມ່ນຍອດຍົກມາຈາກໜີ້ຕ້ອງສົ່ງສັນຍາເຊົ່າ (ລວມທັງລາຍການອື່ນໆພາຍໃຕ້ 'ໜີ້ສິນອື່ນໆ' ໃນບົດອະທິບາຍເລກທີ 23) ແລະ ຍອດການເຄື່ອນໄຫວໃນປີ ມີດັ່ງນີ້:

| | *31/12/2025*<br>*ກີບ* |
|---|---|
| **ນະວັນທີ 31 ທັນວາ 2024** | **1,261,847,450** |
| ດອກເບ້ຍຄ້າງຮັບ | 50,835,834 |
| ການຊໍາລະ | (613,611,600) |
| ສ່ວນຕ່າງເງິນຕາຕ່າງປະເທດ | 130,517,724 |
| **ນະວັນທີ 31 ທັນວາ 2025** | **829,589,408** |

**18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ**

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ມີດັ່ງນີ້:

| | ຊອຟແວ<br>ກີບ |
|---|---|
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2025 | 5,895,266,277 |
| ຮັບເຂົ້າໃນປີ | - |
| ນະວັນທີ 31 ທັນວາ 2025 | 5,895,266,277 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2025 | (3,293,074,404) |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | (1,027,263,248) |
| ນະວັນທີ 31 ທັນວາ 2025 | (4,320,337,652) |
| **ມູນຄ່າສຸດທິ:** | |
| ນະວັນທີ 1 ມັງກອນ 2025 | 2,602,191,873 |
| ນະວັນທີ 31 ທັນວາ 2025 | 1,574,928,625 |

## 18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ (ຕໍ່)

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສໍາລັບປີທີສິ້ນສຸດວັນທີ 31 ທັນວາ 2024 ມີດັ່ງນີ້:

| | ຊອຟແວ<br>ກີບ |
|---|---|
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2024 | 4,314,311,661 |
| ຮັບເຂົ້າໃນປີ | 1,580,954,616 |
| ນະວັນທີ 31 ທັນວາ 2024 | 5,895,266,277 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2024 | (2,413,477,895) |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | (879,596,509) |
| ນະວັນທີ 31 ທັນວາ 2024 | (3,293,074,404) |
| **ມູນຄ່າສຸດທິ:** | |
| ນະວັນທີ 1 ມັງກອນ 2024 | 1,900,833,766 |
| ນະວັນທີ 31 ທັນວາ 2024 | 2,602,191,873 |

## 19. ການລົງທຶນທາງການເງິນ - ຖືຄອງຈົນຄົບກໍານົດ

| | *31/12/2025*<br>ກີບ | *31/12/2024*<br>ກີບ |
|---|---|---|
| ລົງທຶນໃນພັນທະບັດ | 6,446,287,976,502 | 7,271,855,780,502 |
| ຫັກ: ເງິນແຮສໍາລັບໜີ້ເສຍທີ່ອາດຈະເກີດ | (419,575,906,754) | (504,701,708,208) |
| | **6,026,712,069,747** | **6,767,154,072,294** |

ລາຍລະອຽດຂອງພັນທະບັດດ້ວຍອັດຕາດອກເບ້ຍດັ່ງລຸ່ມນີ້:

| | *2025*<br>*% / ປີ* | *2024*<br>*% / ປີ* |
|---|---|---|
| ພາຍໃນ 1 ປີ | 9.12 – 9.45 | 7.30 – 12.09 |
| 1 ຫາ 5 ປີ | 4.25 – 6.80 | 3.95 – 4.25 |

**19. ການລົງທຶນທາງການເງິນ - ຖືຄອງຈົນຄົບກຳນົດ (ຕໍ່)**

*ຄ່າເສື່ອມມູນຄ່າທັງໝົດສຳລັບການລົງທຶນທາງການເງິນ*

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນນະພາບສິນເຊື່ອ ແລະ ຍອດທຸລະກຳສູງສຸດແກ່ຄວາມສ່ຽງຂອງສິນເຊື່ອອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລຳດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນຄ່າທັງໝົດ. ສຳລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍເລກທີ 28.

| | *31/12/2025*<br>*ຂັ້ນທີ 1*<br>*ກີບ* | *31/12/2024*<br>*ຂັ້ນທີ 1*<br>*ກີບ* |
|---|---|---|
| ເກີດດອກອອກຜົນ | 6,446,287,976,502 | 7,271,855,780,502 |
| ບໍ່ເກີດດອກອອກຜົນ | - | - |
| | **6,446,287,976,502** | **7,271,855,780,502** |

ການວິເຄາະສ່ວນປ່ຽນແປງໃນມູນຄ່າຕາມບັນຊີແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ກີບ* |
|---|---|
| **ມູນຄ່າຕາມບັນຊີທັງໝົດນະວັນທີ 1 ມັງກອນ 2025** | ***7,271,855,780,502*** |
| ຊັບສິນທີ່ໄດ້ສ້າງຂຶ້ນ ຫຼື ຊື້ເຂົ້າໃໝ່ | 5,038,705,200,390 |
| ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມທີ່ລ້າງອອກ) | (5,740,129,689,478) |
| ການດັດແກ້ອັດຕາແລກປ່ຽນຕ່າງປະເທດ | (124,143,314,912) |
| **ນະວັນທີ 31 ທັນວາ 2025** | **6,446,287,976,502** |

**19. ການລົງທຶນທາງການເງິນ - ຖືຈົນຄົບກຳນົດ (ຕໍ່)**

ການວິເຄາະສ່ວນປ່ຽນແປງຂອງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນທັງໝົດແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ກີບ* |
|---|---:|
| **ເງິນແຮໜີ້ທີ່ຄາດວ່າຈະເກີດຂຶ້ນນະວັນທີ 1 ມັງກອນ 2025** | **504,701,708,208** |
| ເກັບຄືນໜີ້ທີ່ຄາດວ່າຈະເກີດຂຶ້ນສຸດທິພາຍໃນປີ | (85,125,801,454) |
| *ປະກອບມີ:* | |
| *ຊັບສິນທີ່ໄດ້ສ້າງຂຶ້ນ ຫຼື ຊື້ເຂົ້າໃໝ່* | *419,441,872,612* |
| *ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມທີ່ລ້າງອອກ)* | *(494,947,747,151)* |
| *ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ໜີ້ທີ່ຄາດວ່າຈະເກີດຂຶ້ນ* | *-* |
| *ການດັດແກ້ອັດຕາແລກປ່ຽນຕ່າງປະເທດ* | *(9,619,926,915)* |
| **ນະວັນທີ 31 ທັນວາ 2025** | **419,575,906,754** |

| | |
|---|---:|
| ການປ່ຽນແປງຂອງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນພາຍໃນປີ | *(85,125,801,454)* |
| *ອັດຕາແລກປ່ຽນເງິນຕາຕ່າງປະເທດ* | *9,619,926,915* |
| **ລວມຍອດເກັບຄືນໜີ້ເສຍທີ່ຄາດວ່າຈະເກີດໃນໃບລາຍງານຜົນການດຳເນີນງານພາຍໃນປີ** | **(75,505,874,539)** |

**20. ຊັບສິນອື່ນໆ**

| | *31/12/2025*<br>*ກີບ* | *31/12/2024*<br>*ກີບ* |
|---|---:|---:|
| ລາຍຮັບລ່ວງໜ້າ ແລະ ລາຍຮັບອື່ນໆ | 201,953,791,217 | 195,972,821,311 |
| | **201,953,791,217** | **195,972,821,311** |

## 21 . ເງິນຝາກຈາກທະນາຄານອື່ນ

| | 31/12/2025<br>ກີບ | 31/12/2024<br>ກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **2,190,177,264,267** | **998,245,421,562** |
| ເງິນຝາກກະແສລາຍວັນເປັນສະກຸນເງິນກີບ | 430,584,833 | 320,567,647 |
| ເງິນຝາກກະແສລາຍວັນເປັນສະກຸນເງິນຕາຕ່າງປະເທດ | 2,189,746,679,434 | 997,924,853,915 |
| **ເງິນຝາກມີກຳນົດ** | **702,550,473,204** | **12,582,880,873,718** |
| ເງິນຝາກກຳນົດເປັນສະກຸນເງິນກີບ | 120,395,068,493 | - |
| ເງິນຝາກມີກຳນົດເປັນສະກຸນເງິນຕາຕ່າງປະເທດ | 582,155,404,711 | 12,582,880,873,718 |
| **ກອງທຶນກູ້ຢືມ** | **41,751,739,783,156** | **34,590,849,709,983** |
| ກອງທຶນກູ້ຢືມເປັນສະກຸນເງິນຕາຕ່າງປະເທດ | 41,751,739,783,156 | 34,590,849,709,983 |
| | **44,644,467,520,627** | **48,171,976,005,263** |

## 22. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | 31/12/2025<br>ກີບ | 31/12/2024<br>ກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **13,234,591,068,168** | **12,093,680,787,650** |
| ເງິນຝາກກະແສລາຍວັນເປັນສະກຸນເງິນກີບ | 774,441,516,396 | 678,002,888,809 |
| ເງິນຝາກກະແສລາຍວັນເປັນສະກຸນເງິນຕາຕ່າງປະເທດ | 12,460,149,551,772 | 11,415,677,898,841 |
| **ເງິນຝາກປະຢັດ** | **1,186,482,477,531** | **1,222,485,864,477** |
| ເງິນຝາກປະຢັດເປັນສະກຸນເງິນກີບ | 37,624,340,455 | 22,961,160,365 |
| ເງິນຝາກປະຢັດເປັນສະກຸນເງິນຕາຕ່າງປະເທດ | 1,148,858,137,076 | 1,199,524,704,112 |
| **ເງິນຝາກມີກຳນົດ** | **11,494,291,496,578** | **7,325,627,160,734** |
| ເງິນຝາກກຳນົດເປັນສະກຸນເງິນກີບ | 88,939,684,367 | 77,921,435,214 |
| ເງິນຝາກມີກຳນົດເປັນສະກຸນເງິນຕາຕ່າງປະເທດ | 11,405,351,812,212 | 7,247,705,725,520 |
| **ອື່ນໆ** | **831,388,084,469** | **895,855,335,745** |
| | **26,746,753,126,746** | **21,537,649,148,606** |

## 22. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍເງິນຝາກດັ່ງກ່າວມີດັ່ງລຸ່ມນີ້:

| | *ອັດຕາດອກເບ້ຍ (% ຕໍ່ປີ)* | |
|---|---|---|
| | *31/12/2025* | *31/12/2024* |
| **ເງິນຝາກປະຢັດ:** | | |
| ເງິນຝາກປະຢັດເປັນສະກຸນເງິນ ກີບ | 1.65 | 1.65 |
| ເງິນຝາກປະຢັດເປັນສະກຸນເງິນ ໂດລາ | 1.00 | 1.00 |
| ເງິນຝາກໄລຍະສັ້ນເປັນສະກຸນເງິນ ບາດໄທ | 0.50 | 0.50 |
| ເງິນຝາກໄລຍະສັ້ນເປັນສະກຸນເງິນ ຢວນ | 0.90 | 0.90 |
| **ເງິນຝາກມີກຳນົດ** | | |
| ເງິນຝາກມີກຳນົດເປັນສະກຸນເງິນ ກີບ | 5.40 – 6.7 | 2.90 – 6.65 |
| ເງິນຝາກມີກຳນົດເປັນສະກຸນເງິນ ໂດລາ | 2.50 – 4.55 | 1.65 – 5.00 |
| ເງິນຝາກມີກຳນົດເປັນສະກຸນເງິນ ບາດໄທ | 1.52 – 4.55 | 0.90 – 4.70 |
| ເງິນຝາກມີກຳນົດເປັນສະກຸນເງິນ ຢວນ | 1.95 – 2.74 | 1.60 – 2.20 |

## 23. ອາກອນ

### *23.1 ໜີ້ຕ້ອງສົ່ງທາງອາກອນ*

| | *31/12/2025*<br>*ກີບ* | *31/12/2024*<br>*ກີບ* |
|---|---|---|
| ໜີ້ຕ້ອງສົ່ງອາກອນກຳໄລ *(ບົດອະທິບາຍເລກທີ 23.2)* | 206,529,925,506 | 378,974,814,742 |
| ອາກອນເງິນເດືອນ | 4,893,323,993 | 1,760,731,624 |
| ໜີ້ຕ້ອງສົ່ງອາກອນອື່ນໆ | 4,831,562,540 | 6,027,139,801 |
| | **216,254,812,039** | **386,762,686,167** |

**23. ອາກອນ (ຕໍ່)**

*23.2 ອາກອນກຳໄລ ("ອກລ")*

ສາຂາມີພັນທະໃນການຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນໃນປີ ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ, ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນ ວັນທີ ຫຼື ຫຼັງວັນທີ 1 ມັງກອນ 2020.

*23.2 ອາກອນກຳໄລ ("ອກລ")*

| | *31/12/2025*<br>*ກີບ* | *31/12/2024*<br>*ກີບ* |
|---|---|---|
| **ກຳໄລກ່ອນອາກອນ** | **2,514,646,016,470** | **1,659,020,837,982** |
| *ດັດແກ້ສຳລັບ:* | | |
| *ສ່ວນຕ່າງຊື່ວຄາວ* | *(582,521,610,799)* | *631,295,117,396* |
| *ເພີ່ມ:* | | |
| *ຜົນກະທົບຈາກມາດຕະຖານ IAS 29 ບໍ່ໄດ້ລວມເຂົ້າໃນການຄິດໄລ່ CIT* | *-* | *601,393,194,622* |
| *ລາຍຈ່າຍອື່ນໆ ທີ່ບໍ່ໄດ້ຫັກອາກອນ* | *574,783,018* | *1,052,450,858* |
| *ຫັກ:* | | |
| *ກຳໄລສຸດທິຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ* | *212,652,491,023* | *(117,593,889,657)* |
| **ກຳໄລທາງອາກອນ** | **2,145,351,679,712** | **2,775,167,711,201** |
| **ລາຍຈ່າຍ ອກລ ໃນປີ, ອັດຕາອາກອນຕາມກົດລະບຽບກຳນົດ 20%** | **429,070,335,943** | **555,033,542,240** |
| ອກລ ຕ້ອງຈ່າຍ/(ຈ່າຍລ່ວງໜ້າ) ນະຕົ້ນປີ | 378,974,814,742 | (3,922,532,086) |
| ກຳໄລທາງການເງິນ | - | 566,183,488 |
| ອກລ ຈ່າຍພາຍໃນປີ | (601,515,225,179) | (172,702,378,900) |
| **ອກລ ຕ້ອງຈ່າຍນະທ້າຍປີ** | **206,529,925,506** | **378,974,814,742** |

ການເສຍອາກອນຂອງສາຂາ ແມ່ນຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

**23. ອາກອນ (ຕໍ່)**

*23.3 ຊັບສິນ/(ໜີ້ສິນ) ອາກອນລໍຖ້າຊຳລະສະສາງ*

| | *ໃບລາຍງານຖານະການເງິນ* | | *ໃບລາຍງານຜົນການດຳເນີນງານ* | |
|---|---|---|---|---|
| | *31/12/2025 ກີບ* | *31/12/2024 ກີບ* | *2025 ກີບ* | *2024 ກີບ* |
| ຊັບສິນອາກອນລໍຖ້າຊຳລະສະສາງ | 530,917,663,797 | 609,605,481,403 | (78,687,817,606) | 152,917,853,833 |
| ໜີ້ສິນອາກອນລໍຖ້າຊະສະສາງ | (2,067,114,370) | (49,974,080,210) | 47,906,965,841 | (29,593,331,761) |
| **ອາກອນລໍຖ້າສະສາງສຸດທິໃນໃບລາຍງານຜົນການດຳເນີນງານ** | **528,850,549,427** | **559,631,401,193** | **(30,780,851,765)** | **123,324,522,072** |

ລາຍລະອຽດຂອງຊັບສິນ ແລະ ໜີ້ສິ້ນ ອາກອນລໍຖ້າສະສາງມີດັ່ງລຸ່ມນີ້:

| | *31/12/2025 ກີບ* | *31/12/2024 ກີບ* |
|---|---|---|
| ສ່ວນຕ່າງຊົ່ວຄາວທີ່ຫັກໄດ້ | 2,654,588,318,985 | 3,048,027,407,017 |
| *ປະກອບມີ:* | | |
| *ສ່ວນຕ່າງເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນລະຫວ່າງ LAS ແລະ IFRS* | *2,441,935,827,962* | *3,048,027,407,017* |
| *ກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ* | *212,652,491,023* | *-* |
| **ຊັບສິນອາກອນລໍຖ້າສະສາງ (ອັດຕາອາກອນ 20%)** | **530,917,663,797** | **609,605,481,403** |
| ສ່ວນຕ່າງຊົ່ວຄາວທີ່ຫັກໄດ້ | (10,335,571,849) | (249,870,401,052) |
| *ປະກອບມີ:* | | |
| *ສ່ວນຕ່າງຈາກຊັບສິນບັດ, ອຸປະກອນ ແລະ ສິດນຳໃຊ້ຊັບສິນ ທີ່ກ່ຽວພັນກັບ IAS 29* | *(10,335,571,849)* | *(132,276,511,395)* |
| *ກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ* | *-* | *(117,593,889,657)* |
| **ໜີ້ສິນອາກອນລໍຖ້າສະສາງ (ອັດຕາອາກອນ 20%)** | **(2,067,114,370)** | **(49,974,080,210)** |

**24. ໜີ້ສິນອື່ນໆ**

| | *31/12/2025* *ກີບ* | *31/12/2024* *ກີບ* |
|---|---|---|
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 143,440,063,310 | 160,355,677,364 |
| ບັນຊີລໍຖ້າສະສາງ | 322,791,587,331 | 162,988,498,731 |
| ລາຍຮັບລໍຖ້າສະສາງ | 1,254,869,600 | 417,014,007 |
| ໜີ້ສິນອື່ນໆ | 13,341,701,025 | 8,364,743,476 |
| ໜີ້ສິນຕາມສັນຍາເຊົ່າ | 829,589,408 | 1,261,847,450 |
| ເງິນແຮສຳລັບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນຈາກພັນທະຜູກພັນສິນເຊື່ອ | 6,913,638,537 | 50,619,677,959 |
| | **488,571,449,211** | **384,007,458,987** |

**25. ທຶນຈົດທະບຽນທີ່ໄດ້ຖອກແລ້ວ**

ການເຄື່ອນໄຫວຂອງທຶນຈົດທະບຽນທີ່ໄດ້ຖອກແລ້ວພາຍໃນປີ ມີດັ່ງຕໍ່ໄປນີ້:

| | *31/12/2025* *ກີບ* | *31/12/2024* *ກີບ* |
|---|---|---|
| ຍອດຍົກມາ | 300,000,000,000 | 300,000,000,000 |
| ດັດແກ້ທຶນຈົດທະບຽນທີ່ຖອກແລ້ວທີ່ກ່ຽວພັນກັບ IAS 29 | 379,022,213,960 | 379,022,213,960 |
| **ຍອດເຫຼືອທ້າຍ** | **679,022,213,960** | **679,022,213,960** |

ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບເລກທີ 89/ສພຊ ອອກໂດຍສະພາແຫ່ງຊາດ ລົງວັນທີ 17 ກໍລະກົດ 2023 ທີ່ມີຜົນບັງຄັບໃຊ້ນະວັນທີ 15 ກັນຍາ 2023, ສາຂາຕ່າງປະເທດທັງໝົດໃນ ສປປ ລາວ ກຳນົດໃຫ້ຕ້ອງເພີ່ມທຶນຈົດທະບຽນເພື່ອໃຫ້ໄດ້ຕາມທຶນຈົດທະບຽນຂັ້ນຕ່ຳ 600,000 ລ້ານກີບ. ອີງຕາມໜັງສືສະເໜີສະບັບເລກທີ 17/ICBC ລົງວັນທີ 23 ມັງກອນ 2026 ສະເໜີຕໍ່ທະນາຄານແຫ່ງ ສປປ ລາວ, ສາຂາວາງແຜນທີ່ຈະເພີ່ມທຶນຈົດທະບຽນຈຳນວນ 300,000 LAKm ພາຍໃນປີ 2026 ເຊິ່ງເທົ່າກັບ 100% ຂອງຈຳນວນທຶນຈົດທະບຽນພິ່ມເຕີມທັງໝົດ.

## 26. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

*ເງິນສົດ ແລະ ທຽບເທົ່າເງິນສົດ*

| | *31/12/2025*<br>*ກີບ* | *31/12/2024*<br>*ກີບ* |
|---|---|---|
| ເງິນສົດໃນຄັງ | 357,140,041,455 | 280,489,082,103 |
| ເງິນຝາກກະແສລາຍວັນຢູ່ ທຫລ | 2,467,288,143,526 | 525,527,450,444 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ | 3,585,558,053,534 | 2,471,205,924,011 |
| ເງິນຝາກປະຈຳ ຄົບກຳນົດພາຍໃນ 3 ເດືອນ | 31,959,777,915,000 | 29,571,564,000,000 |
| | **38,369,764,153,515** | **32,848,786,456,558** |

## 27. ພັນທະຜູກພັນ ແລະ ໜີ້ສິນທີ່ອາດເກີດຂຶ້ນ

| | *31/12/2025*<br>*ກີບ* | *31/12/2024*<br>*ກີບ* |
|---|---|---|
| ຍອດເຫຼືອໜັງສືສິນເຊື່ອ | 827,343,747,440 | 913,045,141,152 |
| ຍອດເຫຼືອໜັງສືຄ້ຳປະກັນ | 6,934,740,838,439 | 1,430,726,964,790 |
| ເງິນກູ້ທີ່ຍັງບໍ່ໄດ້ຈ່າຍ | 925,815,100,000 | - |
| | **8,687,899,685,879** | **2,343,772,105,942** |

## 28. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ

- ມີການຄວບຄຸມ (ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີທະນາຄານແມ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນຳກັນກັບສາຂາເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານແມ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຂ);

(ຈ) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິອຳນາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດຳເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງ ສາຂາ ຫຼື ທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

ຍອດເຫຼືອຂອງພາກສ່ວນທີ່ກ່ຽວຂ້ອງອື່ນໆ ນະວັນທີ 31 ທັນວາ 2025 ມີດັ່ງລຸ່ມນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ລາຍການເຄື່ອນໄຫວ* | *31 ທັນວາ 2025 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ກີບ* | *31 ທັນວາ 2024 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ກີບ* |
|---|---|---|---:|---:|
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສຳນັກງານໃຫຍ່ | ທະນາຄານແມ່ | ເງິນຝາກກະແສລາຍວັນ | 964,390,923,513 | 1,664,570,156,853 |
| ສາຂາອື່ນໆ | ສາຂາ | ເງິນຝາກກະແສລາຍວັນ | 43,298,142,599 | 157,651,468,116 |
| | | ເງິນຝາກມີກຳນົດ | 864,198,400,000 | 40,656,000,000 |
| | | ດອກເບ້ຍຕິດຈ່າ | 3,940,760,479 | 105,043,361,522 |
| | | ເງິນຝາກກະແສລາຍວັນ | (9,739,036,933) | (33,521,435,090) |
| | | ເງິນຝາກມີກຳນົດ | (35,722,986,942,225) | (22,835,223,000,000) |
| | | ດອກເບ້ຍຕິດຈ່າ | (111,330,086,138) | (118,113,663,289) |
| ທະນາຄານອື່ນໆ | ທະນາຄານໃນເຄືອ | ເງິນຝາກກະແສລາຍວັນ | 39,344,035,390 | 172,815,946,242 |
| | | ເງິນກູ້ | (4,185,350,000,000) | (5,310,148,000,000) |
| | | ດອກເບ້ຍຕິດຈ່າ | (392,609,934) | (5,414,433,081) |

**28. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ** (ຕໍ່)

ລາຍການເຄື່ອນໄຫວທີ່ສຳຄັນກັບ ພາກສ່ວນທີ່ກ່ຽວຂ້ອງພາຍໃນປີ 2025 ມີດັ່ງນີ້:

| | *2025*<br>*ກີບ* | *2024*<br>*ກີບ* |
|---|---|---|
| ລາຍຮັບອັດຕາດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ ຈາກສາຂາອື່ນ | 179,815,216,151 | 215,350,267,472 |
| ລາຍຮັບອັດຕາດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ ຈາກທະນາຄານອື່ນ | 71,946,308,368 | 280,408,491,394 |
| ລາຍຈ່າຍອັດຕາດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ ໃຫ້ສາຂາອື່ນ | 643,662,810,812 | 842,697,600,219 |
| ລາຍຈ່າຍດອກເບ້ຍເງິນກູ້ຢືມຈາກທະນາຄານອື່ນ | 109,167,838,337 | 81,255,478,321 |

**ລາຍການເຄື່ອນໄຫວທີ່ສຳຄັນກັບຄະນະບໍລິຫານຂອງສາຂາ**

ຜົນຕອບແທນໃຫ້ແກ່ສະມາຊິກຂອງຄະນະບໍລິຫານມີດັ່ງນີ້:

| | *2025*<br>*ກີບ* | *2024*<br>*ກີບ* |
|---|---|---|
| ເງິນເດືອນ | 19,988,773,632 | 28,996,520,158 |
| | **19,988,773,632** | **28,996,520,158** |

## 29. ນະໂຍບາຍການບໍລິຫານຄວາມສ່ຽງ

*ພາກສະເໜີ*

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນໃນການດຳເນີນງານຂອງສາຂາ ແຕ່ມັນຖືກບໍລິຫານ ໂດຍຜ່ານຂັ້ນຕອນ, ວັດແທກ ແລະ ການຕິດຕາມຢ່າງຕໍ່ເນື່ອງ ເພື່ອຈຳກັດຂອບເຂດຄວາມສ່ຽງ ແລະ ນຳໃຊ້ການຄຸ້ມຄອງອື່ນໆ. ຂັ້ນຕອນການບໍລິຫານຄວາມສ່ຽງນີ້ເປັນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງສາຂາ ແລະ ແຕ່ລະໜ່ວຍງານພາຍໃນສາຂາຕ້ອງຮັບຜິດຊອບໃນການເປີດເຜີຍຄວາມສ່ຽງທີ່ຕິດພັນກັບໜ້າທີ່ຄວາມຮັບຜິດຊອບຂອງຕົນ.

ສາຂາໄດ້ເປີດເຜີຍຄວາມສ່ຽງສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງຕະຫຼາດ, ຫຼັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງທີ່ບໍ່ແມ່ນການຄ້າ. ນອກນັ້ນ, ສາຂາຍັງມີຄວາມສ່ຽງການດຳເນີນງານອື່ນໆ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງສາຂາແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດໂດຍຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງສາຂາ.

*ໂຄງສ້າງການບໍລິຫານຄວາມສ່ຽງ*

ຄະນະບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດຫຼັກການ ແລະ ຍຸດທະສາດໃນການບໍລິຫານຄວາມສ່ຽງ.

ຄະນະບໍລິຫານໄດ້ແຕ່ງຕັ້ງພະນັກງານຮັບຜິດຊອບບໍລິຫານຄວາມສ່ຽງ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງສາຂາ.

ພະນັກງານຄຸ້ມຄອງຄວາມສ່ຽງ ມີຄວາມຮັບຜິດຊອບໃນການພັດທະນາຍຸດທະສາດ ແລະ ຫຼັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ, ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງສາຂາແມ່ນຂັ້ນຕອນການບໍລິຫານຄວາມສ່ຽງຂອງສາຂາ ເຊິ່ງຖືກກວດກາທຸກໆປີໂດຍພາກສ່ວນກວດກາພາຍໃນເຊິ່ງຈະກວດກາທັງຄວາມພຽງພໍຂອງຂັ້ນຕອນ ແລະ ການປະຕິບັດຕາມຂັ້ນຕອນທີ່ວາງອອກ. ກວດກາພາຍໃນຈະປຶກສາຜົນການກວດກາຂອງຄະນະບໍລິຫານ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດກາຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ.

## 30. ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອແມ່ນຄວາມສ່ຽງທີ່ສາຂາເກີດຄວາມສູນເສຍເນື່ອງຈາກລູກຄ້າ ຫຼື ຄູ່ສັນຍາບໍ່ສາມາດປະຕິບັດຕາມພັນທະຜູກພັນຕາມສັນຍາ. ສາຂາບໍລິຫານ ແລະ ຄວບຄຸມຄວາມສ່ຽງດ້ານສິນເຊື່ອໂດຍການກຳນົດຂອບເຂດຂອງປະລິມານຄວາມສ່ຽງທີ່ສາມາດຮັບໄດ້ສຳລັບຄູ່ສັນຍາທີ່ເປັນບຸກຄົນ ແລະ ສຳລັບການຮວບຮວມທາງພູມສາດ ແລະ ອຸດສາຫະກຳ ແລະ ໂດຍການກວດສອບຍອດທຸລະກຳທີ່ກ່ຽວຂ້ອງກັບຂອບເຂດນັ້ນ.

## 30. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

ສາຂາໄດ້ສ້າງຕັ້ງຂັ້ນຕອນການກວດກາຄຸນນະພາບສິນເຊື່ອເພື່ອລະບຸການປ່ຽນແປງທີ່ເປັນໄປໄດ້ໃນຄວາມໜ້າເຊື່ອຖືຂອງຄູ່ສັນຍາ. ຂອບເຂດຈຳກັດຄູ່ສັນຍາຖືກກຳນົດຂຶ້ນໂດຍຜ່ານການນຳໃຊ້ລະບົບການຈັດປະເພດຄວາມສ່ຽງດ້ານສິນເຊື່ອເຊິ່ງລະບຸການຈັດອັນດັບຄວາມສ່ຽງຂອງແຕ່ລະຄູ່ສັນຍາ. ການຈັດອັນດັບຄວາມສ່ຽງແມ່ນມີການແກ້ໄຂແຕ່ລະເດືອນ. ຂັ້ນຕອນການກວດກາຄຸນນະພາບສິນເຊື່ອມີວັດຖຸປະສົງເພື່ອໃຫ້ສາຂາສາມາດປະເມີນການສູນເສຍທີ່ອາດຈະເກີດຂຶ້ນທີ່ເປັນຜົນມາຈາກຄວາມສ່ຽງທີ່ຈະເກີດຂຶ້ນ ແລະ ຕ້ອງດຳເນີນການແກ້ໄຂ.

| | *ຂັ້ນທີ 1*<br>*ລ້ານກີບ* | *ຂັ້ນທີ 1*<br>*ລ້ານກີບ* | *ຂັ້ນທີ 1*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|---|---|
| ບໍ່ເກີນກຳນົດ | 79,511,093 | - | - | 79,511,093 |
| ເກີນກຳນົດ | - | - | - | - |
| ຫັກ: ເງິນແຮໜີ້ທີ່ຄາດວ່າຈະເກີດຂຶ້ນ | (2,606,132) | - | - | (2,606,132) |
| **ຍອດເຫຼືອສຸດທິ** | **76,904,961** | **-** | **-** | **76,904,961** |

### *30.1 ຄວາມສ່ຽງພັນທະຜູກພັນທີ່ກ່ຽວຂ້ອງກັບສິນເຊື່ອ*

ສາຂາໃຫ້ການຄໍ້າປະກັນແກ່ລູກຄ້າເຊິ່ງອາດຈະກຳນົດໃຫ້ສາຂາຊຳລະເງິນໃນນາມຂອງລູກຄ້າ ແລະ ມີພັນທະຜູກພັນໃນການຂະຫຍາຍວົງເງິນສິນເຊື່ອເພື່ອຮັກສາຄວາມຕ້ອງການສະພາບຄ່ອງ. ໜັງສືສິນເຊື່ອ ແລະ ໜັງສືຄໍ້າປະກັນເຮັດໃຫ້ສາຂາມີພັນທະຕ້ອງຊຳລະໃນນາມຂອງລູກຄ້າໃນກໍລະນີທີ່ມີເຫດການສະເພາະເຈາະຈົງ, ໂດຍທົ່ວໄປແມ່ນກ່ຽວຂ້ອງກັບການນຳເຂົ້າ ຫຼື ສົ່ງອອກສິນຄ້າ. ພັນທະຜູກພັນດັ່ງກ່າວເຮັດໃຫ້ສາຂາມີຄວາມສ່ຽງຕໍ່ເງິນກູ້ ແລະ ຄວາມສ່ຽງຈະຫຼຸດລົງໂດຍຂັ້ນຕອນການຄວບຄຸມ ແລະ ນະໂຍບາຍ.

### *30.2 ການປະເມີນການເສື່ອມມູນຄ່າ*

ເອກະສານອ້າງອີງຂ້າງລຸ່ມນີ້ສະແດງໃຫ້ເຫັນບ່ອນທີ່ການປະເມີນຄວາມບົກພ່ອງ ແລະ ວິທີການວັດແທກຂອງສາຂາໄດ້ຖືກກຳນົດໄວ້ໃນບົດລາຍງານນີ້. ຄວນຈະອ່ານພ້ອມກັບບົດສະຫຼຸບຂອງນະໂຍບາຍການບັນຊີທີ່ສຳຄັນ.

#### *30.2.1 ຄວາມໝາຍຂອງການຜິດນັດຊຳລະ ແລະ ການຮັກສາແກ້ໄຂ*

ສາຂາພິຈາລະນາເຄື່ອງມືການເງິນແບບບໍ່ມີເຫດຜົນ ແລະ ສະນັ້ນຂັ້ນຕອນທີ 3 (ຜູ້ດ້ອຍໂອກາດດ້ານການປ່ອຍສິນເຊື່ອ) ສຳລັບການຄິດໄລ່ ໜີ້ເສຍທີ່ຄາດວ່າຈະເກີດ ໃນທຸກໆກໍລະນີເມື່ອຜູ້ກູ້ຢືມຊຳລະຊ້າເກີນ 90 ວັນຕາມງວດຊຳລະໃນສັນຍາ.

ໃນຖານະທີ່ເປັນສ່ວນໜຶ່ງ ຂອງການປະເມີນຄຸນນະພາບຂອງລູກຄ້າບໍ່ວ່າຈະຢູ່ໃນສະພາບເດີມ, ສາຂາພິຈາລະນາຫຼາຍໆກໍລະນີທີ່ອາດສະແດງເຖິງຄວາມບໍ່ມັກທີ່ຈະຈ່າຍ. ເມື່ອເຫດການດັ່ງກ່າວເກີດຂຶ້ນ, ສາຂາຈະພິຈາລະນາຢ່າງລະມັດລະວັງວ່າເຫດການດັ່ງກ່າວຄວນສົ່ງຜົນໃຫ້ການຮັກສາລູກຄ້າເປັນຄ່າເລີ່ມຕົ້ນ ແລະ ດັ່ງນັ້ນຈຶ່ງປະເມີນເປັນຂັ້ນຕອນທີ 3 ສຳລັບການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ ຫຼືວ່າຂັ້ນຕອນທີ 2 ແມ່ນເໝາະສົມ. ເຫດການດັ່ງກ່າວປະກອບມີ:

- ສິ່ງເກດການເສື່ອມມູນຄ່າຈາກຫຼາຍໆແຫຼ່ງຂໍ້ມູນ, ເຊັ່ນວ່າຄວາມຫຍຸ້ງຍາກໃນດ້ານການເງິນ, ຂໍ້ຍົກເວັ້ນ ແລະ ການລົ້ມລະລາຍ ແລະ ອື່ນໆ

**30. ຄວາມສ່ຽງດ້ານສິນເຊື່ອ** (ຕໍ່)

*30.2 ການປະເມີນການເສື່ອມມູນຄ່າ* (ຕໍ່)

*30.2.2 ການຈັດອັນດັບພາຍໃນ ແລະ ຂັ້ນຕອນການປະເມີນຄວາມອາດຈະເປັນຂອງການຜິດນັດຊຳລະຂອງສາຂາ*

ສາຂາປະຕິບັດຮູບແບບການຈັດອັນດັບພາຍໃນເຊິ່ງລວມເອົາທັງຂໍ້ມູນທາງດ້ານຄຸນນະພາບ ແລະ ປະລິມານ ແລະ, ນອກຈາກຂໍ້ມູນທີ່ເຈາະຈົງຂອງຜູ້ຢືມ ຍັງນຳໃຊ້ ຂໍ້ມູນເພີ່ມເຕີມຈາກພາຍນອກທີ່ສາມາດກະທົບຕໍ່ພຶດຕິກຳຂອງຜູ້ກູ້ຢືມ. ແຫຼ່ງຂໍ້ມູນເຫຼົ່ານີ້ແມ່ນຖືກນຳໃຊ້ທຳອິດເພື່ອພິຈາລະນາ PDs ພາຍໃນຂອບເຂດ ບາເຊວ II ຂອງສາຂາ. ການໃຫ້ຄະແນນສິນເຊື່ອພາຍໃນແມ່ນຖືກກຳນົດຕາມການໃຫ້ຄະແນນໃນ ບາເຊວ II. ຫຼັງຈາກນັ້ນ PDs ຈະຖືກດັດແກ້ສຳລັບການຄຳນວນໜີ້ເສຍທີ່ຄາດວ່າຈະເກີດໃນ IFRS 9 ເພື່ອລວມກັບຂໍ້ມູນທີ່ຄາດການລ່ວງໜ້າ ແລະ ການຈັດຂັ້ນຂອງຍອດໜີ້ໃນ IFRS 9. ການປະຕິບັດດັ່ງກ່າວນີ້ຈະຖືກປະຕິບັດຄືນສຳລັບແຕ່ລະສະພາບເສດຖະກິດຕາມທີ່ເຫັນຄວາມເໝາະສົມ.

***ສາຍພົວພັນຄັງເງິນ, ການຄ້າ ແລະ ລະຫວ່າງທະນາຄານ***

ສາຍພົວພັນຄັງເງິນ, ການຄ້າ ແລະ ລະຫວ່າງທະນາຄານ ແລະ ຄູ່ສັນຍາຂອງສາຂາປະກອບດ້ວຍສະຖາບັນການເງິນ, ທະນາຄານ, ນາຍໜ້າ, ໜ່ວຍແລກປ່ຽນ ແລະ ຊຳລະສະສາງ. ສຳລັບສາຍພົວພັນເຫຼົ່ານີ້, ພະແນກຄວາມສ່ຽງດ້ານສິນເຊື່ອຂອງສາຂາຈະວິເຄາະຂໍ້ມູນສາທາລະນະທີ່ມີເຊັ່ນ ຂໍ້ມູນທາງດ້ານການເງິນ ແລະ ຂໍ້ມູນພາຍນອກອື່ນໆ, ຕົວຢ່າງ ການຈັດອັນດັບຂອງ Moody's, S&P, Fitch, ແລະ ກຳນົດການຈັດອັນດັບພາຍໃນ.

*ເງິນກູ້ແກ່ບໍລິສັດ*

ສຳລັບສິນເຊື່ອບໍລິສັດ, ຜູ້ກູ້ຢືມແມ່ນຖືກປະເມີນໂດຍພະນັກງານສະເພາະດ້ານຄວາມສ່ຽງດ້ານສິນເຊື່ອຂອງສາຂາ. ການປະເມີນຄວາມສ່ຽງດ້ານສິນເຊື່ອແມ່ນອີງໃສ່ຮູບແບບການໃຫ້ຄະແນນສິນເຊື່ອທີ່ພິຈາລະນາຂໍ້ມູນໃນອະດີດ, ປັດຈຸບັນ ແລະ ທີ່ຄາດການລ່ວງໜ້າໃນອະນາຄົດເຊັ່ນວ່າ:

- ຂໍ້ມູນທາງດ້ານການເງິນໃນອະດີດພ້ອມກັບການຄາດຄະເນ ແລະ ງົບປະມານທີ່ໄດ້ກະກຽມໂດຍລູກຄ້າ. ຂໍ້ມູນທາງດ້ານການເງິນນີ້ລວມເອົາຜົນລັບທີ່ໄດ້ຮັບ ແລະ ຄາດຫວັງ, ອັດຕາສ່ວນຄວາມສາມາດໃນການຊຳລະໜີ້, ອັດຕາສ່ວນສະພາບຄ່ອງ ແລະ ອັດຕາສ່ວນອື່ນໆທີ່ກ່ຽວຂ້ອງກັບການຕີມູນຄ່າຜົນການດຳເນີນງານທາງດ້ານການເງິນຂອງລູກຄ້າ. ຕົວບົ່ງຊີ້ເຫຼົ່ານີ້ຖືກບັນທຶກໄວ້ໃນພັນທະສັນຍາກັບລູກຄ້າ ເຊິ່ງຈະຖືກວັດແທກລະອຽດຂຶ້ນ.
- ຂໍ້ມູນໃດໆຂອງລູກຄ້າທີ່ມີຢູ່ສາທາລະນະຈາກພາກສ່ວນພາຍນອກ. ເຊິ່ງລວມເອົາການຄະແນນການຈັດອັນດັບພາຍນອກທີ່ອອກໂດຍຕົວແທນການຈັດອັນດັບ, ບົດລາຍງານການວິເຄາະເອກະລາດ ຫຼື ຂ່າວປະຊາສຳພັນ ແລະ ບົດຄວາມຕ່າງໆ.
- ຂໍ້ມູນທາງເສດຖະສາດມະຫາພາກ ແລະ ພູມສາດການເມືອງໃດໆ ເຊັ່ນ: ການຈະເລີນເຕີບໂຕຂອງ GDP ທີ່ກ່ຽວຂ້ອງສຳລັບພາກສ່ວນອຸດສາຫະກຳ ແລະ ພູມສາດສະເພາະທີ່ລູກຄ້າດຳເນີນງານຢູ່.
- ຂໍ້ມູນອື່ນໆທີ່ມີມີວັດຖຸປະສົງໃນການສະໜັບສະໜູນໃນດ້ານຄຸນນະພາບ ແລະ ຄວາມສາມາດຂອງການບໍລິຫານຂອງລູກຄ້າທີ່ກ່ຽວກັບຜົນການດຳເນີນງານຂອງບໍລິສັດ.

ຄວາມຊັບຊ້ອນ ແລະ ຄວາມລະອຽດຂອງເຕັກນິກການຈັດອັນດັບທີ່ຈະແຕກຕ່າງກັນໄປຕາມຍອດສິນເຊື່ອຂອງສາຂາ ແລະ ຄວາມຊັບຊ້ອນ ແລະ ຂະໜາດຂອງລູກຄ້າ.

**30. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)**

*30.2 ການປະເມີນການເສື່ອມມູນຄ່າ* (ຕໍ່)

*30.2.3 ຍອດໜີ້ເມື່ອຜິດນັດຊຳລະ*

ຍອດໜີ້ເມື່ອຜິດນັດຊຳລະ (EAD) ແມ່ນສະແດງໃຫ້ເຫັນເຖິງມູນຄ່າຂອງເຄື່ອງມືທາງດ້ານການເງິນທີ່ຂຶ້ນຢູ່ກັບການຄຳນວນຄ່າເສື່ອມມູນຄ່າ, ທີ່ລະບຸທັງຄວາມສາມາດຂອງລູກຄ້າໃນການເພີ່ມຄວາມສ່ຽງໃນຍອດໜີ້ເມື່ອມີການຜິດນັດຊຳລະ ແລະ ຄວາມອາດສາມາດໃນການຊຳລະຄືນກ່ອນກຳນົດເຊັ່ນດຽວກັນ.

ເພື່ອທີ່ຈະຄຳນວນ EAD ສຳລັບເງິນກູ້ຂັ້ນທີ 1, ສາຂາປະເມີນເຫດການການຜິດນັດຊຳລະທີ່ເປັນໄປໄດ້ໃນ 12 ເດືອນສຳລັບການຄິດໄລ່ ໜີ້ເສຍທີ່ຄາດວ່າຈະເກີດ 12 ເດືອນ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າ ເງິນກູ້ ຂັ້ນທີ 1 ຖືກຄາດການໄວ້ວ່າຈະຜິດນັດຊຳລະໃນ 12 ເດືອນຈາກວັນທີໃບລາຍງານຖານະການເງິນ ແລະ ຍັງຖືກຄາດການວ່າຫຼັງຈາກການຮັກສາແກ້ໄຂ ແລ້ວຈະຍັງຜິດນັດຊຳລະອີກພາຍຫຼັງ, ສະນັ້ນເຫດການການຜິດນັດຊຳລະທັງໝົດທີ່ເຊື່ອມຕໍ່ກັນແມ່ນຖືກນຳມາພິຈາລະນາ. ສຳລັບຊັບສິນທາງການເງິນໃນ ຂັ້ນທີ 2, ຂັ້ນທີ 3 ແລະ POCI, ຍອດໜີ້ເມື່ອຜິດນັດຊຳລະແມ່ນຖືກນຳມາພິຈາລະນາສຳລັບເຫດການທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມື.

ສາຂາກຳນົດ EADs ໂດຍການຈຳລອງໄລຍະຂອງຜົນຂອງຍອດໜີ້ທີ່ເປັນໄປໄດ້ໃນຫຼາຍໆຈຸດເວລາທີ່ກ່ຽວຂ້ອງກັບຫຼາຍໆສະຖານະການທາງເສດຖະກິດ. ຫຼັງຈາກນັ້ນ PDs ຂອງ IFRS 9 ແມ່ນຖືກກຳນົດໃນແຕ່ລະສະຖານະການທາງເສດຖະກິດໂດຍອີງໃສ່ຜົນຂອງຮູບແບບຂອງສາຂາ.

*30.2.4 ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ*

ສຳລັບເຄື່ອງມືທາງການລົງທຶນໃນບໍລິສັດ ແລະ ການລົງທຶນການທະນາຄານ, ມູນຄ່າ LGD ແມ່ນຖືກປະເມີນເປັນໄລຍະໂດຍຜູ້ຈັດການບັນຊີ ແລະ ຖືກກວດຄືນ ແລະ ອະນຸມັດໂດຍພະແນກຄວາມສ່ຽງດ້ານສິນເຊື່ອສະເພາະຂອງສາຂາ. ການປະເມີນຄວາມສ່ຽງດ້ານສິນເຊື່ອແມ່ນອີງໃສ່ກອບການປະເມີນ LGD ທີ່ເປັນພື້ນຖານທີ່ມີຜົນໃນອັດຕາ LGD ທີ່ແນ່ນອນ. ອັດຕາ LGD ເຫຼົ່ານີ້ພິຈາລະນາ EAD ທີ່ຄາດການໄວ້ສົມທຽບກັບມູນຄ່າທີ່ຄາດການວ່າຈະຟື້ນຟູ ຫຼື ຮັບຮູ້ຈາກຫຼັກຊັບຄໍ້າປະກັນໃດໆທີ່ມີຢູ່.

ຂໍ້ມູນລ່າສຸດ ແລະ ສະຖານະການເສດຖະກິດທີ່ຄາດການໄວ້ລ່ວງໜ້າແມ່ນຖືກໃຊ້ເພື່ອກຳນົດ ອັດຕາ LGD ໃນ IFRS 9 ໃນແຕ່ລະກຸ່ມຂອງເຄື່ອງມືທາງດ້ານການເງິນ. ເມື່ອປະເມີນຂໍ້ມູນທີ່ຄາດການໄວ້ລ່ວງໜ້າ, ການຄາດການໄວ້ອີງໃສ່ຫຼາຍສະຖານະການທາງດ້ານເສດຖະກິດ. ຕົວຢ່າງຂອງຂໍ້ມູນທີ່ສຳຄັນທີ່ປ້ອນເຂົ້າກ່ຽວຂ້ອງກັບສ່ວນປ່ຽນແປງໃນມູນຄ່າມູນຄ່າຫຼັກຊັບຄໍ້າປະກັນທີ່ປະກອບມີລາຄາອະສັງຫາລິມະຊັບສິນສຳລັບການຈຳນອງ, ລາຄາສິນຄ້າ, ສະຖານະການຊຳລະ ຫຼື ບັນດາປັດໄຈອື່ນໆທີ່ບົ່ງບອກການຂາດທຶນໃນກຸ່ມ. ສາຂາປະເມີນກົດລະບຽບ ແລະ LGDs ໃນ IFRS 9 ໃນພື້ນຖານທີ່ແຕກຕ່າງກັນ. ພາຍໃຕ້ IFRS 9, ອັດຕາ LGD ແມ່ນຖືກປະເມີນສຳລັບ ພາກສ່ວນ ຂັ້ນທີ 1, ຂັ້ນທີ 2, ຂັ້ນທີ 3 ແລະ POCI ໃນ IFRS 9 ຂອງແຕ່ລະກຸ່ມ. ຂໍ້ມູນທີ່ປ້ອນເຂົ້າສຳລັບອັດຕາ LGD ແມ່ນຖືກປະເມີນ ແລະ ທີ່ເປັນໄປໄດ້, ຈະເຮັດໃຫ້ຜ່ານການທົດສອບຍ້ອນຫຼັງຕໍ່ກັບການຟື້ນຟູກ່ອນໜ້າ. ຂັ້ນຕອນເຫຼົ່ານີ້ແມ່ນຖືກເຮັດຄືນສຳລັບແຕ່ລະສະຖານະການເສດຖະກິດຕາມທີ່ເໝາະສົມ.

**30. ຄວາມສ່ຽງດ້ານສິນເຊື່ອ** (ຕໍ່)

*30.2 ການປະເມີນການເສື່ອມມູນຄ່າ* (ຕໍ່)

*30.2.5 ການເພີ່ມຂຶ້ນອັນສຳຄັນໃນຄວາມສ່ຽງສິນເຊື່ອ*

ສາຂາເຮັດການກວດສອບຊັບສິນທັງໝົດຢ່າງຕໍ່ເນື່ອງເພື່ອຜົນຕອບແທນສິນເຊື່ອທີ່ຄາດການໄວ້ເພື່ອທີ່ຈະກຳນົດວ່າເຄື່ອງມືທາງດ້ານການເງິນ ຫຼືວ່າ ກຸ່ມຫຼັກຊັບຂອງເຄື່ອງມືທາງດ້ານການເງິນແມ່ນຂຶ້ນຢູ່ຜົນຂາດທຶນທາງດ້ານສິນເຊື່ອ 12 ເດືອນ ຫຼື ຕະຫຼອດອາຍຸເຄື່ອງມື. ສາຂາປະເມີນວ່າມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອ ຫຼື ບໍ່ນັບຈາກການຮັບຮູ້ຄັ້ງທຳອິດ.

ສາຂານຳໃຊ້ມາດຖານຂອງກົນໄກການຈັດຂັ້ນແມ່ນອີງໃສ່ການປ່ຽນແປງລະດັບການຈັດອັນດັບສິນເຊື່ອໃນລະບົບການຈັດອັນດັບພາຍໃນ, ຂໍ້ມູນມື້ເກີນກຳນົດການຊຳລະ ແລະ ຂັ້ນການຈັດປະເພດເງິນກູ້ ແລະ ອື່ນໆ.

**31. ຄວາມສ່ຽງດ້ານອັດຕາດອກເບ້ຍ**

ຄວາມສ່ຽງດ້ານອັດຕາດອກເບ້ຍເກີດຂຶ້ນຈາກການປ່ຽນແປງອັດຕາດອກເບ້ຍເຊິ່ງອາດກະທົບຕໍ່ກະແສເງິນສົດໃນອະນາຄົດ ຫຼື ມູນຄ່າຍຸຕິທຳຂອງເຄື່ອງມືທາງການເງິນ. ຜູ້ບໍລິຫານໄດ້ກຳນົດຂໍ້ຈຳກັດກ່ຽວກັບຊ່ອງຫວ່າງອັດຕາດອກເບ້ຍທີ່ບໍ່ແມ່ນອັດຕາດອກເບ້ຍເພື່ອການຊື້ຂາຍໃນໄລຍະເວລາທີ່ກຳນົດ. ນະໂຍບາຍຂອງສາຂາແມ່ນການກວດສອບສະຖານະໃນແຕ່ລະມື້.

ຄວາມອ່ອນໄຫວຂອງໃບລາຍງານຜົນການດຳເນີນງານແມ່ນຜົນກະທົບມາຈາກສ່ວນປ່ຽນແປງຂອງອັດຕາດອກເບ້ຍທີ່ຄາດວ່າຈະເກີດຂຶ້ນຕໍ່ ກຳໄລ ຫຼື ຂາດທຶນສຳລັບພາຍໃນປີ ໂດຍອີງໃສ່ອັດຕາດອກເບ້ຍແບບລອຍຕົວຂອງຊັບສິນທາງການເງິນທີ່ບໍ່ແມ່ນການຊື້ຂາຍ ແລະ ໜີ້ສິນທາງການເງິນທີ່ຖືຄອງນະວັນທີ 31 ທັນວາ 2025. ຄວາມອ່ອນໄຫວທັງໝົດແມ່ນອີງໃສ່ການສົມມຸດຖານວ່າຈະມີການເຄື່ອນແບບເສັ້ນຂະໜານໃນເສັ້ນອັດຕາຜົນຕອບແທນ.

## 31. ຄວາມສ່ຽງດ້ານອັດຕາດອກເບ້ຍ (ຕໍ່)

ການຈັດປະເພດຂອງຊັບສິນ ແລະ ໜີ້ສິນທາງການເງິນໂດຍອີງຕາມອັດຕາດອກເບ້ຍທີ່ປະເມີນມູນຄ່າຄືນນະວັນທີ 31 ທັນວາ 2025 ມີດັ່ງນີ້:

ຫົວໜ່ວຍ: ລ້ານກີບ

| | *ບໍ່ມີການກຳນົດລາຄາຂຶ້ນໃໝ່* | *1 ເດືອນລົງມາ* | *1 - 3 ເດືອນ* | *3 - 6 ເດືອນ* | *6 - 12 ເດືອນ* | *1 - 5 ປີ* | *ຫຼາຍກວ່າ 5 ປີ* | *ລວມ* |
|---|---|---|---|---|---|---|---|---|
| **ຊັບສິນທາງການເງິນ** | | | | | | | | |
| ເງິນສົດ ແລະ ທຽບເທົ່າເງິນສົດ | 357,140 | - | - | - | - | - | - | 357,140 |
| ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (*) | 5,339,940 | - | - | - | - | - | - | 5,339,940 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ (*) | 3,585,558 | 23,985,465 | 8,518,156 | 6,953,345 | 8,857,459 | 8,842,078 | - | 60,742,061 |
| ເງິນກູ້ໃຫ້ແກ່ລູກຄ້າ (*) | 1,460 | 156,378 | 412,238 | 2,205,760 | 1,460,290 | 152,742 | 2,593,937 | 6,982,805 |
| ການລົງທຶນທາງການເງິນ-ຈະຖືຈົນຄົບກຳນົດ (*) | - | 701,507 | 235,979 | 707,944 | 4,366,688 | 434,170 | - | 6,446,288 |
| ຊັບສິນອື່ນໆ | 201,954 | - | - | - | - | - | - | 201,954 |
| **ຊັບສິນທາງການເງິນທັງໝົດ** | **9,486,052** | **24,843,350** | **9,166,373** | **9,867,049** | **14,684,437** | **9,428,990** | **2,593,937** | **80,070,188** |
| **ໜີ້ສິນທາງການເງິນ** | | | | | | | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | 2,190,177 | 652,384 | 50,167 | - | - | - | - | 2,892,728 |
| ໜີ້ຕ້ອງສົ່ງລູກຄ້າ | 15,252,462 | 4,820,972 | 2,399,154 | 2,874,993 | 264,095 | 1,135,077 | - | 26,746,753 |
| ເງິນກູ້ຢືມຈາກແຫ່ງອື່ນ, ສຳນັກງານໃຫຍ່ ຫຼື ສາຂາອື່ນ | - | 33,150,552 | 2,019,400 | 2,448,268 | 4,133,520 | - | - | 41,751,740 |
| ໜີ້ສິນອື່ນໆ | 488,571 | - | - | - | - | - | - | 488,571 |
| **ໜີ້ສິນທາງການເງິນທັງໝົດ** | **17,931,210** | **38,623,908** | **4,468,721** | **5,323,261** | **4,397,615** | **1,135,077** | **-** | **71,879,792** |
| **ຄວາມສ່ຽງດ້ານອັດຕາດອກເບ້ຍສຸດທິ** | **(8,445,158)** | **(13,780,558)** | **4,697,652** | **4,543,788** | **10,286,822** | **8,293,913** | **2,593,937** | **8,190,396** |

(*) ບໍ່ລວມເງິນແຮທີ່ຄາດວ່າຈະເກີດຂຶ້ນ.

## 31. ຄວາມສ່ຽງດ້ານອັດຕາດອກເບ້ຍ (ຕໍ່)

### ວິເຄາະຄວາມອ່ອນໄຫວຂອງຄວາມສ່ຽງດ້ານອັດຕາດອກເບ້ຍ

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄວາມອ່ອນໄຫວໃນການປ່ຽນແປງທີ່ສົມເຫດສົມຜົນຂອງອັດຕາດອກເບ້ຍໃນ 1 ປີ, ພ້ອມກັບສ່ວນຕ່າງທັງໝົດທີ່ຖືໄວ້ຄົງທີ່, ຂອງໃບລາຍງານຜົນການດຳເນີນງານຂອງສາຂາ:

*ຫົວໜ່ວຍ: ລ້ານກີບ*

| | 2025 | | 2024 | |
|---|---|---|---|---|
| | *ຜົນກະທົບຕໍ່ກຳໄລກ່ອນອາກອນ* | | *ຜົນກະທົບຕໍ່ກຳໄລກ່ອນອາກອນ* | |
| | *ອັດຕາດອກເບ້ຍ ເພີ່ມຂຶ້ນ 1%* | *ອັດຕາດອກເບ້ຍ ຫຼຸດລົງ 1%* | *ອັດຕາດອກເບ້ຍ ເພີ່ມຂຶ້ນ 1%* | *ອັດຕາດອກເບ້ຍ ຫຼຸດລົງ 1%* |
| ຊັບສິນ | 412,849 | (412,849) | 422,528 | (422,528) |
| ໜີ້ສິນ | (451,650) | 451,650 | (437,358) | 437,358 |
| ລວມ | **(38,801)** | **38,801** | **(14,830)** | **14,830** |

## 32. ຄວາມສ່ຽງດ້ານເງິນຕາ

ຄວາມສ່ຽງດ້ານເງິນຕາແມ່ນຄວາມສ່ຽງທີ່ເກີດຂຶ້ນກັບສາຂາເນື່ອງຈາກມີການປ່ຽນແປງອັດຕາແລກປ່ຽນເງິນຕາຕ່າງປະເທດ ເຊິ່ງຈະກະທົບໃສ່ຖານະເງິນຕາຕ່າງປະເທດຂອງສາຂາ. ສາຂາໄດ້ກຳນົດເພດານຂອງຖານະເງິນຕາແຕ່ລະຊະນິດພາຍໃຕ້ລະບົບການປະເມີນການຄວບຄຸມຄວາມສ່ຽງພາຍໃນ ແລະ ຂໍ້ກຳນົດຂອງ ທຫລ. ແຕ່ລະຖານະແມ່ນໄດ້ຖືກຕິດຕາມກວດກາທຸກໆມື້ ເພື່ອຮັບປະກັນໃຫ້ຖານະເງິນຕາຖືກຮັກສາໄວ້ຢູ່ໃນຂອບເຂດຂອງເພດານທີ່ໄດ້ສ້າງຂຶ້ນ.

## 32. ຄວາມສ່ຽງດ້ານເງິນຕາ (ຕໍ່)

ລາຍລະອຽດຂອງຊັບສິນ ແລະ ໜີ້ສິນທີ່ຖືກປ່ຽນເປັນເງິນກີບໃນວັນທີ 31 ທັນວາ 2025 ມີດັ່ງຕໍ່ໄປນີ້:

ຫົວໜ່ວຍ: ລ້ານກີບ

| | ລ້ານກີບ | *ໂດລາ ທຽບເທົ່າ ລ້ານກີບ* | *ບາດ ທຽບເທົ່າ ລ້ານກີບ* | *ຢວນ ທຽບເທົ່າ ລ້ານກີບ* | *ເອີໂຣ ທຽບເທົ່າ ລ້ານກີບ* | *ສະກຸນເງິນອື່ນໆ ທຽບເທົ່າ ລ້ານກີບ* | *ລວມ ທຽບເທົ່າ ລ້ານກີບ* |
|---|---|---|---|---|---|---|---|
| **ຊັບສິນ** | | | | | | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ (*) | 202,433 | 3,869,079 | 84,598 | 1,540,970 | - | - | 5,697,080 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ (*) | 2,165 | 38,159,814 | 66,262 | 20,059,163 | 37,878 | 2,416,779 | 60,742,061 |
| ເງິນກູ້ໃຫ້ແກ່ລູກຄ້າ (*) | 3,601 | 2,747,264 | 276 | 4,231,664 | - | - | 6,982,805 |
| ຊັບສິນບົ້ວ ແລະ ອຸປະກອນ | 126,451 | - | - | - | - | - | 126,451 |
| ຊັບສິນບົ້ວບໍ່ມີຕົວຕົນ | 1,392 | - | - | - | - | - | 1,392 |
| ການລົງທຶນທາງການເງິນ-ຖືຄອງຈົນຄົບກຳນົດ | 1,045,699 | 5,400,589 | - | - | - | - | 6,446,288 |
| ອາກອນຊັບສິນລໍຖ້າສະສາງ | 530,918 | - | - | - | - | - | 530,918 |
| ຊັບສິນອື່ນໆ | 1,549 | 120,393 | 46 | 79,966 | - | - | 201,954 |
| **ລວມຊັບສິນ** | **1,914,208** | **50,297,139** | **151,182** | **25,911,763** | **37,878** | **2,416,779** | **80,728,949** |

32. ຄວາມສ່ຽງດ້ານເງິນຕາ (ຕໍ່)

| | ລ້ານກີບ | ໂດລາ ທຽບເທົ່າ ລ້ານກີບ | ບາດ ທຽບເທົ່າ ລ້ານກີບ | ຢວນ ທຽບເທົ່າ ລ້ານກີບ | ເອີໂຣ ທຽບເທົ່າ ລ້ານກີບ | ສະກຸນເງິນອື່ນໆ ທຽບເທົ່າ ລ້ານກີບ | ລວມ ທຽບເທົ່າ ລ້ານກີບ |
|---|---|---|---|---|---|---|---|
| **ໜີ້ສິນ ແລະ ທຶນ** | | | | | | | |
| **ໜີ້ສິນ** | | | | | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | 120,826 | 620,883 | 8,705 | 2,142,314 | - | - | 2,892,728 |
| ໜີ້ຕ້ອງສົ່ງລູກຄ້າ | 901,336 | 14,496,780 | 237,289 | 11,073,070 | 38,278 | - | 26,746,753 |
| ເງິນກູ້ຢືມຈາກແຫຼ່ງອື່ນ, ສຳນັກງານໃຫຍ່ ຫຼື ສາຂາອື່ນ | - | 28,055,713 | - | 11,280,287 | - | 2,415,740 | 41,751,740 |
| ໜີ້ສິນອາກອນພາຍໃນປີ | 216,219 | - | - | 36 | - | - | 216,255 |
| ອາກອນໜີ້ສິນລໍຖ້າສະສາງ | 2,067 | - | - | - | - | - | 2,067 |
| ໜີ້ສິນອື່ນໆ | 15,197 | 422,377 | 47 | 50,950 | - | - | 488,571 |
| **ລວມໜີ້ສິນ** | **1,255,645** | **43,595,753** | **246,041** | **24,546,657** | **38,278** | **2,415,740** | **72,098,114** |
| **ທຶນ** | **6,146,642** | **-** | **-** | **-** | **-** | **-** | **6,146,642** |
| **ລວມໜີ້ສິນ ແລະ ທຶນ** | **7,402,287** | **43,595,753** | **246,041** | **24,546,657** | **38,278** | **2,415,740** | **78,244,756** |
| **ຄວາມສ່ຽງສຸດທິ** | (5,488,079) | 6,701,385 | (94,859) | 1,365,105 | (401) | 1,039 | 2,484,191 |

(*) ບໍ່ລວມເງິນແຮທີ່ຄາດວ່າຈະເກີດຂຶ້ນ

**32. ຄວາມສ່ຽງດ້ານເງິນຕາ (ຕໍ່)**

**ການວິເຄາະຄວາມອ່ອນໄຫວຂອງຄວາມສ່ຽງດ້ານເງິນຕາ**

ຕາຕະລາງລຸ່ມນີ້ສະແດງສະກຸນເງິນທີ່ສາຂາມີຍອດທຸລະກຳອັນສຳຄັນນະວັນທີ 31 ທັນວາ ໃນຊັບສິນ ແລະ ໜີ້ທາງດ້ານເງິນຕາ ແລະ ສະແດງການຄາດຄະເນກະແສເງິນສົດ. ການວິເຄາະຄຳນວນຜົນກະທົບການເຄື່ອນໄຫວທີ່ເປັນໄປໄດ້ຢ່າງສົມເຫດສົມຜົນຂອງອັດຕາແລກປ່ຽນຕໍ່ກັບເງິນກີບ, ດ້ວຍຄ່າຕົວປ່ຽນອື່ນໆຄົງທີ່, ໃນໃບລາຍງານຜົນການດຳເນີນງານ (ເນື່ອງຈາກມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງເງິນຕາທີ່ມີຄວາມອ່ອນໄຫວ). ມູນຄ່າລົບໃນຕາຕະລາງແມ່ນສະທ້ອນໃຫ້ເຫັນເຖິງການການຫຼຸດລົງສຸດທິທີ່ອາດຈະເກີດຂຶ້ນໃນໃບລາຍງານຜົນການດຳເນີນງານ, ໃນຂະນະທີ່ມູນຄ່າບວກແມ່ນສະທ້ອນໃຫ້ເຫັນເຖິງສ່ວນເພີ່ມຂຶ້ນທີ່ອາດຈະເກີດຂຶ້ນ.

*ຫົວໜ່ວຍ: ລ້ານກີບ*

| | *2025* | | *2024* | |
|---|---|---|---|---|
| | *ຜົນກະທົບຕໍ່ກຳໄລກ່ອນອາກອນ* | | *ຜົນກະທົບຕໍ່ກຳໄລກ່ອນອາກອນ* | |
| | *ອັດຕາແລກປ່ຽນ ເພີ່ມຂຶ້ນ 10%* | *ອັດຕາແລກປ່ຽນ ຫຼຸດລົງ 10%* | *ອັດຕາແລກປ່ຽນ ເພີ່ມຂຶ້ນ 10%* | *ອັດຕາແລກປ່ຽນ ຫຼຸດລົງ 10%* |
| ໂດລາ | 670,138 | (670,138) | 657,688 | (657,688) |
| ບາດ | 9,486 | (9,486) | 9,007 | (9,007) |
| ຢວນ | 136,511 | (136,511) | 104,809 | (104,809) |
| ເອີໂຣ | 40 | (40) | 127 | (127) |
| ສະກຸນເງິນອື່ນໆ | 104 | (104) | 32 | (32) |
| **ລວມ** | **816,279** | **(816,279)** | **771,663** | **(771,663)** |

**33. ຄວາມສ່ຽງດ້ານສະພາບຄ່ອງ**

ຄວາມສ່ຽງທາງດ້ານສະພາບຄ່ອງແມ່ນຄວາມສ່ຽງທີ່ທາງສາຂາຈະເຂົ້າສູ່ພາວະຄວາມຫຍຸ້ງຍາກໃນການປະຕິບັດພັນທະຕ່າງໆທີ່ຕິດພັນກັບໜີ້ສິນທາງການເງິນ ທີ່ຕ້ອງຊຳລະດ້ວຍເງິນສົດ ຫຼື ຊັບສິນທາງການເງິນອື່ນໆ. ຄວາມສ່ຽງທາງດ້ານສະພາບຄ່ອງເກີດຂຶ້ນເນື່ອງຈາກເມື່ອມີຄວາມເປັນໄປໄດ້ທີ່ສາຂາຈະບໍ່ສາມາດປະຕິບັດພັນທະໃນການຊຳລະເງິນ ເມື່ອພັນທະດັ່ງກ່າວເຖິງກຳນົດເວລາຊຳລະພາຍໃຕ້ສະພາບປົກກະຕິ ຫຼື ສະຖານະການທີ່ກົດດັນໃດໜຶ່ງ. ເພື່ອຈຳກັດຄວາມສ່ຽງນີ້, ນອກເໜືອຈາກພື້ນຖານການລະດົມທຶນຫຼັກແລ້ວ, ນອກຈາກນີ້ ຄະນະບໍລິຫານໄດ້ມີການກະກຽມຂະຫຍາຍໃຫ້ກິດຈະກຳການບໍລິການຫຼາຍດ້ານຂຶ້ນ ແລະ ນຳໃຊ້ນະໂຍບາຍ ແລະ ສ້າງຄວາມເຂົ້າໃຈກ່ຽວກັບການບໍລິຫານຈັດການຊັບສິນກັບສະພາບຄ່ອງ ແລະ ມີການຕິດຕາມກະແສເງິນສົດ ແລະ ສະພາບຄ່ອງໃນອະນາຄົດເປັນແຕ່ລະວັນ. ສາຂາໄດ້ມີການພັດທະນາລະບອບການຄວບຄຸມພາຍໃນ ແລະ ແຜນສຳຮອງຕ່າງໆ ເພື່ອໃຊ້ບໍລິຫານຄວາມສ່ຽງສະພາບຄ່ອງ. ສິ່ງດັ່ງກ່າວໄດ້ລວບລວມການປະເມີນກະແສເງິນສົດຄາດຄະເນ ແລະ ຫຼັກຊັບຄ້ຳປະກັນທີ່ມີລະດັບສູງທີ່ມີຢູ່ ເຊິ່ງສາມາດໃຊ້ເຂົ້າໃນການປ້ອງກັນເພີ່ມເຕີມຕໍ່ທຶນ ເມື່ອມີຄວາມຕ້ອງການ.

## 33. ຄວາມສ່ຽງດ້ານສະພາບຄ່ອງ (ຕໍ່)

ສົມມຸດຖານ ແລະ ເງື່ອນໄຂຕໍ່ໄປນີ້ແມ່ນ ການວິເຄາະຄວາມສ່ຽງດ້ານສະພາບຄ່ອງຊັບສິນ ແລະ ໜີ້ສິນທາງການເງິນຂອງສາຂາ:

- ເງິນຝາກກັບ ທຫລ ແມ່ນເງິນຝາກກະແສລາຍວັນທີ່ປະກອບດ້ວຍເງິນແຮຝາກບັງຄັບ. ຍອດເຫຼືອຂອງເງິນແຮຝາກບັງຄັບຂຶ້ນກັບອັດຕາສ່ວນ ແລະ ໄລຍະຂອງຜູ້ຝາກເງິນກັບສາຂາ.

- ໄລຍະຄົບກໍານົດຂອງການລົງທຶນ ແລະ ເງິນກູ້ຢືມໃຫ້ທະນາຄານອື່ນ; ເງິນກູ້ໃຫ້ລູກຄ້າ ແມ່ນຖືກກໍານົດຕາມມື້ຄົບກໍານົດຕາມທີ່ໄດ້ລະບຸໄວ້ໃນສັນຍາຕ່າງໆ. ວັນຄົບກໍານົດຕົວຈິງອາດຈະມີການປ່ຽນແປງ ເນື່ອງຈາກສັນຍາເງິນກູ້ອາດຈະຖືກຂະຫຍາຍເວລາອອກໄປ.

- ໄລຍະຄົບກໍານົດຂອງເງິນຝາກ ຈາກທະນາຄານອື່ນ; ແລະ ເງິນຝາກຈາກລູກຄ້າ ແມ່ນຖືກກໍານົດຕາມມື້ຄົບກໍານົດຕາມທີ່ໄດ້ລະບຸໄວ້ໃນສັນຍາຕ່າງໆ. ເງິນຝາກກະແສລາຍວັນແມ່ນຈະຖືກດໍາເນີນການເຄື່ອນໄຫວເອີງຕາມທີ່ລູກຄ້າສະເໜີ. ເພາະສະນັ້ນ, ຈຶ່ງຖືກຈັດເປັນປະເພດ ຕາມຄວາມຕ້ອງການ. ໄລຍະຄົບກໍານົດຂອງເງິນກູ້ຢືມ ແລະ ເງິນຝາກມີກໍານົດແມ່ນຖືກກໍານົດຕາມວັນຄົບກໍານົດທີ່ໄດ້ລະບຸໄວ້ໃນສັນຍາ. ໃນຄວາມເປັນຈິງແລ້ວ, ມູນຄ່າເຫຼົ່ານີ້ອາດຈະຖືກລະຫຼູບສັບປ່ຽນ. ເພາະສະນັ້ນ, ລາຍການເຫຼົ່ານີ້ອາດຈະຍັງມີຢູ່ກາຍວັນຄົບກໍານົດເດີມ.

- ໄລຍະຄົບກໍານົດຂອງໜີ້ສິນອື່ນໆ ແມ່ນຖືກກໍານົດຕາມໄລຍະມື້ຄົບກໍານົດຕົວຈິງຂອງແຕ່ລະລາຍງານຂອງໜີ້ສິນອື່ນໆ.

## 33. ຄວາມສ່ຽງດ້ານສະພາບຄ່ອງ (ຕໍ່)

ການຈັດປະເພດຂອງຊັບສິນ ແລະ ໜີ້ສິນທາງການເງິນໂດຍອີງຕາມວັນຄົບກຳນົດຕາມສັນຍາ ນະວັນທີ 31 ທັນວາ 2025 ມີດັ່ງນີ້:

ຫົວໜ່ວຍ: ລ້ານກີບ

| | *ເກີນກຳນົດ* | | *ກ່ອນມື້ໝົດກຳນົດ* | | | | | |
|---|---|---|---|---|---|---|---|---|
| | *ຕໍ່າກວ່າ 3 ເດືອນລົງມາ* | *ເກີນ 3 ເດືອນ* | *ນັບແຕ່ 1 ເດືອນລົງມາ* | *1-3 ເດືອນ* | *3-12 ເດືອນ* | *1-5 ປີ* | *ເກີນ 5 ປີ* | *ລວມ* |
| **ຊັບສິນ** | | | | | | | | |
| ເງິນສົດ ແລະ ທຽບເທົ່າເງິນສົດ | - | - | 357,140 | - | - | - | - | 357,140 |
| ເງິນຝາກກັບທະນາຄານແຫ່ງ ສປປ ລາວ (*) | - | - | 5,339,940 | - | - | - | - | 5,339,940 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ (*) | 3,585,558 | - | 23,985,465 | 8,518,156 | 15,810,803 | 8,842,079 | - | 60,742,061 |
| ເງິນປ່ອຍກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ (*) | - | - | 157,838 | 412,238 | 3,666,050 | 152,742 | 2,593,936 | 6,982,805 |
| ການລົງທຶນທາງການເງິນ-ຖືຄອງຈົນຄົບກຳນົດ | - | - | 701,507 | 235,979 | 5,074,632 | 434,170 | - | 6,446,288 |
| ຊັບສິນອື່ນໆ | - | - | 201,954 | - | - | - | - | 201,954 |
| **ລວມຊັບສິນທາງການເງິນ** | **3,585,558** | **-** | **30,743,844** | **9,166,373** | **24,551,485** | **9,428,991** | **2,593,936** | **80,070,188** |
| **ໜີ້ສິນ** | | | | | | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | 2,190,177 | - | 652,384 | 50,167 | - | - | - | 2,892,728 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | - | - | 20,073,433 | 2,399,154 | 3,139,088 | 1,135,077 | - | 26,746,753 |
| ເງິນກູ້ຢືມຈາກແຫຼ່ງອື່ນ, ສານັກງານໃຫຍ່ ແລະ ສາຂາອື່ນ | - | - | 33,150,552 | 2,019,400 | 6,581,788 | - | - | 41,751,740 |
| ໜີ້ສິນທາງການເງິນອື່ນໆ | - | - | 488,571 | - | - | - | - | 488,571 |
| **ລວມໜີ້ສິນທາງການເງິນ** | **2,190,177** | **-** | **54,364,940** | **4,468,721** | **9,720,876** | **1,135,077** | **-** | **71,879,792** |
| **ຄວາມສ່ຽງດ້ານສະພາບຄ່ອງ** | **1,395,381** | **-** | **(23,621,097)** | **4,697,652** | **14,830,609** | **8,293,914** | **2,593,936** | **8,190,396** |

(*) ບໍ່ລວມເງິນແຮທີ່ຄາດວ່າຈະເກີດຂຶ້ນ

## 34. ການບໍລິຫານທຶນ

ສາຂາໄດ້ຮັກສາທຶນຕໍ່າສຸດຕາມລະບຽບການຂອງທຶນ ໂດຍອີງຕາມລະບຽບການເລກທີ 536/ກທຄສ/ທຫລ ລົງວັນທີ 14 ຕຸລາ 2009 ວ່າດ້ວຍຄວາມພຽງພໍຂອງທຶນ ແລະ ລາຍລະອຽດການແນະນຳອື່ນໆ. ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງສາຂາແມ່ນເພື່ອຮັບປະກັນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທາງດ້ານເງິນທຶນຂອງ ທຫລ. ສາຂາຮັບຮູ້ເຖິງຄວາມຈຳເປັນໃນການບໍລິຫານຊັບສິນ ແລະ ໜີ້ສິນຢ່າງມີປະສິດທະພາບ ເພື່ອເຮັດໃຫ້ເກີດຄວາມສົມດຸນກັນລະຫວ່າງກຳໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມລະບຽບການເລກທີ 536/ກທຄສ/ທຫລ, ທຶນຕາມລະບຽບການຂອງສາຂາວິເຄາະເປັນສອງຂັ້ນຄື:

- ທຶນຂັ້ນ 1 ປະກອບດ້ວຍ ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອຂະຫຍາຍທຸລະກິດ, ທຶນອື່ນໆ ແລະ ກຳໄລສະສົມ;
- ທຶນຂັ້ນ 2 ປະກອບດ້ວຍໜີ້ສິນສຳຮອງ, ເງິນແຮທົ່ວໄປ ແລະ ອົງປະກອບຂອງຄັງສະສົມມູນຄ່າຍຸຕິທຳທີ່ກ່ຽວຂ້ອງກັບກຳໄລ/ຂາດທຶນທີ່ບໍ່ເກີດຂຶ້ນຈິງ ເຊິ່ງກ່ຽວຂ້ອງກັບເຄື່ອງມືທາງດ້ານທຶນທີ່ໄດ້ຈັດປະເພດມີໄວ້ເພື່ອຂາຍ.

ຂອບເຂດຕ່າງໆແມ່ນຖືກນຳໃຊ້ເພື່ອເປັນອົງປະກອບຂອງທຶນອົງໃສ່: ທຶນຂັ້ນ 2 ບໍ່ສາມາດຫຼາຍກວ່າທຶນຂັ້ນ 1 ໄດ້ ແລະ ໜີ້ສິນສຳຮອງ ອາດຈະບໍ່ຮອດ 50% ຂອງທຶນ ຂັ້ນ 1.

ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນຈາກມາດຕະຖານເອກະສານລາຍງານການເງິນສາກົນ ດັ່ງຕໍ່ໄປນີ້:

| *ລາຍການ* | *31 ທັນວາ 2025*<br>*ພາຍໃຕ້ IFRS*<br>*ລ້ານກີບ* | *31 ທັນວາ 2024*<br>*ພາຍໃຕ້ IFRS*<br>*ລ້ານກີບ* |
|---|---|---|
| ທຶນ ຂັ້ນ 1 | 6,026,768 | 4,851,429 |
| ທຶນ ຂັ້ນ 2 | 2,031,830 | 1,834,780 |
| **ທຶນທັງໝົດ** | **8,058,598** | **6,686,209** |
| ລົບ: ຫັກຈາກທຶນ (ລົງທຶນໃນສິນເຊື່ອອື່ນ ແລະ ສະຖາບັນການເງິນອື່ນໆ) | - | - |
| **ທຶນສຳລັບການຄິດໄລ່ CAR (A)** | **8,058,598** | **6,686,209** |
| ນ້ຳໜັກຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນ | 33,537,069 | 33,563,049 |
| ນ້ຳໜັກຄວາມສ່ຽງຂອງລາຍການນອກໃບລາຍງານຖານະການເງິນ | 4,343,950 | 1,171,886 |
| **ນ້ຳໜັກຄວາມສ່ຽງຊັບສິນທັງໝົດ (B)** | **45,939,617** | **41,421,144** |
| **ອັດຕາຄວາມພຽງພໍຂອງທຶນ (A/B)** | **18%** | **16%** |

## 35. ມູນຄ່າຍຸຕິທໍາຂອງຊັບສິນ ແລະ ໜີ້ສິນທາງການເງິນ

*ການກໍານົດມູນຄ່າຍຸຕິທໍາ ແລະ ລະດັບຊັ້ນຂອງມູນຄ່າຍຸຕິທໍາ*

ສາຂາໃຊ້ລະດັບຊັ້ນຕໍ່ໄປນີ້ໃນການກໍານົດ ແລະ ເປີດເຜີຍມູນຄ່າຍຸຕິທໍາຂອງເຄື່ອງມືທາງການເງິນໂດຍວິທີຕີມູນຄ່າ:

ລະດັບ 1: ລາຄາປະກາດ/(ບໍ່ໄດ້ດັດແປງ) ໃນຕະຫຼາດທີ່ມີການຊື້-ຂາຍ ສໍາລັບ ຊັບສິນ ຫຼື ໜີ້ສິນ ຢ່າງດຽວກັນ.

ລະດັບ 2: ວິທີການອື່ນໆ ໂດຍນໍາໃຊ້ປັດໃຈທີ່ມີຜົນກະທົບສູງຕໍ່ມູນຄ່າຍຸຕິທໍາ ບໍ່ວ່າທາງກົງ ຫຼື ທາງອ້ອມ ເຊິ່ງສາມາດສັງເກດເຫັນໄດ້.

ລະດັບ 3: ວິທີການທີ່ນໍາໃຊ້ປັດໃຈທີ່ມີຜົນກະທົບສູງຕໍ່ກັບມູນຄ່າຍຸຕິທໍາ ທີ່ຂໍ້ມູນບໍ່ໄດ້ຢູ່ໃນຕະຫຼາດທີ່ສັງເກດໄດ້.

*ມູນຄ່າຍຸຕິທໍາຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກຕາມມູນຄ່າຍຸຕິທໍາ*

ສາຂາບໍ່ມີຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກຕາມມູນຄ່າຍຸຕິທໍາ ນະວັນທີ 31 ທັນວາ 2025. ດັ່ງນັ້ນ, ບໍ່ມີການວິເຄາະຊັບສິນທາງການເງິນຕາມມູນຄ່າຍຸຕິທໍາຕາມລະດັບຊັ້ນຂອງມູນຄ່າຍຸຕິທໍາ.

*ມູນຄ່າຍຸຕິທໍາຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸຕິທໍາ*

ສາຂານໍາໃຊ້ວິທີ ແລະ ການຄາດຄະເນດັ່ງຕໍ່ໄປນີ້ ໃນການພິຈາລະນາມູນຄ່າຍຸຕິທໍາສໍາລັບຊັບສິນ ແລະ ໜີ້ສິນທາງການເງິນ ທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸຕິທໍາໃນເອກະສານລາຍງານການເງິນ:

*ຊັບສິນທີ່ມູນຄ່າຍຸຕິທໍາໃກ້ຄຽງກັບມູນຄ່າຕາມບັນຊີ*

ສໍາລັບຊັບສິນ ແລະ ໜີ້ສິນທີ່ເປັນໄລຍະສັ້ນ (ຕໍ່າກວ່າ 1 ປີ) ມີການຄາດການວ່າ ຈໍານວນຕາມບັນຊີໃກ້ຄຽງກັບມູນຄ່າຍຸຕິທໍາ. ການຄາດຄະເນນີ້ແມ່ນຍັງໃຊ້ກັບເງິນຝາກກະແສລາຍວັນ.

*ເຄື່ອງມືທາງການເງິນທີ່ມີອັດຕາຄົງທີ່*

ມູນຄ່າຍຸຕິທໍາຖືກກໍານົດໂດຍວິທີກະແສເງິນສົດແບບສ່ວນຫຼຸດ ໂດຍໃຊ້ດອກເບ້ຍນະທ້າຍໄລຍະຂອງເຄື່ອງມືທາງການເງິນໃນຕະຫຼາດທີ່ມີຄວາມສ່ຽງ ແລະ ໄລຍະເວລາທີ່ຄືກັນ. ນອກນັ້ນ ສາຂາຍັງຄາດຄະເນວ່າເງິນກູ້ທີ່ໃຫ້ກັບລູກຄ້າແມ່ນຖືໄວ້ຈົນຄົບກໍານົດ. ມູນຄ່າຍຸຕິທໍາຂອງເງິນກູ້ທີ່ໃຫ້ລູກຄ້າແມ່ນກໍານົດຈາກມູນຄ່າຕາມບັນຊີ ລົບໃຫ້ ເງິນແຮຄ່າເສື່ອມ. ສໍາລັບໜີ້ຕ້ອງສົ່ງໃຫ້ລູກຄ້າ, ມູນຄ່າຍຸຕິທໍາຖືກກໍານົດໃນມູນຄ່າຕາມບັນຊີຂອງເງິນຝາກ, ຍົກເວັ້ນມູນຄ່າຍຸຕິທໍາສໍາລັບລາຍການທີ່ມີອັດຕາຄົງທີ່ ທີ່ມີໄລຍະເວລາຄົບກໍານົດຫຼາຍກວ່າ 1 ປີ ເຊິ່ງຖືກຄິດໄລ່ໂດຍອີງຕາມມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດສໍາລັບຕົ້ນທຶນ ແລະ ດອກເບ້ຍ, ຫຼຸດໃນອັດຕາທີ່ໄດ້ສະເໜີສໍາລັບເງິນຝາກດັ່ງກ່າວ.

## 35. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

*ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸຕິທຳ* (ຕໍ່)

ລາຍການຕໍ່ໄປນີ້ແມ່ນການປຽບທຽບຕາມປະເພດຂອງມູນຄ່າຕາມບັນຊີ ແລະ ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນຂອງສາຂາທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸຕິທຳໃນເອກະສານລາຍງານການເງິນ:

**ນະວັນທີ 31 ທັນວາ 2025**

ຫົວໜ່ວຍ: ລ້ານກີບ

| | *ມູນຄ່າຕາມ* | *ມູນຄ່າຍຸຕິທຳ* | | | |
|---|---|---|---|---|---|
| | *ບັນຊີ* | *ລະດັບ 1* | *ລະດັບ 2* | *ລະດັບ 3* | *ລວມ* |
| **ຊັບສິນທາງການເງິນ** | | | | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ (*) | 5,697,080 | 5,697,080 | - | - | 5,697,080 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ (*) | 58,719,701 | 3,585,558 | - | 55,134,143 | 58,719,701 |
| ເງິນກູ້ໃຫ້ແກ່ລູກຄ້າ (*) | 6,818,608 | - | - | 6,818,608 | 6,818,608 |
| ການລົງທຶນທາງການເງິນ - ຖືຄອງຈົນຄົບກຳນົດ (*) | 6,026,712 | - | - | 6,026,712 | 6,026,712 |
| | **77,262,101** | **9,282,638** | **-** | **67,979,463** | **77,262,101** |
| **ໜີ້ສິນທາງການເງິນ** | | | | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | 2,892,728 | 2,190,177 | - | 702,551 | 2,892,728 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 26,746,753 | 13,234,591 | - | 13,512,162 | 26,746,753 |
| ເງິນກູ້ຢືມຈາກແຫຼ່ງອື່ນ, ສານັກງານໃຫຍ່ ແລະ ສາຂາອື່ນ | 41,751,740 | - | - | 41,751,740 | 41,751,740 |
| ໜີ້ສິນທາງການເງິນອື່ນໆ | 488,571 | - | - | 488,571 | 488,571 |
| | **71,879,792** | **15,424,768** | **-** | **56,455,024** | **71,879,792** |

(*) ລວມເງິນແຮທີ່ຄາດວ່າຈະເກີດຂຶ້ນ

## 35. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

**ນະວັນທີ 31 ທັນວາ 2024**

ຫົວໜ່ວຍ: ລ້ານກີບ

| | *ມູນຄ່າຕາມ ບັນຊີ* | *ມູນຄ່າຍຸຕິທຳ* | | | |
|---|---|---|---|---|---|
| | | *ລະດັບ 1* | *ລະດັບ 2* | *ລະດັບ 3* | *ລວມ* |
| **ຊັບສິນທາງການເງິນ** | | | | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ (*) | 3,186,048 | 3,186,048 | - | - | 3,186,048 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ (*) | 59,069,335 | 2,471,206 | - | 56,598,129 | 59,069,335 |
| ເງິນກູ້ໃຫ້ແກ່ລູກຄ້າ (*) | 5,394,196 | - | - | 5,394,196 | 5,394,196 |
| ການລົງທຶນທາງການເງິນ - ຖືຄອງຈົນຄົບກຳນົດ (*) | 6,767,154 | - | - | 6,767,154 | 6,767,154 |
| | **74,416,733** | **5,657,254** | **-** | **68,759,479** | **74,416,733** |
| **ໜີ້ສິນທາງການເງິນ** | | | | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | 13,581,126 | 998,245 | - | 12,582,881 | 13,581,126 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 21,537,649 | 12,093,681 | - | 9,443,968 | 21,537,649 |
| ເງິນກູ້ຢືມຈາກແຫຼ່ງອື່ນ, ສຳນັກງານໃຫຍ່ ແລະ ສາຂາອື່ນ | 34,590,850 | - | - | 34,590,850 | 34,590,850 |
| ໜີ້ສິນທາງການເງິນອື່ນໆ | 384,007 | - | - | 384,007 | 384,007 |
| | **70,093,632** | **13,091,926** | **-** | **57,001,706** | **70,093,632** |

(*) ລວມເງິນແຮທີ່ຄາດວ່າຈະເກີດຂຶ້ນ

## 36. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວນະມື້ລາຍງານ

| | *31/12/2025 ກີບ* | *31/12/2024 ກີບ* |
|---|---|---|
| ໂດລາ ສະຫະລັດ | 21,449.00 | 21,851.00 |
| ໄທ ບາດ | 674.37 | 625.48 |
| ຢວນ | 3,055.00 | 2,904.00 |
| ເອີໂຣ | 25,105.00 | 22,516.00 |
| ໂດລາ ຮົງກົງ | 2,752.00 | 2,790.00 |
| ເຢນ | 137.00 | 138.47 |

## 37. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງການລາຍງານ

ບໍ່ມີບັນຫາ ຫຼື ສະຖານະການທີ່ເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2025 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ Xie Junjun
ຫົວໜ້າພະແນກການເງິນ ແລະ ບັນຊີ

ກວດຄືນໂດຍ:

ທ່ານ Shen Xueqin
ຜູ້ຈັດການສາຂາ

SHEN XUE QIN
沈学勤

ນະຄອນຫຼວງວຽງຈັນ, ສປປ ລາວ

27 ເມສາ 2026